# ແຜນການຂອງພຣະເຈົ້າ

ສໍາລັບ

# ສາວົກຂອງພຣະອົງ



ໂດຍປຶ້ມຄູ່ມື "<u>ແຜນການຂອງພຣະເຈົ້າສໍາລັບສາວົກຂອງພຣະອົງ</u>" ທ່ານຈະໄດ້ຮຽນຮູ້ ແລະ ປະຕິບັດຕາມແບບຢ່າງໃນພຣະຄໍາພີທີ່ພົບໃນຄຣິສຕະຈັກສະໄຫມກ່ອນ ແລະ ຖືກບັນທຶກໄວ້ໃນ ພຣະຄໍາກິດຈະການ ເຊິ່ງສິ່ງຜົນໃຫ້ມີຫລາຍຄຣິສຕະຈັກເກີດຂຶ້ນ ແລະ ຂະຫຍາຍເປັນຈໍານວນຫລວງຫລາຍທີ່ສຸດ ເທົ່າທີ່ມີການບັນທຶກໄວ້.

ດັດແກ້ຄັ້ງທີສາມ

# ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ



# ແຜນການຂອງພຣະເຈົ້າ
# ສຳລັບ
# ສາວົກຂອງພຣະອົງ

---

ປື້ມຄູ່ມືສຳລັບ
ການສ້າງຄວາມຫມັ້ນຄົງແກ່ຜູ້ທີ່ເຊື່ອໃຫມ່ ແລະ ເສີມສ້າງຜູ້ທີ່ເຊື່ອທຸກຄົນ
ໃຫ້ເຕີບໃຫຍ່ໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ

ການໃຊ້ຫລັກການຂອງພຣະຄຳພີ
ທີ່ຢູ່ເຫນືອວັດທະນະທຳ ແລະ ເວລາ

Tim W. Bunn

**Third Edition, 2020**

Copyright © 2020 by New Foundations International

# ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ

ຂໍ້ພຣະຄຳພີທັງຫມົດທີ່ລະບຸໃນປື້ມຄູ່ມືເຫລັ້ມນີ້ແມ່ນນຳມາຈາກປື້ມພຣະຄຳພີສັກສິດ

The Holy Bible in the Revised Lao Version

Copyright 2013 United Bible Societies

**New Foundation International**

**http://www.newfoundationinternational.org/**

## ຫາກທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:

nfi@newfoundationsinternational.org

# ການສະແດງຄວາມຮູ້ບຸນຄຸນ

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງທ່ານ Sherman Driver ຜູ້ທີ່ເປັນທັງອ້າຍ ແລະ ເພື່ອນຮ່ວມງານໃນການຮັບໃຊ້ພຣະເຈົ້າ. ທ່ານໄດ້ທຸ້ມເທຢ່າງຫນັກ ໃນການດັດແກ້ ແລະ ຮຽບຮຽງປຶ້ມຄູ່ມື "ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ" ເຖິງແມ່ນວ່າຈະພົບກັບບັນຫາຫລາຍຢ່າງ ພ້ອມທັງຄວາມລຳບາກໃນຈິດໃຈຍ້ອນບໍ່ສາມາດອອກໄປຮັບໃຊ້ພຣະເຈົ້າໃນບັນດາປະເທດຕ່າງໆ. ຂ້າພະເຈົ້າຍາກຂອບໃຈທ່ານ Sherman, Randy Matthews, Terry Manahan, ແລະ Jonathan Cook ສຳລັບສະຕິປັນຍາອັນດີເລີດ ແລະ ຄວາມເຊື່ອໃຈອັນເລິກເຊິ່ງໃນຖ້ອຍຄຳຂອງພຣະເຈົ້າ ເພື່ອພວກທ່ານຈະໄດ້ນຳມາສ້າງເປັນເຄື່ອງມືໃນການຮັບໃຊ້ພຣະເຈົ້າສຳລັບ ຄຣິສຕະຈັກຕ່າງໆໃນທົ່ວໂລກ. ຂ້າພະເຈົ້າເຊື່ອເຫລືອເກີນວ່າ ຄຳແນະນຳທັງຫລາຍນີ້ ບໍ່ພຽງເພື່ອສ້າງ "ວິທີການຕາມຫລັກພຣະຄຳພີ" ກ່ຽວກັບການເປັນຜູ້ນຳ, ແຕ່ມັນເປັນ "ເຄື່ອງມືທີ່ມີປະສິດທິພາບ" ເພື່ອຊ່ວຍບັນດາ "ຜູ້ທີ່ເຊື່ອໃຫ້ຕັ້ງຫມັ້ນຄົງຢູ່ໃນຄວາມເຊື່ອ ເທິງຮາກຖານອັນຫມັ້ນຄົງ ແລະ ຖາວອນ ຢ່າໄດ້ຫນີຈາກຄວາມຫວັງທີ່ພວກເຈົ້າມີເມື່ອໄດ້ຍິນຂ່າວປະເສີດແລ້ວນັ້ນ ແມ່ນຂ່າວປະເສີດນັ້ນແຫລະ ທີ່ໄດ້ແຜ່ຂະຫຍາຍໄປສູ່ມວນມະນຸດທົ່ວໃຕ້ຟ້າ ຊຶ່ງເຮົາຄືໂປໂລ( Sherman, Randy , Terry , Jonathan, Tim) ໄດ້ກາຍເປັນຜູ້ຮັບໃຊ້ໃນການປະກາດຂ່າວປະເສີດນັ້ນ" (ໂກໂລຊາຍ 1: 23). ທ້າຍທີ່ສຸດນີ້, ຂ້າພະເຈົ້າຂໍຂອບໃຈມາຍັງພັນລະຍາຂອງພວກເຮົາທີ່ຍອມເສຍສະຫລະ ເພື່ອໃຫ້ສາມີຂອງພວກນາງຖວາຍເວລາ ແລະ ກຳລັງໃນການນຳເອົາຂ່າວປະເສີດແຜ່ອອກໄປ ( ມັດທາຍ 28:18-20)

# ຄຳນຳ

ຫລັງຈາກທີ່ພຣະເຢຊູຊົງສິ້ນພຣະຊົນ ແລະ ຊົງຄືນພຣະຊົນມາຈາກຄວາມຕາຍ ,ພຣະອົງຊົງມອບຄຳສັ່ງໃຫ້ແກ່ຜູ້ທີ່ເຊື່ອ ແລະ ຜູ້ທີ່ຕິດຕາມພຣະອົງ ຫລື ບັນດາສາວົກຂອງພຣະອົງ. ເຊິ່ງຄຳສັ່ງນັ້ນ ເອີ້ນວ່າ **ພຣະມະຫາບັນຊາຂອງອົງພຣະເຢຊູຄຣິດ** : "ເຫດສັນນັ້ນພວກເຈົ້າຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະ ພຣະວິນຍານບໍຣິສຸດເຈົ້າ. ສັ່ງສອນພວກເຂົາໃຫ້ຖືຮັກສາທຸກໆສິ່ງທີ່ເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ ເຮົາຢູ່ກັບເຈົ້າທັງຫລາຍທຸກໆວັນຈົນສິ້ນໂລກນີ້" (ມັດທາຍ 28: 19-20). ຄົນທີ່ກາຍມາເປັນຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດ ຕ້ອງຮັກສາຖ້ອຍຄຳ ແລະ ເຮັດພາລະກິດການຮັບໃຊ້ພຣະອົງ. ອັກຄະສາວົກໂປໂລໄດ້ປະຕິບັດຕາມຄຳສັ່ງ ແລະ ໄດ້ຖືກໃຊ້ອອກໄປປະກາດຫາຄົນທຸກຊາດເພື່ອສ້າງພວກເຂົາໃຫ້ເປັນລູກສິດ. ພວກເຮົາຈົ່ງສັງເກດເບິ່ງວິທີການທີ່ທ່ານໂປໂລນຳມາປະຕິບັດຕາມຄຳສັ່ງຂອງພຣະອົງນັ້ນ. ໂປໂລໄດ້**ອອກໄປ**ປະກາດຂ່າວປະເສີດ ໂດຍມີຄຣິສຕະຈັກອັນຕີໂອເຂຍເປັນຜູ້ສົ່ງອອກໄປ, ໂດຍການຊົງນຳຂອງພຣະວິນຍານບໍຣິສຸດ ( ກິດຈະການ 13:1-3) ໂປໂລໄດ້ **ສ້າງ** ສາວົກດ້ວຍ**ການປະກາດຂ່າວປະເສີດ** ( ກິດຈະການ 14:6-7) ແລະຜູ້ທີ່ເຊື່ອກໍໄດ້**ຮັບບັບຕິສະມາ** ( ກິດຈະການ 16:31-34). ໂປໂລໄດ້ສັ່ງສອນ ແລະ ສ້າງຜູ້ທີ່ເຊື່ອໃຫ້ຕັ້ງຫມັ້ນຄົງຢູ່ໂດຍການກັບຄືນໄປຄຣິສຕະຈັກຕ່າງໆທີ່ທ່ານເຄີຍປະກາດຂ່າວປະເສີດ ເພື່ອຫນູນໃຈລູກສິດທັງຫລາຍທີ່ຕ້ອນຮັບຂ່າວປະເສີດ ແລະ ຕິດຕາມພຣະເຢຊູ ໃຫ້ເຂັ້ມແຂງຂຶ້ນໃນຄວາມເຊື່ອ ( ກິດຈະການ 14:21-22)

ໃນປຶ້ມຄູ່ມື "ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ" ເຫລັ້ມນີ້, ພວກເຮົາໄດ້ພະຍາຍາມປະຕິບັດຕາມແບບຢ່າງໃນພຣະຄຳພີ ແລະ ຕົ້ນແບບທີ່ພົບໃນຄຣິສຕະຈັກໃນສະໄຫມກ່ອນ ເຊິ່ງບັນທຶກໄວ້ໃນພຣະຄຳກິດຈະການ ກ່າວໄວ້ວ່າມີຄຣິສຕະຈັກຫລາຍແຫ່ງເກີດຂຶ້ນ ແລະ ຂະຫຍາຍໄປທົ່ວທຸກບ່ອນເທົ່າທີ່ເຄີຍຖືກບັນທຶກໄວ້. ການຂະຫຍາຍຂອງ ຄຣິສຕະຈັກແມ່ນເລີ່ມຕົ້ນຈາກ ກຸງເຢຣູຊາເລັມ ໄປເຖິງກຸງໂຣມ ພາຍໃນໄລຍະເວລາພຽງ 25 ປີ ເຮັດໃຫ້ອັກຄະສາວົກໂປໂລສຳເລັດໃນການເດີນທາງອອກໄປປະກາດຂ່າວປະເສີດພາຍໃນເວລາ 10 ປີ. ພວກເຮົາອາດສັງເກດເຫັນອີກວ່າ ຄົນທີ່ເຊື່ອໃນສະໄຫມກ່ອນນັ້ນເປັນຜູ້ທີ່ຂວ້ຳໂລກມະນຸດຢ່າງແທ້ຈິງ. ( ກິດຈະການ 17:6) ແລະມີຫລາຍຄົນຍອມສະຫລະຊີວິດຂອງຕົນເອງເພື່ອຂ່າວປະເສີດ.

ສຳລັບຫລັກສູດການຝຶກອົບຮົມໃນຫົວຂໍ້ "ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ"ເຫລັ້ມນີ້ ແມ່ນອອກແບບມາເພື່ອຊ່ວຍທ່ານໃນການຄົ້ນຫາຂໍ້ພຣະຄຳພີ ສຳຫລັບອ່ານແລະສຶກສາເບິ່ງຄວາມຫມາຍຂອງການເປັນລູກສິດແທ້ຂອງພຣະເຢຊູ. ເມື່ອທ່ານກາຍເປັນຜູ້ໃຫຍ່ຝ່າຍຈິດວິນຍານແລ້ວ, ທ່ານອາດຕ້ອງການຕິດຕາມພຣະຄຣິດແລະກ້າວຂຶ້ນໄປເປັນຜູ້ນຳ.ຫາກທ່ານມີພາລະໃຈ ແລະ
ມີຄວາມປາດຖະຫນາໃນການຮຽນຮູ້ເລື່ອງການເປັນຜູ້ນຳ,ທ່ານສາມາດສືບຕໍ່ສຶກສາປຶ້ມຄູ່ມື ໃນຫົວຂໍ້
"ແຜນການຂອງພຣະເຈົ້າສຳລັບຄຣິສະຕະຈັກ".ທ່ານສາມາດເຂົ້າໄປທີ່ WWW.newfoundationinternational.org/training-resources

ຫລືEmail nfi@newfoundationsinternational.org ເພື່ອດາວໂຫລດຂໍ້ມູນ. ມາຮອດຕອນນີ້ ພວກເຮົາຈຶ່ງມາເລີ່ມຕົ້ນປະຕິບັດໃນການເປັນຜູ້ທີ່ຕັ້ງຫມັ້ນຄົງຢູ່ໃນຄວາມເຊື່ອ ແລະ ເປັນສາວົກທີ່ເຕີບໃຫຍ່ຝ່າຍຈິດວິນຍານ ຫລືເປັນຜູ້ທີ່ຕິດຕາມພຣະເຢຊູຄຣິດ.

# ຄຳແນະນຳກ່ອນການນຳໃຊ້ປຶ້ມຄູ່ມື

ພວກເຮົາຂໍຂອບພຣະຄຸນພຣະເຈົ້າທີ່ຊົງນຳພາພວກທ່ານໃນການສຶກສາປຶ້ມຄູ່ມື "ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ". ຂ້າງລຸ່ມນີ້ແມ່ນຄຳແນະນຳບາງສ່ວນທີ່ພວກເຮົາຢາກໃຫ້ພວກທ່ານປະຕິບັດຕາມເວລາທີ່ທ່ານສຶກສາຄູ່ມືເຫຼັ້ມນີ້ ຫລື ການຮຽນພຣະຄຳສ່ວນຕົວ ແລະ ສຶກສາກັບຄູສອນຖ້າເປັນໄປໄດ້. ຫລັງຈາກທ່ານສຶກສາຄູ່ມືນີ້ສຳເລັດແລ້ວ, ພວກເຮົາແນະນຳທ່ານໃຫ້ທ່ານຫາເວລາພົບກັບບຸກຄົນທີ່ແນະນຳປຶ້ມຄູ່ມືເຫຼັ້ມນີ້ໃຫ້ທ່ານ ເພື່ອທ່ານຈະໄດ້ນຳເອົາຫລັກຄຳສອນນີ້ໄປປະຕິບັດສ່ວນຕົວທີ່ເລິກເຊິ່ງຍິ່ງຂຶ້ນ. ຖ້າທ່ານໃດບໍ່ສະດວກໃນການປະຕິບັດຕາມຄຳແນະນຳນີ້ ຫລື ມີຄຳຖາມ ແລະ ຕ້ອງການ ການຕິດຕາມ ທ່ານສາມາດຕິດຕໍ່ພວກເຮົາໄດ້ທີ່ nfi@newfoundationsinternational.org.



ອ່ານ ຂຽນ

ເມື່ອທ່ານອ່ານຂໍ້ພຣະຄຳ ແລະ ຕອບຄຳຖາມສຳເລັດແລ້ວ, ໃຫ້ຈົດວັນທີ ເດືອນ ປີ ໃສ່ບ່ອນວ່າງດ້ານຂ້າງຫນ້າເຈ້ຍ ຫນ້າ ຄຳນຳ. (**ຫມາຍເຫດ**: ເບິ່ງບົດຮຽນທີ 8 ຫົວບົດ: **ວິທີການສຶກສາພຣະຄຳຂອງພຣະເຈົ້າ**, ຫນ້າທີ 26-28). ຫາກທ່ານບໍ່ມີເພື່ອນຮ່ວມສຶກສາພຣະຄຳພີ ທ່ານສາມາດຕື່ມໃສ່ບ່ອນວ່າງເປົ່າໃນ **ການສົນທະນາ** ພາຍຫລັງ.

# ວິທີການສຳລັບຝຶກອົບຮົມຜູ້ຮຽນຮູ້ຜ່ານການເວົ້າ ແລະ ການເບິ່ງ

ມີການຄາດຄະເນໄວ້ວ່າ ໃນທົ່ວໂລກຂອງເຮົານີ້ ມີຜູ້ຮຽນຮູ້ຜ່ານການເວົ້າ ແລະການເບິ່ງເຫັນທາງສາຍຕາ ຫລື ເວົ້າອີກຢ່າງຫນຶ່ງວ່າ ເປັນຄົນກືກຫນັງສື ປະມານ 5.7ຕື້ຄົນ. ເຊິ່ງກຸ່ມຄົນເຫລົ່ານີ້ ມີວັດທະນະທຳໃນການຮຽນຮູ້ຜ່ານການສົນທະນາ, ການບັນລະຍາຍ, ດົນຕຣີ, ບົດເພງ, ແລະ ຮູບພາບ ບໍ່ແມ່ນຜ່ານຕົວຫນັງສື ຫລື ປຶ້ມ. ດັ່ງນັ້ນ, ຜູ້ທີ່ຮຽນຮູ້ຜ່ານການເວົ້າອາດມີບັນຫາເພື່ອເຂົ້າໃຈໃນຕົວຫນັງສື ແລະ ສ່ວນຫລາຍແມ່ນຕ້ອງການຮຽນຮູ້ຜ່ານການຟັງ ແລະ ການເບິ່ງ. ແຕ່ຖ້າສັງເກດໃຫ້ດີ, ຜູ້ຮຽນຮູ້ຜ່ານການເວົ້າ ແລະ ການເບິ່ງເຫັນທາງສາຍຕາຈະມີຄວາມສາມາດຈື່ຈຳໄດ້ເຖິງ 75% ຂອງສິ່ງທີ່ພວກເຂົາໄດ້ຍິນ,ໄດ້ເວົ້າ ແລະ ໄດ້ເຫັນ. ໃນໂລກຂອງເຮົາ ປະຈຸບັນນີ້ ກຸ່ມຄົນທີ່ບໍ່ສາມາດເຂົ້າເຖິງໄດ້ ແມ່ນກຸ່ມຄົນທີ່ຮຽນຮູ້ຜ່ານການເວົ້າ ແລະການເບິ່ງເຫັນທາງສາຍຕາ.

ສະນັ້ນ, ໃນການສຶກສາຂໍ້ມູນຕ່າງໆ ຈຶ່ງບໍ່ຄວນເນັ້ນຫນັກໃສ່ແຕ່ການອ່ານເທົ່ານັ້ນ ແຕ່ຈະຕ້ອງມີການສົນທະນາ, ການຕອບຄຳຖາມ, ແລະ ອຸປະກອນ ພາບປະກອບ ຮ່ວມດ້ວຍ. ຕ້ອງໃຫ້ເວລາພໍສົມຄວນໃນການສົນທະນາ ທັງຕົວຕໍ່ຕົວ ແລະ ແບບກຸ່ມ. ຜູ້ທີ່ຮຽນຮູ້ຜ່ານການເວົ້າ ຈະມີສ່ວນຮ່ວມເມື່ອເຂົາໄດ້ເວົ້າເຖິງຫົວຂໍ້ໃດຫນຶ່ງກັບຄົນອື່ນ. ອີກປະການຫນຶ່ງ, ບໍ່ຄວນນຳໃຊ້ພຽງແຕ່ ອຸປະກອນ ສື່ນລະປະຮູບພາບ ເພື່ອເປັນການອະທິບາຍເນື້ອໃນຂອງເລື່ອງ ຫລື ບໍ່ໃຫ້ຕີລາຄາວ່າ ອຸປະກອນປະກອບການສອນເທົ່ານັ້ນ ທີ່ມີປະໂຫຍດສຳລັບພວກເຂົາ. ແນ່ນອນວ່າ ພວກ ເຂົາຕ້ອງການຄວາມຊ່ວຍເຫລືອເພີ່ມຕື່ມເພື່ອໃຫ້ເຂົ້າໃຈໃນສື່ນລະປະພາບນັ້ນ. ນີ້ຄືຮູບແບບພື້ນຖານທີ່ທ່ານສາມາດນຳໄປໃຊ້ໃນການຊ່ວຍໃຫ້ຜູ້ຮຽນຮູ້ຜ່ານການເວົ້ານັ້ນມີຄ

ວາມຫມັ້ນຄົງໃນຖ້ອຍຄຳຂອງພຣະເຈົ້າ.ຮູບແບບເຫລົ່ານີ້ແມ່ນໄດ້ມາຈາກຕົວຢ່າງຂອງທ່ານຟີລິບ ແລະ ຂ້າຣາຊການເອທິໂອເປຍ ຈາກພຣະຄຳ ກິດຈະການ 8:26-38. ຫລັງຈາກທ່ານໄດ້ອະທິຖານຂໍການຊົງນຳພາຈາກພຣະວິນຍານບໍຣິສຸດເພື່ອສອນທ່ານ, ທ່ານສາມາດບອກເລົ່າເລື່ອງນີ້ໃຫ້ຜູ້ທີ່ຮຽນຮູ້ຜ່ານການເວົ້າແລະການຟັງ ໄດ້ຮຽນຮູ້. ຫລັງຈາກນັ້ນກໍໃຫ້ປະຕິບັດຕາມຂັ້ນຕອນຕ່າງໆຢູ່ຫນ້າຖັດໄປນີ້. (**ຫມາຍເຫດ: ເບິ່ງຫນ້າທີ 7 ແລະ ພາບປະກອບເພື່ອຊ່ວຍຜູ້ຮຽນຮູ້ຜ່ານການເວົ້າແລະການເບິ່ງ**).

1. ອ່ານພຣະຄຳຂອງພຣະເຈົ້າຮ່ວມກັນ ຈາກນັ້ນ ໃຫ້ແຕ່ລະຄົນແບ່ງປັນ ແລະ ກ່າວໃນສິ່ງທີ່ໄດ້ອ່ານ ແລະ **<u>ການສຶກສາພຣະຄຳພີ</u>** ພ້ອມກັນນັ້ນ ໃຫ້ນຳໃຊ້ອຸປະກອນປະກອບພາບເພື່ອສະຫນັບສະຫນູນເລື່ອງທີ່ທ່ານອ່ານ ແລະ ສິ່ງທີ່ພວກເຂົາສັງເກດເຫັນໄດ້. ( ອ່ານພຣະຄຳ ກິດຈະການ 8:28).
2. ໃຫ້ຜູ້ທີ່ຮຽນຮູ້ຜ່ານການເວົ້ານັ້ນ **<u>ໄຕ່ຕອງ</u>** ຫລື **<u>ຄິດ</u>** ກ່ຽວກັບຂໍ້ພຣະຄຳ ຈາກນັ້ນ ໃຫ້ອະທິບາຍສິ່ງທີ່ເຂົາສັງເກດເຫັນຈາກຖ້ອຍຄຳຂອງພຣະເຈົ້າ ແລະ ອຸປະກອນປະກອບການສອນນັ້ນ. ( ອ່ານພຣະຄຳ ກິດຈະການ 8:30)
3. **<u>ສົນທະນາ</u>**ກັນໂດຍການຕັ້ງຄຳຖາມ ແລະ ຕອບຄຳຖາມ ວ່າພຣະເຈົ້າຊົງກ່າວຫຍັງກັບທ່ານໂດຍຜ່ານຂໍ້ ພຣະຄຳ ແລະ ອຸປະກອນປະກອບການສອນນັ້ນສື່ຄວາມຫມາຍຫຍັງກັບທ່ານ. ມີຫລັກການສຳຄັນອັນໃດແນ່ ແລະ ຫລັກການນັ້ນ ມີຄວາມກ່ຽວຂ້ອງກັບທ່ານແນວໃດທຸກວັນນີ້?. (ອ່ານ ກິດຈະການ 8:31-35).
4. ມາຮອດຕອນນີ້ ທ່ານຈະເຮັດແນວໃດ? ທ່ານຈະເລີ່ມເອົາບົດຮຽນນັ້ນ **<u>ນຳມາປະຕິບັດ</u>** ໃນຊີວິດຂອງທ່ານແນວໃດ ແລະ ເວລາໃດ? ( ອ່ານ ກິດຈະການ 8:36-38).

ພວກເຮົາຮ່ວມໃຈກັນພາວັນນາອະທິຖານເພື່ອພວກທ່ານ ເພື່ອທ່ານຈະໄດ້ໃຊ້ໂອກາດໃນຍຸກນີ້ ໃນການສ້າງຄວາມ




ເຂັ້ມແຂງ ແລະ ຄວາມຫມັ້ນຄົງດ້ານຄວາມເຊື່ອ ແລະ ໃນອົງພຣະເຢຊູຄຣິດ ແລະເພື່ອໃຫ້ທ່ານໄດ້ເລີ່ມຕົ້ນຊີວິດແຫ່ງການເຕີບໂຕຢ່າງສະຫມໍ່າສະເຫມີ ສົມດັ່ງທີ່ເຮົານັ້ນເປັນສາວົກຂອງພຣະຜູ້ໄຖ່ໃຫ້ພົ້ນ.

# ສາລະບານ


ແຜນການຂອງພຣະເຈົ້າ ສຳລັບສາວົກຂອງພຣະອົງ - ພາກທີ 1 ... 9

I. ສິດອຳນາດ ແລະ ຄວາມພຽງພໍຂອງສາວົກ ... 10

______ ບົດທີ1- ຣິດອຳນາດ ແລະ ຄວາມພຽງພໍຂອງພຣະຄຳພີ ... 10

______ ບົດທີ2 - ຣິດອຳນາດ ແລະ ຄວາມພຽງພໍຂອງພຣະວິນຍານ ... 14

II. ການເຊື່ອຟັງ, ການເປັນສ່ວນຫນຶ່ງຂອງກັນແລະກັນ, ແລະການລະນຶກຄຶດເຖິງຂອງສາວົກ ... 17

______ ບົດທີ3 - ການຮັບບັບຕິສະມາດ້ວຍນ້ຳ ... 17

______ ບົດທີ4 - ການເປັນສ່ວນຫນຶ່ງຂອງກັນແລະກັນ ... 19

______ ບົດທີ5 - ສີນມະຫາສະຫນິດຂອງພຣະເຢຊູ ... 21

______ ບົດທີ5ກ - ການພາວັນນາອະທິຖານ ... 23

III. ສາວົກຕັ້ງຫມັ້ນຄົງໃນການສຶກສາພຣະຄຳຂອງພຣະເຈົ້າ ... 26

______ ບົດທີ6 - ຄຳແນະນຳໃນການສຶກສາພຣະຄຳຂອງພຣະເຈົ້າ ... 26

______ ບົດທີ7 - ບົດຝຶກຫັດ ການສຶກສາພຣະຄຳຂອງພຣະເຈົ້າ ... 28

ແຜນການຂອງພຣະເຈົ້າ ສຳລັບສາວົກຂອງພຣະອົງ - ພາກທີ 2 ... 29

IV. ສາວົກຕັ້ງຫມັ້ນຄົງໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ... 33

______ ບົດທີ8 - ສາວົກຕັ້ງຫມັ້ນຄົງໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ... 33

V. ສາວົກຕັ້ງຫມັ້ນຄົງໃນແຜນການອັນຖາວອນຂອງພຣະເຈົ້າ ... 39

______ ບົດທີ9 - ສາວົກຕັ້ງຫມັ້ນຄົງໃນແຜນການອັນຖາວອນຂອງພຣະເຈົ້າ ... 39

VI. ສາວົກຕັ້ງຫມັ້ນຄົງໃນຄອບຄົວຂອງພຣະເຈົ້າ ຫລື ຄຣິສຕະຈັກຂອງພຣະເຈົ້າ ... 44

______ ບົດທີ10 - ສາວົກຕັ້ງຫມັ້ນຄົງໃນຄອບຄົວຂອງພຣະເຈົ້າ ຫລື ຄຣິສຕະຈັກຂອງພຣະເຈົ້າ ... 44

VII. ສາວົກຕັ້ງຫມັ້ນຄົງຢູ່ໃນພຣະຄຣິດ ແລະ ດຳເນີນຊີວິດກັບພຣະຄຣິດ ... 49

______ ບົດທີ11 - ດຳເນີນຊີວິດໃນພຣະຄຣິດ ... 49

______ ບົດທີ12 - ດຳເນີນຊີວິດກັບພຣະຄຣິດ ... 52

______ ບົດທີ13 - ການເຝົ້າດ່ຽວກັບພຣະອົງທຸກວັນ ... 55

______ ບົດທີ14 - ຄຳແນະນຳສຳລັບການພາວັນນາອະທິຖານ ແລະ ການນະມັດສະການ ... 56

______ 31ວັນ ແຫ່ງການເຂົ້າພົບພຣະເຢຊູຄຣິດ ... 65

______ ຕາຕະລາງການອ່ານພຣະຄຳພີ ... 66

VIII. ສາວົກຕັ້ງຫມັ້ນຄົງໃນການເປັນຜູ້ນຳ ... 69

ຄຳພະຍານ ແລະ ການບັນທຶກສ່ວນຕົວ ... 70

# ແຜນການຂອງພຣະເຈົ້າ ສໍາລັບ ສາວົກຂອງພຣະອົງ - ພາກ1

ເປົ້າຫມາຍຂອງຫລັກສູດນີ້ແມ່ນເພື່ອສ້າງຫລັກການ 4ຢ່າງ ທີ່ຢູ່ເຫນືອທໍາມະຊາດ ແລະ ເຫນືອການເວລາ. (ຫລັກການໃນພຣະຄໍາພີທີ່ຢູ່ເຫນືອວັດທະນະທໍາ ແລະ ເວລາ) ເຊິ່ງເປັນຫລັກການທີ່ບັນດາຄຣິສຕະຈັກໃນສະໄຫມກ່ອນນໍາໃຊ້ ເພື່ອສ້າງສາວົກໃຫ້ເຂັ້ມແຂງ ແລະ ເປັນຜູ້ປ່ຽນແປງໂລກເພື່ອພຣະຄຣິດ. ( ກຈກ 17:6) ເບິ່ງແຜນທີ່ດ້ານລຸ່ມ ວ່າຕ້ອງໃຊ້ເວລາຈັກປີ ຂ່າວປະເສີດຈຶ່ງຂະຫຍາຍຈາກເຢຣູຊາເລມ ຫາ ກຸງໂຣມ?

ແມ່ນແລ້ວ,ພຽງແຕ່ 25 ປີເທົ່ານັ້ນ. ຂໍຖາມທ່ານວ່າ ໃນປະຈຸບັນນີ້ ທ່ານຮູ້ຈັກຄຣິສຕະຈັກໃດແນ່ໃນໂລກທີ່ສາມາດປະສົບຜົນສໍາເລັດ ແລະ ເກີດຜົນແບບນີ້? ຄິດເບິ່ງວ່າພວກເຂົາບໍ່ໄດ້ມີພາຫະນະໃນການເດີນທາງ ບໍ່ມີວິຊາການ ແລະ ໂຮງຮຽນຝຶກສອນທີ່ທັນສະໄຫມແບບປະຈຸບັນນີ້. ຍາກຫລາຍທີ່ຈະຫາແບບຢ່າງທີ່ດີກວ່າຄຣິສຕະຈັກໃນສະໄຫມກ່ອນ ໃນດ້ານການສ້າງຄວາມຫມັ້ນຄົງ ແລະການເຕີບໃຫຍ່ຂອງຜູ້ທີ່ເຊື່ອ.




ເປົ້າຫມາຍຂອງຄູ່ມືນີ້ແມ່ນເພື່ອເປັນຂົວຕໍ່ລະຫວ່າງຫລັກການທີ່ນໍາໃຊ້ໃນສະໄຫມກ່ອນ ແລະ ປະຈຸບັນ ເພື່ອເຮົາຈະໄດ້ເຫັນຜົນໄດ້ຮັບທີ່ອັດສະຈັນໃນໂລກຂອງເຮົາ. ເຮົາຈະເຫັນຫນຶ່ງໃນຫລັກສູດສໍາຄັນ ຈາກພຣະຄໍາ ກິດຈະການ 14: 21-22 ແລະ ອີກຫລາຍ ການອ້າງອີງ ເພື່ອສ້າງຜູ້ທີ່ເຊື່ອໃຫມ່ໃຫ້ມີ "ຄວາມຫມັ້ນຄົງ" ຫລື "

ຄວາມເຂັ້ມແຂງ". ຄວາມຫມາຍຕາມຕົວອັກສອນຂອງຄຳສັບ "ຫມັ້ນຄົງ" ຫລື "ເຂັ້ມແຂງ" ແມ່ນ ເພື່ອ "ຕິດ" ຫລື "ຍຶດ" ຄວາມເຊື່ອຂອງພວກເຂົາກັບໄມ້ຄ້ຳ. ເປົ້າຫມາຍຂອງພວກເຮົາ ແມ່ນເພື່ອຢູ່ຄຽງຂ້າງ(ຄ້ຳ)ຜູ້ທີ່ເຊື່ອໃຫມ່ ເພື່ອໃຫ້ພວກເຂົາສາມາດຢືນໄດ້ດ້ວຍຕົວເອງ. (ເບິ່ງແຜນພາບດ້ານຊ້າຍ.)




ທ່ານຈະສາມາດຢືນດ້ວຍຕົວຂອງທ່ານເອງໄດ້ແນວໃດແລະ ຍັງສາມາດຊ່ວຍຄົນອື່ນໃຫ້ເຮັດໄດ້ ເຫມືອນກັບທ່ານ. ກ່ອນອື່ນຫມົດ ທ່ານຕ້ອງຮູ້ຈັກພຣະຄຳພີ ເຊິ່ງເປັນແຫລ່ງຂໍ້ມູນຫລັກຂອງຫລັກສູດນີ້ ເຊິ່ງຈະສ້າງຄວາມຫມັ້ນຄົງແລະເຂັ້ມແຂງແກ່ຜູ້ທີ່ເຊື່ອໃຫມ່. ທ່ານຕ້ອງວາງຮາກຖານທີ່ແຂງແກ່ນໃນຣິດ ອຳນາດຂອງພຣະຄຳພີ( ກຈກ 18:24-28) ບົດທີ1, ແລະ ໃນພຣະວິນຍານບໍລິສຸດ (ກິດຈະການ19:1-7) ບົດທີ 2. ການມີພື້ນຖານທີ່ແຂງແກ່ນໃນພຣະຄຳຂອງພຣະເຈົ້າ ແລະ ພຣະວິນຍານບໍລິສຸດ ຈະເຮັດໃຫ້ຜູ້ທີ່ເຊື່ອໃຫມ່ເຕີບໃຫຍ່ ແລະ ເກີດຜົນຢ່າງຫລວງຫລາຍ.

# I. ສິດອຳນາດ ແລະຄວາມພຽງພໍຂອງສາວົກ

## ບົດທີ 1

## ຣິດອຳນາດ ແລະ ຄວາມພຽງພໍ ຂອງພຣະຄຳພີ




**ພຣະຄຳຂອງພຣະເຈົ້າ** ຫລື "**ພຣະຄຳພີພຽງຢ່າງດຽວ**"ແມ່ນພື້ນຖານທີ່ສຳຄັນຂອງທ່ານ. ຖ້າທ່ານສ້າງຊີວິດເທິງສິ່ງອື່ນ, ເມື່ອເຖິງເວລາໃດຫນຶ່ງ ມັນກໍຈະພັງທະລາຍລົງ ບໍ່ໄວກໍ່ຊ້າ. ເຫມືອນດັ່ງທ່ານໄດ້ຍິນຖ້ອຍຄຳຂອງພຣະເຈົ້າຊົງກ່າວໄວ້ ເຊິ່ງທ່ານຈະສັງເກດໄດ້ວ່າ, ຖ້ອຍຄຳອັນມີຊີວິດຂອງພຣະເຈົ້າ ແມ່ນພຽງພໍ ແລະຊົງຈັດກຽມທຸກສິ່ງທີ່ເຮົາຕ້ອງການເພື່ອຮັບໃຊ້ພຣະອົງຕາມການຊົງເອີ້ນ.<u>( **2ຕມທ** 3:16-17)</u>

<u>***ການສຶກສາພຣະຄຳພີ ແລະ ການໄຄ່ຄວນ***</u> : ອ່ານ ແລະ ຕອບຄຳຖາມຕໍ່ໄປນີ້ ແລ້ວຕື່ມຄຳຕອບໃສ່ບ່ອນວ່າງ:

**ຖ້ອຍຄຳຂອງພຣະເຈົ້າແມ່ນຫຍັງ**?

1. ດາວິດ ໄດ້ໃຫ້ຄຳນິຍາມກ່ຽວກັບຖ້ອຍຄຳຂອງພຣະເຈົ້າແນວໃດ ໃນພຣະຄຳ ເພງສັນລະເສີນ 12:6? ______

_______________________________________________

2. ໃນພຣະຄຳເພງສັນລະເສີນ 18:30 ;ພິສູດວ່າ ພຣະຄຳຂອງພຣະອົງເປັນຫຍັງ? ____________________

3. ພຣະເຈົ້າຊົງຍົກສິ່ງໃດຂຶ້ນເຫນືອທຸກສິ່ງ ອີງຕາມພຣະຄຳ ເພງສັນລະເສີນ 138:2? ________________

4. ອີງຕາມພຣະຄຳ ມັດທາຍ 24:35, ສິ່ງໃດຈະບໍ່ລ່ວງພົ້ນໄປຈັກເທື່ອ? ____________________________

5. ພຣະຄຳຂອງພຣະເຈົ້າແມ່ນຫຍັງ ອີງໃສ່ ໂຢຮັນ17:17? ________________________________________

6. ໃນພຣະຄຳ 1 ເທສະໂລນິກ 2:13, ພວກເຂົາໄດ້ຮັບເອົາຖ້ອຍຄຳຂອງພຣະເຈົ້າແນວໃດ? "ບໍ່ເຫມືອນ ____
____________________, ແຕ່ເປັນຈິງ ________________________________________________

7. ອີງໃສ່ 2 ຕີໂມທຽວ 3:16, ມີພຣະຄຳພີຈັກຕອນທີ່ໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ? _________

8. ອີງໃສ່ ເຮັບເລີ 4:12, ພຣະທຳຂອງພຣະເຈົ້າປະກອບດ້ວຍຫຍັງແນ່? ຈົ່ງບອກມາ5ຢ່າງ

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

ງ. ____________________________________________________________

ຈ. ____________________________________________________________

9. ຖ້າຖ້ອຍຄຳ ບໍ່ໄດ້ມາຈາກນ້ຳໃຈຂອງມະນຸດ, ພວກເຂົາໄດ້ກ່າວຄຳທີ່ມາຈາກໃຜ ອີງຕາມ ພຣະຄຳ 2 ເປໂຕ 1:19-21? ________________________________________________
____________________________________________________ ( ເບິ່ງຮູບ ດ້ານເທິງ ຫນ້າ16)

**ພຣະຄຳຂອງພຣະເຈົ້າເຮັດຫຍັງ?**

10. ອ່ານ ເພງສັນລະເສີນ 19: 7-14 ຈາກນັ້ນຈົ່ງຂຽນຂໍ້ດີ 6 ຢ່າງຂອງຖ້ອຍຄຳພຣະເຈົ້າ:

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

ງ. ____________________________________________________________

ຈ. ____________________________________________________________

ສ. ____________________________________________________________

11. ຄົນຫນຸ່ມສາວຮັກສາຊີວິດຕົນເອງໃຫ້ບໍລິສຸດໄດ້ຢ່າງໃດ ອີງຕາມພຣະຄຳ ເພງສັນລະເສີນ 119:9-11?
________________________________________________________________

12. ໃນເພງສັນລະເສີນ 119:105, ຖ້ອຍຄຳຂອງພຣະເຈົ້າເປັນຫຍັງສຳລັບທາງຂອງທ່ານ? ______________
ທາງເດີນຂອງທ່ານ? ________________________________________________

13. ເອຊາຢາ 55:11 ຊົງກ່າວວ່າ: ຖ້ອຍຄຳຂອງພຣະເຈົ້າຈະບໍ່ກັບຄືນ ________________ ຈະ ____________
ຈະເກີດຜົນຈະເລີນຂຶ້ນ. ________________________________________________

14. ອີງໃສ່ພຣະຄຳ ເຢເຣມີຢາ 23:29 ຖ້ອຍຄຳຂອງພຣະເຈົ້າເປັນດັ່ງຫຍັງ? _________ ແລະ _________
ສະນັ້ນ ຖ້ອຍຄຳສາມາດເຮັດຫຍັງ? ______________________________

15. ອີງໃສ່ພຣະຄຳມັດທາຍ 4:4 ຈົ່ງຂຽນຂໍ້ພຣະຄຳພີຕໍ່ໄປນີ້ໃຫ້ສົມບູນຄົບຖ້ວນ: "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານຢ່າງດຽວ, ແຕ່ ______________________________

16. ໃນພຣະຄຳ ລູກາ 4:4, 8,12 ພຣະເຢຊູໃຊ້ຫຍັງ ເພື່ອເອົາຊະນະຊາຕານ? ______________________________
ທ່ານຮູ້ໄດ້ແນວໃດວ່າມານຊາຕານພ່າຍແພ້ແລ້ວ? (4: 13-14) ______________________________

17. ອີງໃສ່ພຣະຄຳ 2 ຕີໂມທຽວ 3:16-17. ປະໂຫຍດ 4 ຢ່າງ ທີ່ທ່ານໄດ້ຮັບຈາກພຣະຄຳພີມີຫຍັງແນ່?

ກ. ______________________________

ຂ. ______________________________

ຄ. ______________________________

ງ. ______________________________

ພຽງແຕ່ຖ້ອຍຄຳຂອງພຣະເຈົ້າເທົ່ານັ້ນສາມາດ ເຮັດໃຫ້ຄົນຂອງພຣະເຈົ້າບັນລຸຜົນສຳເລັດໄດ້ບໍ່? ( 2 ຕີໂມທຽວ 3:17) ______________________________

18. ອີງໃສ່ພຣະຄຳ 2 ເປໂຕ 1:3-4, ຣິດເດດຂອງພຣະເຈົ້າໄດ້ຊົງປະທານໃຫ້ແກ່ເຮົາແນວໃດ? _________

______________________________

ທ່ານສາມາດແບ່ງປັນຣິດອຳນາດຂອງພຣະເຈົ້າວິທີໃດ? ______________________________

______________________________

**ພຣະທຳຂອງພຣະເຈົ້າຊົງເປັນຜູ້ໃດ?**

19. ອີງໃສ່ພຣະຄຳ ໂຢຮັນ1:1, ເມື່ອຕົ້ນເດີມນັ້ນ ມີຫຍັງຢູ່? ________ ແມ່ນໃຜຊົງເປັນພຣະທຳ? _______
ພຣະທຳໄດ້ຊົງບັງເກີດເປັນຫຍັງ?(ຂໍ້14) __________ ເພິ່ນອາໄສຢູ່ໃສ? ______________________

20. ພຣະຄຳພີຊົງເປັນພະຍານໃຫ້ໃຜ ອີງໃສ່ພຣະຄຳ ໂຢຮັນ 5:39? ______________________________

21. ອີງໃສ່ພຣະຄຳ ໂຢຮັນ 6:63; ຖ້ອຍຄຳຂອງພຣະເຢຊູຊົງເປັນຫຍັງ? __________ ແລະ ____________

22. ອີງໃສ່ພຣະຄຳ ໂຢຮັນ 14:6 ແມ່ນໃຜຄືຄວາມຈິງ? ______________________________

**ຈົ່ງເປັນຜູ້ທີ່ປະຕິບັດຕາມພຣະຄຳຂອງພຣະເຈົ້າ**

23. ອີງຕາມພຣະຄຳ ເອຊະຣາ 7:8-10, ຈົ່ງຂຽນ 3 ສິ່ງ ທີ່ເອຊະຣາ ຕັ້ງໃຈເຮັດ:

ກ. ______________________________

ຂ. ______________________________

ຄ. ______________________________

24. ໃນພຣະຄໍາ ມັດທາຍ 7,24-29, ຄົນສະຫລາດ ແລະ ຄົນໂງ່ ໄດ້ຍິນຖ້ອຍຄໍາຂອງພຣະເຈົ້າແລ້ວປຸກເຮືອນຂອງຕົນ. ສິ່ງໃດເຮັດໃຫ້ອີກຄົນຫນຶ່ງສະຫລາດ ແຕ່ອີກຄົນເປັນຄົນໂງ່? ________________

______________________________________________

25. ຈາກພຣະຄໍາ ກິດຈະການ 17:11 ເປັນຫຍັງຊາວຍິວໃນເມືອງນີ້ ຈຶ່ງມີຈິດໃຈສູງສົ່ງ? ຈົ່ງໃຫ້ 2 ເຫດຜົນ.

______________________ ແລະ ______________________

ເປັນຫຍັງພວກເຂົາຈຶ່ງສຶກສາພຣະຄໍາຂອງພຣະເຈົ້າ? ______________________

26. ອີງໃສ່ພຣຄໍາພີ ຢາໂກໂບ 1:22 ພວກເຮົາບໍ່ພຽງແຕ່ຟັງພຣະຄໍາຂອງພຣະເຈົ້າເທົ່ານັ້ນ, ແຕ່ _______ ພຣະທໍານັ້ນຢ່າງແທ້ຈິງ.

**ການສົນທະນາ**:ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນໍາເພີ່ມຕື່ມ ໃຫ້ຂຽນລົງ ______________________

______________________________________________

______________________________________________

______________________________________________

ເມື່ອໄດ້ສຶກສາກ່ຽວກັບພຣະຄໍາຂອງພຣະເຈົ້າແລ້ວ; ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງດ້ານໃດແນ່? ______________________

______________________________________________

______________________________________________

______________________________________________

**ການນໍາມາປະຕິບັດ**: ທ່ານຈະປ່ຽນແປງຊີວິດຂອງຕົນເອງແນວໃດ ແລະ ເມື່ອໃດ? ________________

______________________________________________

______________________________________________

______________________________________________

______________________________________________

# ບົດທີ2

# ຣິດອໍານາດ ແລະ ຄວາມພຽງພໍຂອງພຣະວິນຍານ




ປະຈຸບັນນີ້ ຍັງມີຫລາຍຄົນ ແລະ ຫລາຍຫນ່ວຍງານການຮັບໃຊ້ໃນຄຣິສຕະຈັກ ຍັງປະຕິບັດເຫມືອນແຕ່ກ່ອນວັນເພັນເຕຄໍສະເຕ(ກ່ອນພຣະວິນຍານບໍຣິສຸດເຈົ້າສະເດັດລົງມາ). ໃນພຣະຄໍາກິດຈະການ 19:1-7 ພວກເຂົາບໍ່ເຄີຍໄດ້ຍິນກ່ຽວກັບເລື່ອງພຣະວິນຍານ. ສະນັ້ນ, ຈົ່ງຢາກໃຫ້ທ່ານຫມັ້ນໃຈວ່າ ທ່ານໄດ້ເຂົ້າໃຈໃນບົດບາດ ແລະ ຫນ້າທີ່ຂອງພຣະວິນຍານບໍຣິສຸດຕໍ່ຊີວິດຂອງທ່ານ ແລະ ຄຣິສຕະຈັກ. ມີຫລາຍຄໍາສອນກ່ຽວກັບການກໍາເນີດ, ການສິ້ນພຣະຊົນ,ການຖືກຝັງໄວ້ໃນອຸບໂມງ ແລະການເປັນຄືນມາຂອງພຣະຄຣິດ ແຕ່ເຂົາປະຕິເສດການສະເດັດຂຶ້ນເທິງຟ້າສະຫວັນ ແລະ ການສະເດັດລົງມາຂອງພຣະວິນຍານບໍຣິສຸດ. ຖ້າບັດສະຈາກວັນເພັນເຕຄໍສະເຕ ກໍຈະບໍ່ມີອໍານາດຂອງການຄືນພຣະຊົນ, ບໍ່ມີການປ່ຽນແປງຮ່າງກາຍໃຫມ່, ບໍ່ມີພະຍານສໍາຄັນ ແລະບໍ່ມີການເກີດຜົນ.

***<u>ການສຶກສາພຣະຄໍາພີ ແລະ ການໄຕ່ຄວນ</u>***: ຈົ່ງອ່ານແລະຕອບຄໍາຖາມຕໍ່ໄປນີ້ ແລ້ວຂຽນຄໍາຕອບໃສ່ບ່ອນວ່າງ:

1. ຍ້ອນຫຍັງທ່ານຈຶ່ງຄິດວ່າພຣະວິນຍານຂອງພຣະເຈົ້າໄດ້ປົກຄຸມຢູ່ເທິງຫນ້ານໍ້າ? ໃນພຣະຄໍາພີປະຖົມມະການ1:1-2 ____________________________________________
2. ເປັນຫຍັງຄົນຮັບໃຊ້ຂອງເອລີຊາຈຶ່ງບໍ່ເຫັນວ່າເທິງພູເຂົາເຕັມໄປດ້ວຍຝູງມ້າແລະລົດຮົບເປັນໄຟຢູ່ອ້ອມຂ້າງເຂົາ. ອີງໃສ່ພຣະຄໍາ 2 ກະສັດ6:13-18? (ອ່ານ ເອເຟໂຊ 1:16-19) ____________________

____________________________________________
3. ອົງພຣະຜູ້ເປັນເຈົ້າໄດ້ໃຫ້ຄໍາສັນຍາຫຍັງກັບເອເຊກຽນ ໃນພຣະຄໍາ ເອເຊກຽນ 37:14? ____________

____________________________________________
4. ອີງໃສ່ພຣະຄໍາ ໂຢຮັນ 1:32-33, ທ່ານໂຢຮັນໄດ້ໃຫ້ຄໍາພະຍານແນວໃດ ເມື່ອທ່ານເຫັນພຣະວິນຍານສະເດັດລົງມາຈາກທ້ອງຟ້າ? ____________________________________________
ໂຢຮັນຮັບບັບຕິສະມາດ້ວຍນໍ້າ, ແຕ່ພຣະເຢຊູຮັບບັບຕິສະມາດ້ວຍຫຍັງ? ____________________
5. ນີໂກເດມ ຕ້ອງເປັນຄົນແນວໃດຈຶ່ງສາມາດເຂົ້າໃນແຜ່ນດິນສະຫວັນຂອງພຣະເຈົ້າໄດ້ ອີງໃສ່ພຣະຄໍາ ໂຢຮັນ 3:3-8? ________________ ການບັງເກີດໃຫມ່ຈາກພຣະວິນຍານຫມາຍຄວາມວ່າແນວໃດ? ____________________________________________

6. ຂໍ້ພຣະຄໍາ ໂຢຮັນ 7:37-39 ມີຄວາມຫມາຍວ່າແນວໃດ, "ແມ່ນໍ້າແຫ່ງຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ"? ______
ແມ່ນໍ້າແຫ່ງຊີວິດຈະຫລັ່ງໄຫລອອກມາຈາກພາຍໃນຂອງທ່ານແນວໃດ? ______
ເປັນຫຍັງຈິ່ງຍັງບໍ່ທັນປະທານພຣະວິນຍານໃຫ້? ______

7. ຍ້ອນຫຍັງທ່ານຈິ່ງຄິດວ່າ ພຣະວິນຍານບໍຣິສຸດເຈົ້າ ຖືກເອີ້ນວ່າເປັນ "ພຣະຜູ້ຊ່ວຍ"? ໃນ ພຣະຄໍາ ໂຢຮັນ 14:25-26 ______

8. ອີງໃສ່ພຣະຄໍາ ໂຢຮັນ 16:7-12, ການສະເດັດກັບຄືນສູ່ສະຫວັນຫາພຣະບິດາເຈົ້າຂອງພຣະເຢຊູນັ້ນມີປະໂຫຍດສໍາລັບເຮົາແນວໃດ? ______
ເມື່ອພຣະວິນຍານສະເດັດລົງມາແລ້ວ ຊົງເຮັດສິ່ງໃດແນ່?( 13-14) ______
______

9. ບັນດາສາວົກຈະໄດ້ຮັບສິ່ງໃດເມື່ອພຣະວິນຍານບໍຣິສຸດສະເດັດລົງມາເຫນືອພວກທ່ານ? ອີງໃສ່ພຣະຄໍາ ກິດຈະການ1:8? ______ ພວກເຂົາຈະກາຍເປັນຫຍັງ? ______
ພວກເຂົາຈະເປັນພະຍານຝ່າຍພຣະອົງຢູ່ໃສແນ່? ______

10. ອີງໃສ່ພຣະຄໍາ ກິດຈະການ 2:1-4, ບັນດາພີ່ນ້ອງຜູ້ທີ່ເຊື່ອເຕັມລົ້ນດ້ວຍພຣະວິນຍານບໍຣິສຸດໃນວັນ ໃດ? ______ ຈົ່ງອະທິບາຍເຫດການນີ້ ______
______

11. ອີງຕາມພຣະຄໍາພີ ກິດຈະການ 5:3, ອານາເນຍໄດ້ຕົວະຜູ້ໃດ? ______ພຣະວິນຍານບໍຣິສຸດບໍ່ເປັນພຽງແຕ່ບຸກຄົນ ແຕ່ອີງໃສ່ພຣະຄໍາ ກິດຈະການ5:4, ທ່ານແມ່ນໃຜ? ______

12. ຍ້ອນຫຍັງບັນດາຜູ້ທີ່ເຊື່ອ ຢູ່ໃນພຣະຄໍາກິດຈະການ 19:1-6 ຈິ່ງບໍ່ໄດ້ຮັບພຣະວິນຍານບໍຣິສຸດ? ______
______

13. ຜູ້ທີ່ເຊື່ອໄດ້ຮັບບັບຕິສະມາໂດຍຜູ້ໃດ ອີງຕາມພຣະຄໍາ 1 ໂກລິນໂທ 12:13? ______
ເກີດຂຶ້ນເວລາໃດ( ເບິ່ງຄໍາຖາມທີ 5. ແລະ ໂຢຮັນ 3:3-8?) ______

14. ອີງຕາມພຣະຄໍາ ເອເຟໂຊ 1:13-14, ຜູ້ທີ່ເຊື່ອໄດ້ຖືກປະທັບຕາຫມາຍໄວ້ໂດຍພຣະວິນຍານບໍຣິສຸດເວລາໃດ? ______
ພຣະວິນຍານບໍຣິສຸດເຈົ້າຊົງສັນຍາວ່າແນວໃດ? ______

15. ອີງໃສ່ພຣະຄໍາເອເຟໂຊ 3:20, ຣິດອໍານາດຂອງພຣະວິນຍານຊົງກະທໍາການຢູ່ໃສ? ______
ພຣະອົງສາມາດກະທໍາການຫຍັງແນ່ພາຍໃນຕົວຂອງທ່ານ? ______

16. ໃນພຣະຄໍາ ໂຣມ 7 ໄດ້ໃຊ້ຄໍາວ່າ "ເຮົາ" ແລະ "ພວກເຮົາ" ຈັກຄັ້ງ? ______ ອີງໃສ່ພຣະຄໍາໂຣມ 7:17-24, ຂໍ້ພຣະຄໍານີ້ບອກຫຍັງແກ່ທ່ານ? ("ເຮົາ" ແລະ "ພວກເຮົາ") ______
______

17. ພຣະຄຳ ໂຣມ 8 ໄດ້ກ່າວເຖິງພຣະວິນຍານຈັກຄັ້ງ? ____ .ອີງໃສ່ ຂໍ້ 8:37-39,ຂໍ້ພຣະຄຳນີ້ໄດ້ບອກທ່ານຫຍັງແນ່ກ່ຽວກັບການຊົງສະຖິດຂອງພຣະວິນຍານ ທຽບໃສ່ ຄຳວ່າ "ເຮົາ" ແລະ "ພວກເຮົາ"? ____________________

18. ໃນພຣະຄຳ ຄາລາເຕຍ 3:2-3, ພວກເຂົາຕ້ອນຮັບພຣະວິນຍານບໍຣິສຸດແນວໃດ? ____________
ພວກເຂົາເລີ່ມຕົ້ນແນວໃດ? __________ ພວກເຂົາພະຍາຍາມເຮັດຫຍັງ? ____________
____________________

19. ຈົ່ງອ່ານພຣະຄຳ ຄາລາເຕຍ 5:16-25 ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:
ຖ້າທ່ານເດີນກັບພຣະວິນຍານ, ທ່ານຈະໄດ້ຫຍັງເປັນລາງວັນ? ____________
ຖ້າທ່ານໄດ້ຮັບການຊົງນຳພາຈາກພຣະວິນຍານ, ທ່ານຈະບໍ່ຢູ່ໃຕ້ຫຍັງ? ____________
ກິດຈະການແຫ່ງສັນດານມະນຸດມີຫຍັງແນ່? ____________________
____________________
____________________
ຜົນຂອງພຣະວິນຍານຄືຫຍັງ? ____________________
____________________
ຖ້າພວກເຮົາມີຊີວິດໂດຍພຣະວິນຍານ, ພວກເຮົາຈະດຳເນີນຊີວິດແບບໃດ (5:25)? ____________

20. ໃນພຣະຄຳເອເຟໂຊ 4:30, ບອກຢ່າໃຫ້ພວກເຮົາເຮັດຫຍັງ? ____________
ຈົ່ງອະທິບາຍຄຳວ່າ "ເສຍພຣະໄທ"? ____________________

21. ໃນພຣະຄຳເອເຟໂຊ 5:18 ບອກໃຫ້ທ່ານເຕັມລົ້ນດ້ວຍຫຍັງ? ____________
ໃນຄວາມຄິດຂອງທ່ານ ຄຳວ່າ "ເຕັມລົ້ນ" ມີຄວາມຫມາຍວ່າແນວໃດ? ____________

22. ພຣະເຈົ້າໄດ້ຊົງປະທານພຣະວິນຍານບໍຣິສຸດໃຫ້ແກ່ຜູ້ໃດ ອີງໃສ່ພຣະຄຳ ກິດຈະການ 5:32? ______

23. ອີງຕາມພຣະຄຳ ກິດຈະການ 7:51, ການຂັດຂວາງພຣະວິນຍານບໍຣິສຸດເຈົ້າແມ່ນແນວໃດ? ______
____________________
ພວກທ່ານຂັດຂວາງພຣະວິນຍານແບບໃດ? ____________________

24. ໃນພຣະຄຳ 1ເທສະໂລນິກ 5:19 ບອກເຮົາບໍ່ໃຫ້ເຮັດຫຍັງ? ____________
ທ່ານຄິດວ່າການຫັກຫ້າມພຣະວິນຍານ ຫມາຍຄວາມວ່າແນວໃດ? ____________

25. ພຣະຄຳພີຂອງພຣະເຈົ້າ ເລີ່ມຕົ້ນດ້ວຍ "ພຣະວິນຍານ" ໃນປະຖົມມະການ 1:2 ແລະ ລົງທ້າຍດ້ວຍ "ການເຊື້ອເຊີນ" ໃນພຣະຄຳພະນິມິດ 2:17. ເຊີນມາ ໃຫ້ຜູ້ຫິວນໍ້າ ____________
ແລະຜູ້ໃດມີໃຈປາຖະຫນາ ____________________

**ການສົນທະນາ**:ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ໃຫ້ຂຽນລົງ ____________________
____________________

ເມື່ອໄດ້ສຶກສາກ່ຽວກັບພຣະຄຳຂອງພຣະເຈົ້າແລ້ວ; ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງດ້ານໃດແນ່? ______

**<u>ການນຳມາປະຕິບັດ</u>:** ທ່ານຈະປ່ຽນແປງຊີວິດຂອງຕົນເອງແນວໃດ ແລະ ເມື່ອໃດ? ______

# II. ການເຊື່ອຟັງ, ການເປັນສ່ວນຫນຶ່ງຂອງກັນແລະກັນ ແລະ ການລະນຶກຄິດເຖິງຂອງສາວົກ

## ບົດທີ 3

## ການຮັບບັບຕິສະມາດ້ວຍນ້ຳ (ກິດຈະການ 2:41 ແລະ 10:43-48)



ການຮັບບັບຕິສະມາດ້ວຍນ້ຳແມ່ນເປັນພິທີກຳທີ່ພຣະເຢຊູຄຣິດຕັ້ງຂຶ້ນເພື່ອໃຫ້ບັນດາຜູ້ທີ່ເຊື່ອໄດ້ປະຕິບັດຕາມ.ພິທີດັ່ງກ່າວສະແດງໃຫ້ເຮົາເຫັນພາບຂອງການຮັບບັບຕິສະມາດ້ວຍພຣະວິນຍານໃນເວລາແຫ່ງຄວາມລອດພົ້ນ ແລ້ວຍັງເຮັດໃຫ້ເຮົາລະນຶກຄິດເຖິງຄຳສອນຂອງອົງພຣະເຢຊູຄຣິດເຈົ້າ, ການຮັບບັບຕິສະມາແມ່ນການກະທຳທີ່ສະແດງໃຫ້ເຫັນເຖິງການເຊື່ອຟັງຄຳສັ່ງຂອງພຣະເຢຊູເຈົ້າ.

<u>**ການສຶກສາພຣະຄຳພີ ແລະ ໄຕ່ຕອບ**</u>: ຈົ່ງອ່ານແລະຕອບຄຳຖາມຕໍ່ໄປນີ້ ແລ້ວຂຽນຄຳຕອບໃສ່ບ່ອນວ່າງ:

1. ອີງຕາມພຣະຄຳ ມັດທາຍ 3:13-17, ເປັນຫຍັງພຣະເຢຊູເຈົ້າຈຶ່ງຮັບບັບຕິສະມາຈາກທ່ານໂຢຮັນ?
   ______________________________

   ທ້ອງຟ້າ ມີປາກົດການແນວໃດ ແລະ ພຣະບິດາຊົງກ່າວວ່າຢ່າງໃດ? ______________________________

   ______________________________
2. ອີງຕາມພຣະຄຳ ລູກາ 3:16, ໂຢຮັນຮັບບັບຕິສະມາດ້ວຍນ້ຳ, ທ່ານຜູ້ໃດ ມີຣິດເດດອຳນາດຫລາຍກວ່າໂຢຮັນ? ________ ທ່ານຈະໃຫ້ພວກເຮົາຮັບບັບຕິສະມາດ້ວຍຫຍັງ? _____ ແລະ _____
3. ທ່ານເປໂຕໄດ້ລະນຶກເຖິງຫຍັງ ໃນພຣະຄຳ ກິດຈະການ11:16? ______________________________
4. ເມື່ອພວກເຮົາອອກໄປປະກາດກັບຄົນທຸກຊາດ, 3ສິ່ງທີ່ພຣະອົງຊົງໃຫ້ພວກເຮົາເຮັດ ມີຫຍັງແນ່? ອີງໃສ່ພຣະມະຫາບັນຊາ ໃນພຣະຄຳມັດທາຍ 28:19-20? ______________________________
   ແລະ ______________________________
5. ໃນພຣະຄຳກິດຈະການ2:41, ຫລາຍຄົນທີ່ເຊື່ອຟັງຖ້ອຍຄຳຂອງພຣະເຈົ້າແລ້ວ ໄດ້ເຮັດຫຍັງຕໍ່ໄປ?
   ______________________________
6. ໃນພຣະຄຳ ກິດຈະການ 8:12-13, ຊາຍ ແລະ ຍິງໄດ້ເຮັດຫຍັງ ຫລັງຈາກທີ່ພວກເຂົາຮັບເຊື່ອໃນຖ້ອຍຄຳ? ______________________ ເວລາໃດ? ______________________
7. ໃນພຣະຄຳກິດຈະການ 8:36, ຂ້າຣາຊການໄດ້ເຫັນຫຍັງ? ______________________________
8. ໃນພຣະຄຳກິດຈະການ 8:38-39, ທ່ານຟີລິບ ແລະ ຂ້າຣາຊການໄດ້ລົງໄປໃນໃສ? ________________
   ຫລັງຈາກທີ່ຂ້າຣາຊການໄດ້ຮັບບັບຕິສະມາແລ້ວ, ພວກເຂົາໄດ້ຂຶ້ນມາຈາກໃສ? ______________
   ຂ້າຣາຊການໄດ້ເຮັດຫຍັງ ເວລາພວກເຂົາເດີນທາງກັບເມືອ? ______________________________
9. ໃນພຣະຄຳ ກິດຈະການ 16:30-34,ນັກໂທດ ແລະຄອບຄົວຂອງລາວຮັບບັບຕິສະມາເວລາໃດ? _______
   ______________________________

   ຫລັງຈາກທີ່ນັກໂທດ ແລະຄອບຄົວຂອງລາວໄດ້ຮັບບັບຕິສະມາແລ້ວ ພວກເຂົາໄດ້ເຮັດຫຍັງ? ____
   ______________________________
10. ໃນພຣະຄຳກິດຈະການ 18:8 ເມື່ອຊາວໂກຣິນໂທໄດ້ຍິນພຣະຄຳແລະເຊື່ອແລ້ວ, ພວກເຂົາໄດ້ເຮັດຫຍັງ? ______________________________
11. ການຮັບບັບຕິສະມາດ້ວຍນ້ຳ ເປັນຫມາຍສຳຄັນຫຍັງ ອີງໃສ່ພຣະຄຳ ໂຣມ 6:3-11? ______________
    ______________________________ (ເບິ່ງຮູບດ້ານເທິງຂອງຫນ້າ 17)

12. ອີງໃສ່ພຣະຄຳ ໂກໂລຊາຍ 2:12, ທ່ານໄດ້ຖືກຝັງໄວ້ກັບໃຜ? ______________________
ທ່ານໄດ້ຮັບການບັນດານໃຫ້ຄືນມາຈາກຕາຍກັບໃຜ? __________ ສິ່ງເຫລົ່ານີ້ສຳເລັດຜົນເປັນ
ຈິງໄດ້ ດ້ວຍຣິດອຳນາດຂອງຜູ້ໃດ? ______________________

13. ອີງໃສ່ພຣະຄຳ ເອເຟໂຊ 4:4-5, ມີເທົ່າໃດບັບຕິສະມາ? ______________________

14. ໃນພຣະຄຳ 1 ໂກຣິນໂທ 12:12-13, ເຮົາທັງຫລາຍໄດ້ຮັບບັບຕິສະມາ__________________ຈຶ່ງເຂົ້າ
ເປັນ ______________________ ແລະພຣະວິນຍານບໍຣິສຸດ

15. ບັນດາຜູ້ທີ່ເຊື່ອໄດ້ຮັບຫຍັງກ່ອນທີ່ຈະຮັບບັບຕິສະມາ ອີງໃສ່ພຣະຄຳ ກິດຈະການ 10: 47-48? ________
ພວກເຂົາຮັບບັບຕິມະມາໃນນາມຂອງໃຜ? ______________________

**ການສົນທະນາ:** ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ໃຫ້ຂຽນລົງ ______________________

______________________

ເມື່ອທ່ານໄດ້ສຶກສາກ່ຽວກັບການຮັບບັບຕິສະມາດ້ວຍນ້ຳ;ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງດ້ານໃດແນ່? ______________________

______________________

**ການນຳມາປະຕິບັດ:** ທ່ານຈະປ່ຽນແປງຊີວິດຂອງຕົນເອງແນວໃດ ແລະ ເມື່ອໃດ? ______________________

______________________

# ບົດທີ 4

# ການເປັນສ່ວນຫນຶ່ງຂອງກັນແລະກັນ ( 1 ກຣທ 12:13)





ການເປັນສ່ວນຫນຶ່ງຂອງກັນແລະກັນຂອງພີ່ນ້ອງທີ່ເຊື່ອໃນຍຸກປະຈຸບັນນີ້ ຍັງມີຄວາມສັບສົນກັນລະຫວ່າງຄວາມລອດພົ້ນ ແລະ ການຮັບບັບຕິສະມາຂອງໃຜລາວ . ເມື່ອທ່ານໄດ້ຍິນຈາກຖ້ອຍຄຳຂອງພຣະເຈົ້າ ທ່ານຈະສັງເກດເຫັນວ່າ ການເປັນອະໄວຍະວະດຽວກັນນັ້ນ ແມ່ນຂຶ້ນກັບການຖວາຍຕົວຂອງແຕ່ລະຄົນເພື່ອກັນແລະກັນໃນພຣະກາຍຂອງພຣະຄຣິດ,ກໍຄືຄອບຄົວຂອງພຣະເຈົ້າ ພາຍໃຕ້ການຊົງນຳຂອງພຣະເຍຊູ ແລະ ພຣະວິນຍານບໍຣິສຸດ. ທ່ານຈະບໍ່ເປັນເດັກກຳພ້າອີກຕໍ່ໄປ ເພາະວ່າ ທ່ານໄດ້ຖືກເອີ້ນໃຫ້ມາເປັນບຸດຂອງພຣະເຈົ້າ ແລະ ໄດ້ຮັບບັບຕິສະມາເພື່ອເຂົ້າສ່ວນໃນຄຣິສຕະຈັກ ເຊິ່ງເປັນພຣະກາຍຂອງພຣະຄຣິດ.

**ການສຶກສາພຣະຄຳພີ ແລະ ການໄຕ່ຕອນ** : ຈົ່ງອ່ານແລະຕອບຄຳຖາມຕໍ່ໄປນີ້ ແລ້ວຂຽນຄຳຕອບໃສ່ບ່ອນວ່າງ:

1. ອີງໃສ່ພຣະຄຳ 1 ໂກຣິນໂທ 12:12-14, 27, ແມ່ນໃຜຄືຮ່າງກາຍຂອງພຣະຄຣິດ? ___________________
ຈົ່ງຕື່ມໃສ່ບ່ອນວ່າງ ຂໍ້ 12: ເຖິງວ່າຮ່າງກາຍເປັນ _______ ກໍຍັງມີ _________ ຫລາຍສ່ວນ ພຣະຄຣິດກໍຊົງເປັນສັນນັ້ນ.
ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍຜູ້ໃດເພື່ອເຂົ້າເປັນກາຍອັນດຽວກັບພຣະຄຣິດ (13)? ________
ອີງໃສ່ ຂໍ້ 25-27, ອະໄວຍະວະທຸກພາກສ່ວນຫ່ວງໃຍເຊິ່ງກັນແລະກັນ, ຖ້າອະໄວຍະວະອັນຫນຶ່ງເຈັບ ___ ____________ ຖ້າອະໄວຍະວະອັນອື່ນໄດ້ຮັບກຽດ, ____________________________________
ຝ່າຍເຈົ້າທັງຫລາຍເປັນ ____________________ຂອງ ___________________________________
2. ອີງໃສ່ພຣະຄຳ ຄາລາເຕຍ 5:13, ອະໄວຍະວະໃນຮ່າງກາຍຂອງພຣະຄຣິດຕ້ອງ__________________
3. ອີງໃສ່ພຣະຄຳ ຄາລາເຕຍ 6:2, ອະໄວຍະວະໃນຮ່າງກາຍຂອງພຣະຄຣິດ ຕ້ອງ __________________ ພາລະຫນັກຂອງກັນແລະກັນ.
4. ອີງໃສ່ພຣະຄຳ 1 ເທຊະໂລນິກ 4:18, ອະໄວຍະວະໃນຮ່າງກາຍດຽວກັນຂອງພຣະຄຣິດ ຕ້ອງ _________ ເຊິ່ງກັນແລະກັນ ແລະ ໃນ 5:11,ຮ່າງກາຍດຽວກັນໃນພຣະຄຣິດຕ້ອງ __________________ _ແລະ
_____________________.___________________________

ເຊິ່ງກັນແລະກັນ.
5. ອີງໃສ່ພຣະຄຳໂຣມ 12:5-8, ຮ່າງກາຍດຽວກັນໃນພຣະຄຣິດຕ້ອງ ______ ຂອງກັນແລະກັນ. ມີຂອງປະທານຫຍັງແນ່ ທີ່ພວກເຮົາແຕ່ລະຄົນໄດ້ຮັບ? ____________________________________
6. ອີງໃສ່ພຣະຄຳ ໂຣມ 13:8 , ຮ່າງການດຽວກັນໃນພຣະຄຣິດຕ້ອງ______________ ເຊິ່ງກັນແລະກັນ.
7. ອີງໃສ່ພຣະຄຳໂຣມ 15:5, ຮ່າງກາຍດຽວກັນໃນພຣະຄຣິດ ___________ ຕ້ອງ (ຂໍ້ 7) _____________ ເຊິ່ງກັນແລະກັນເຫມືອນດັ່ງທີ່ພຣະຄຣິດຊົງຕ້ອນຮັບພວກເຈົ້າ, ແລະ (ຂໍ້14) ແລະສາມາດ _______ ກັນແລະກັນ.
8. ອີງໃສ່ພຣະຄຳ ເອເຟໂຊ 4:2, ຮ່າງກາຍດຽວກັນໃນພຣະຄຣິດ ຕ້ອງ ______________ ຕໍ່ກັນແລະກັນດ້ວຍຄວາມຮັກ.
9. ອີງໃສ່ພຣະຄຳ ເອເຟໂຊ 5:21, ຮ່າງກາຍດຽວກັນໃນພຣະຄຣິດ ຕ້ອງ ___________ ເຊິ່ງກັນແລະກັນ.
10. ໃນຮ່າງກາຍຂອງພຣະຄຣິດ,ອະໄວຍະວະສ່ວນໃດໃນຮ່າຍສຳຄັນກວ່າຫມູ່? ໃນພຣະຄຳຟີລິບອຍ 2:3-4? ________ ພວກເຮົາຕ້ອງຄິດເຫັນຜົນປະໂຫຍດຂອງໃຜ? ອ່ານຂໍ້ (4)? ___________________
11. ພຣະເຍຊູຊົງເປັນຕົວຢ່າງແກ່ພວກເຮົາແນວໃດ ໃນໂຍຮັນ 13:14-15? ________________________
ທ່ານຄວນເຮັດຕາມແບບຢ່າງຂອງພຣະອົງຫລືບໍ່? ____________________________________
ແລະທ່ານຈະລ້າງຕີນໃຫ້ກັນແລະກັນຫລືບໍ່? ____________________________________
ຍ້ອນຫຍັງ ຫລື ຍ້ອນຫຍັງຈຶ່ງບໍ່ລ້າງ? ____________________________________

12. ອີງໃສ່ພຣະຄຳໂກໂລຊາຍ 13:13, ຮ່າງກາຍດຽວກັນໃນພຣະຄຣິດ ຈະຍົກໂທດໃຫ້ກັນແລະກັນແນວໃດ? ______________________________

ການຍົກໂທດໃຫ້ກັນແລະກັນນັ້ນ ຕ້ອງເຮັດຫລືບໍ່? ______________________________

13. ສອງສິ່ງທີ່ພວກເຮົາຄວນປະຕິບັດຕໍ່ກັນແລະກັນໃນພຣະຄຳ ຢາໂກໂບ 5:16 ມີຫຍັງແນ່? __________ ແລະ ______________________________

14. ຮ່າງກາຍດຽວກັນໃນພຣະຄຣິດ ຕ້ອງສວມຫຍັງເພື່ອຮັບໃຊ້ເຊິ່ງກັນແລະກັນ?ອີງໃສ່ພຣະຄຳ 1ເປໂຕ 5:5. ______________ ເປັນຫຍັງ? ______________________________

**ການສົນທະນາ**:ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ໃຫ້ຂຽນ ______________________________

______________________________

______________________________

ລັງເມື່ອໄດ້ສຶກສາກ່ຽວກັບການເປັນອະໄວຍະວະດຽວກັນໃນພຣະຄຣິດແລ້ວແລ້ວ, ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງດ້ານໃດແນ່? ______________________________

______________________________

**ການນຳມາປະຕິບັດ**: ທ່ານຈະປ່ຽນແປງຊີວິດຂອງຕົນເອງແນວໃດ ແລະ ເມື່ອໃດ? ______________________________

______________________________

______________________________

# ບົດທີ 5

# ສິນມະຫາສະຫນິດຂອງອົງພຣະຜູ້ເປັນເຈົ້າ

## ( ກິດຈະການ 2:42)


ລູກແກະປັດສະຄາ


ພັນທະສັນຍາໃຫມ່


ເປັນຄືນມາຈາກຕາຍ

ຮິດ
ປະ


ເຂົ້າຈີ່


ນໍ້າສີແດງ


ການສະເດັດຄືນມາ

ຂອງ
ເພນີ

ແລະ ຮູບແບບການໃຊ້ຊີວິດປະຈຳວັນຂອງເຮົານັ້ນ ມັກຈະຈ່ອງດຶງຊີວິດຈິດໃຈເຮົາໃຫ້ຫ່າງໄກຈາກການເຂົ້າຮ່ວມໃນພິທີສິນມະຫາສະຫນິດຂອງອົງພຣະຜູ້ເປັນເຈົ້າ. ໃນພິທີລະນຶກຄິດເຖິງນີ້ ຊົງນຳພວກເຮົາເພື່ອຮ່ວມຮັບເຂົ້າຈີ່ (ເຊິ່ງປຽບສະເຫມືອນພຣະກາຍຂອງພຣະອົງ - ພຣະອົງແມ່ນຜູ້ໃດ) ແລະ ຮ່ວມຮັບຈອກ (ເຊິ່ງປຽບສະເຫມືອນພຣະໂລຫິດຂອງພຣະອົງ- ພຣະອົງໄດ້ເຮັດຫຍັງ) ການເຮັດສິ່ງເຫລົ່ານີ້ ແມ່ນເພື່ອລະນຶກຄິດເຖິງອົງພຣະຜູ້ເປັນເຈົ້າດ້ວຍໃຈອັນບໍຣິສຸດ, ພິຈາລະນາເບິ່ງຈິດໃຈຂອງຕົນເອງກ່ອນ ແລະມີຄວາມຮັກຕໍ່ຍາດພີ່ນ້ອງ ຈົນກວ່າພຣະອົງສະເດັດກັບມາ. ການລະນຶກຄິດເຖິງນີ້ ເຮັດໃຫ້ເຮົາໄດ້ເຂົ້າໃຈເຖິງຄວາມຫມາຍຂອງຂ່າວປະເສີດ.

***<u>ການສຶກສາພຣະຄຳພີ ແລະ ການໄຕ່ຕອບ</u>***: ຈົ່ງອ່ານແລະຕອບຄຳຖາມຕໍ່ໄປນີ້ ແລ້ວຕື່ມຄຳຕອບໃສ່ບ່ອນວ່າງ:

1. ອີງໃສ່ພຣະຄຳອົບພະຍົບ12:12-14, ພຣະເຈົ້າຈະຊົງເຮັດຢ່າງໃດ ເມື່ອພຣະອົງເຫັນເລືອດທີ່ປະຕູເຮືອນນັ້ນ? ______
   ຖ້າບໍ່ມີເລືອດທາທີ່ປະຕູ ພຣະເຈົ້າອາດຈະເຮັດແນວໃດ? ______
   ທຸກວັນນີ້ ຄົນຂອງພຣະເຈົ້າຈະເປັນແນວໃດ? ______
   ຜູ້ໃດຄືລູກແກະປັດສະຄາ ອີງໃສ່ພຣະຄຳ 1 ໂກຣິນໂທ 5:7? ______
2. ອີງໃສ່ພຣະຄຳ ມັດທາຍ 26:26-28, ພຣະເຢຊູຊົງກ່າວວ່າ ເຂົ້າຈີ່ນັ້ນຫມາຍເຖິງຫຍັງ? ______
   "ຈອກ"ນັ້ນຫມາຍເຖິງຫຍັງ? ______
3. ເປັນຫຍັງພຣະເຢຊູຈິ່ງຕັ້ງສິນມະຫາສະຫນິດຂຶ້ນມາ? ອີງໃສ່ພຣະຄຳ ລູກາ 22:19 ______
4. ພຣະເຢຊູແມ່ນໃຜ ອີງໃສ່ພຣະຄຳ ໂຢຮັນ 6:33-35 ແລະ 48-51? ______
   ______
5. ພຣະເຢຊູຊົງເຮັດຫັຍງເພື່ອເຮົາ ອີງໃສ່ພຣະຄຳ ເອຊາຢາ 53:5 ແລະ 1ເປໂຕ 3:18? ______
   ______
6. ບັນດາຜູ້ທີ່ເຊື່ອໃນສະໄຫມກ່ອນໄດ້ພາກັນເຮັດຫຍັງ ອີງຕາມພຣະຄຳ ກິຈະການ2:42? ______
7. ໃນວັນຕົ້ນສັບປະດາ ພວກເຂົາໄດ້ເຕົ້າໂຮມກັນເຮັດຫຍັງ? ອີງຕາມພຣະຄຳ ກິຈະການ 20:7, 11? ______
8. ໃນພຣະຄຳ 1ໂກຣິນໂທ 11:23-30, ເປັນຫຍັງເລົ່າສາວົກຈິ່ງພາກັນຖືສິນມະຫາສະຫນິດ(24-25)?
   ______
   ເມື່ອພວກເຮົາກິນເຂົ້າຈີ່ນີ້ ແລະ ດື່ມຈາກຈອກນີ້ ແມ່ນເຮົາກຳລັງປະກາດເຖິງຫຍັງ?(26) ______
   ______
   ການກິນເຂົ້າຈີ່ ແລະການດື່ມຈອກຢ່າງບໍ່ສົມຄວນຈະເປັນແນວໃດ (27-29)? ______
   ______
   ກ່ອນຈະກິນຫລືດື່ມ ທ່ານຄວນເຮັດແນວໃດ?(27-29)? ______
   ບັນດາສາວົກຄວນເຮັດຫຍັງ ເມື່ອພວກເຂົາກິນແລະດື່ມສິນມະຫາສະຫນິດ? (28) ______
   ______
   ສະນັ້ນ, ພວກທ່ານຕ້ອງຄິດເຖິງພຣະກາຍຂອງໃຜ(29)? ______

ແມ່ນໃຜສົມຄວນ ຫລື ສົມຄວນ? ______________________________

9. ເປັນຫຍັງຈຶ່ງມີຫລາຍຄົນອ່ອນແຮງ ແລະ ເຈັບປ່ວຍ, ແລະບາງຄົນກໍໄດ້ຕາຍໄປ(29-30)? ______________________________

**<u>ການສົນທະນາ</u>**:ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ໃຫ້ຂຽນລົງ ______________________________

ເມື່ອໄດ້ສຶກສາກ່ຽວກັບສິນມະຫາສະຫນິດຂອງອົງພຣະຜູ້ເປັນເຈົ້າແລ້ວ; ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງດ້ານໃດແນ່? ______________________________

**<u>ການນຳມາປະຕິບັດ</u>**: ທ່ານຈະປ່ຽນແປງຊີວິດຂອງຕົນເອງແນວໃດ ແລະ ເມື່ອໃດ? ______________________________

**<u>ຄຳພະຍານສ່ວນຕົວ</u>**:ຕັ້ງແຕ່ທ່ານໄດ້ຕັດສິນໃຈຕ້ອນຮັບເອົາພຣະເຢຊູເປັນພຣະຜູ້ໄຖ່ໃຫ້ພົ້ນ, ຄວາມເຂົ້າໃຈຂອງທ່ານກ່ຽວກັບພິທີສິນມະຫາສະຫນິດຂອງອົງພຣະຜູ້ເປັນເຈົ້າປ່ຽນໄປແນວໃດ? ຄວາມເຊື່ອຂອງທ່ານໄດ້ເຕີບໂຕຂຶ້ນແນວໃດ? ______________________________

# ບົດທີ 5 ກ

## ການພາວັນນາອະທິຖານ ( ກິຈະການ 2:42)



ບໍ່ວ່າຈະເປັນພິທີສິນມະຫາ ສະຫນິດ ຫລື ອີກຫລາຍພິທີກຳທາງສາສະຫນາ ລວມທັງການດຳເນີນຊີວິດແຕ່ລະວັນຂອງເຮົານັ້ນ ລ້ວນແລ້ວແຕ່ຈ່ອງດຶງຊີວິດ ແລະ ຈິດໃຈຂອງພວກເຮົາອອກຈາກການພາວັນນາອະທິຖານ. ຂໍໃຫ້ພວກເຮົາໄດ້ເຂົ້າໃຈວ່າ ການອະທິຖານນັ້ນ ຄືຫົວໃຈຂອງຄວາມສຳພັນອັນດີລະຫວ່າງເຮົາກັບພຣະເຈົ້າ. ການອະທິຖານ ຄືການເວົ້າກັບພຣະເຈົ້າຜູ້ທີ່ເປັນພຣະບິດາຂອງເຮົາ ແລະ ນ້ອມຮັບນ້ຳພຣະໄທຂອງພຣະອົງທີ່ຊົງມີຕໍ່ເຮົາ. ການພາວັນນາອະທິຖານແມ່ນ ເພື່ອໃຫ້ບັນດາຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດ ໄດ້ຕິດຕໍ່ສື່ສານກັບພຣະເຈົ້າເພື່ອທູນຂໍສິ່ງທີ່ເຂົາຕ້ອງການ, ເພື່ອນະມັສການ, ເພື່ອຍ້ອງຍໍສັນລະເສີນພຣະອົງ. ເມື່ອມີຄວາມໂສກເສົ້າເສຍໃຈ ຫລືມີຄວາມຍິນດີ ແລະ ມີຄວາມປາດຖະຫນາ ພວກ

ເຮົາກໍສາມາດນຳມາທູນຕໍ່ພຣະເຈົ້າໄດ້. ການພາວັນນາອະທິຖານ ສາມາດເວົ້າອອກສຽງດັງ ຫລື ອະທິຖານແບບຄ່ອຍໆ ຢູ່ບ່ອນມິດງຽບສ່ວນຕົວ ຫລືບ່ອນທີ່ມີຄົນຫລາຍ, ຮູບແບບຂອງການພາວັນນາອະທິຖານ ສາມາດເປັນແບບທາງການ ຫລື ແບບລຽບງ່າຍທຳມະດາ. ຂ້າພະເຈົ້າປະທັບໃຈໃນຄຳນິຍາມກ່ຽວກັບຄຳພາວັນນາອະທິຖານຂອງທ່ານ J.C.Lambert, ທີ່ວ່າ " ພຣະຄຳພີພະສັນຍາໃຫມ່ກ່າວເຖິງຄວາມຫມາຍຂອງຄຳພາວັນນາອະທິຖານຂອງຄຣິສຕຽນວ່າ ເປັນການຍົກສຽງຕໍ່ພຣະເຈົ້າຜູ້ຊົງເປັນພຣະບິດາ ໃນພຣະນາມຊື່ຂອງອົງພຣະເຢຊູຄຣິດຊົງເປັນຜູ້ກາງໂດຍຜ່ານພຣະຄຸນອຳນາດແຫ່ງພຣະວິນຍານບໍຣິສຸດຜູ້ຊົງສະຖິດຢູ່". ຫລັງຈາກທີ່ພວກເຮົາໄດ້ຕິດຕາມເບິ່ງແບບຢ່າງທີ່ດີ ແລະ ຮູບແບບການປະກາດຂ່າວປະເສີດທີ່ມີປະສິດທິພາບຂອງຄຣິສຕະຈັກໃນສະໄຫມກ່ອນເຊິ່ງຢູ່ໃນບົດຮຽນທີ 1-5, ຕໍ່ໄປນີ້ ເຮົາຈະມາສັງເກດເບິ່ງນຳກັນວ່າທ່ານລູກາໄດ້ບັນທຶກກ່ຽວກັບການພາວັນນາອະທິຖານແນວໃດ ໃນພຣະຄຳກິດຈະການ ເຊິ່ງຢູ່ໃນບົດຮຽນ 5ກ. ທ່ານຈະເຫັນໄດ້ຢ່າງຊັດເຈນວ່າ ການພາວັນນາອະທິຖານ ແລະ ຣິດອຳນາດຂອງພຣະວິນຍານບໍຣິສຸດນັ້ນ ມີຄວາມສຳພັນກັນແນວໃດ. ສຳລັບຂໍ້ພຣະຄຳພີ ແລະ ຄຳແນະນຳກ່ຽວກັບການພາວັນນາອະທິຖານນັ້ນ, ທ່ານສາມາດເບິ່ງຢູ່ບົດທີ 14. ຫນ້າທີ 55.

***<u>ການສຶກສາພຣະຄຳພີ ແລະ ການໄຄ່ຄວນ:</u>*** ຈົ່ງອ່ານ ແລະ ຕອບຄຳຖາມຕໍ່ໄປນີ້ ແລ້ວຕື່ມຄຳຕອບໃສ່ບ່ອນວ່າງ:

1. ຈົ່ງອະທິບາຍກ່ຽວກັບການຮ່ວມກັນພາວັນນາອະທິຖານຂອງຜູ່ທີ່ເຊື່ອໃນຄຣິສຕະຈັກສະໄຫມກ່ອນເຊິ່ງບັນທຶກໄວ້ໃນພຣະຄຳກິຈະການ 1:14? ____________________

   ____________________

   ເກີດເຫດການຫຍັງຂຶ້ນ ໃນບົດ 2:1-4? ____________________

   ____________________

2. ເມື່ອພວກເຮົາພາວັນນາອະທິຖານ, ພຣະອົງຍັ່ງຮູ້ສິ່ງໃດ ອີງໃສ່ພຣະຄຳ ກິດຈະການ 1:24? __________

   ____________________

   ພຣະອົງໂຜດຊີ້ບອກວ່າຫຍັງ? ____________________

3. ໃນພຣະຄຳກິດຈະການ 2:42, ພວກເຂົາໄດ້ຕັ້ງຫມັ້ນຢູ່ໃນຄຳສອນຂອງພວກອັກຄະສາວົກ ເຂົ້າຮ່ວມໃນກຸ່ມສາມັກຄີທຳ, ໃນການຫັກເຂົ້າຈີ່ ແລະ ____________________

   ຫລັງຈາກພວກສິດອະທິຖານ ມີຫຍັງເກີດຂຶ້ນກັບພວກເຂົາ( ຂໍ້ 43) ____________________

   ____________________

4. ເປໂຕ, ໂຢຮັນ (3:1) ແລະ ໂປໂລ22:17) ກຳລັງເຮັດຫຍັງຢູ່ທີ່ພຣະວິຫານ? ____________________

5. ບັນດາຜູ້ທີ່ເຊື່ອໄດ້ຍົກສຽງຮ້ອງຫາພຣະເຈົ້າແນວໃດ ອີງໃສ່ພຣະຄຳ ກິດຈະການ 4:24? __________

   ____________________

   ອີງໃສ່ ບົດ 4:29 ພວກເຂົາໄດ້ທູນຂໍສິ່ງໃດຈາກພຣະອົງ? ____________________

   ອີງໃສ່ ບົດ 4:31 ເມື່ອພວກເຂົາພາວັນນາອະທິຖານຈົບແລ້ວ ມີເຫດການໃດເກີດຂຶ້ນ? __________

   ____________________

6. ພວກອັກຄະສາວົກໄດ້ແຕ່ງຕັ້ງຜູ້ດູແລ(6:6) ແລະ ພວກເຖົ້າແກ່ (14:23)ດ້ວຍວິທີໃດ? __________

   ____________________

7. ໃນຂະນະທີ່ພວກເຂົາສືບຕໍ່ແກວ່ງກ້ອນຫີນໃສ່ສະເຕຟາໂນ, ເພິ່ນກຳລັງພາວັນນາອະທິຖານຫາອົງພຣະເຢຊູຄຣິດເຈົ້າແນວໃດ? ອີງໃສ່ບົດ 7:59? ______
ໃນບົດ 7:60, ເພິ່ນໄດ້ຂໍໃຫ້ພຣະເຈົ້າຊົງໂຜດກະທຳສິ່ງໃດສຳລັບຜູ້ທີ່ຂົ່ມເຫັງເພິ່ນ? ______

8. ເປັນຫຍັງພວກອັກຄະສາວົກທີ່ຢູ່ໃນນະຄອນເຢຣູຊາເລັມຈຶ່ງສົ່ງເປໂຕ ແລະ ໂຢຮັນ ໄປຍັງຊາມາເຣຍ ອີງໃສ່ບົດ 8:15? ______

9. ມີຫຍັງເກີດຂຶ້ນກັບ ຕາບີທາ ໃນພຣະຄຳ ກິດຈະການ 9:40-41 ຫລັງຈາກທີ່ເປໂຕຄຸເຂົ່າລົງ ແລະ ພາວັນນາອະທິຖານເພື່ອນາງ? ______

10. ຜູ້ໃດທີ່ພາວັນນາອະທິຖານຫາພຣະເຈົ້າຢ່າງສະຫມ່ຳສະເຫມີ ໃນພຣະຄຳ ກຈກ 10:1-2? ______
ມີເລື່ອງຫຍັງເກີດຂຶ້ນກັບຄຳພາວັນນາອະທິຖານຂອງເພິ່ນ ອີງໃສ່ບົດ10:4? ______
ທ່ານຮູ້ໄດ້ແນວໃດວ່າພຣະເຈົ້າໄດ້ຍິນຄຳພາວັນນາອະທິຖານຂອງໂກເນລີໂອແລ້ວ( 30-31)? ______

______

11. ໃນເວລາທີ່ເປໂຕຖືກຂັງໄວ້ໃນຄຸກ, ພີ່ນ້ອງທີ່ເຊື່ອໄດ້ພາກັນເຮັດສິ່ງໃດດ້ວຍໃຈຮ້ອນຮົນ? ອີງໃສ່ ບົດ 12:5, 12 ______ ມີເຫດການໃດເກີດຂຶ້ນກັບເປໂຕ ໃນບົດ 12:7-10? ______
______ ຫລັງຈາກທີ່ຢາໂກໂບຖືກຂ້າ(12:2), ທ່ານຄິດວ່າ ພີ່ນ້ອງທີ່ເຊື່ອມີຄວາມຄາດຫວັງວ່າເປໂຕຈະມາຫາພວກເຂົາຫລືບໍ່? ( ເບິ່ງ ບົດ 12:14, 15)? ______

12. ຄຣິສຕະຈັກທີ່ເມືອງອັນຕິໂອເຂຍ ໄດ້ເຮັດສິ່ງໃດກ່ອນຈະສົ່ງ ບາຣະນາບາ ແລະ ໂປໂລອອກໄປຮັບໃຊ້. ອີງໃສ່ບົດ 13:3? ______

13. ເປັນຫຍັງໂປໂລ ແລະ ສີລາຈຶ່ງອອກຈາກປະຕູເມືອງໄປທີ່ຝັ່ງແມ່ນ້ຳ ອີງໃສ່ບົດ 16:13? ______
ບ່ອນນັ້ນຖືກເອີ້ນວ່າບ່ອນຫຍັງ(16:13, 16)? ______
ເປັນຫຍັງອົງພຣະຜູ້ເປັນເຈົ້າຈຶ່ງຊົງເປີດຈິດໃຈຂອງນາງລີເດຍ( ຂໍ້14)? ______

14. ໂປໂລ ແລະສີລາເຮັດສິ່ງໃດ ເມື່ອພວກເພິ່ນຖືກຂ້ຽນຫລາຍບາດແລ້ວກໍຖືກນຳເອົາໄປຂັງຄຸກ ອີງໃສ່ບົດ 16:25? ______ ແລະ ______
ພວກມີຫຍັງເກີດຂຶ້ນກັບເຈົ້າຫນ້າທີ່ຄຸມຂັງ ແລະ ທຸກຄົນໃນຄອບຄົວຂອງລາວ ອີງໃສ່ຂໍ້ 33-34? ______

______

______

15. ເພິ່ນພາກັນພາວັນນາອະທິຖານເນື່ອງໃນໂອກາດອັນໃດ ໃນບົດ 20:36-38 ແລະ 21:5-6? ______
ເປັນຫຍັງພວກເພິ່ນຈຶ່ງພາວັນນາອະທິຖານ? ______

16. ໂປໂລອະທິຖານວ່າແນວໃດ ໃນບົດ 27:35. ______
ເມື່ອພາວັນນາອະທິຖານແລ້ວ ພວກເຂົາເປັນແນວໃດ(36)? ______

17. ເມື່ອໂປໂລໄດ້ອະທິຖານເພື່ອພໍ່ຂອງປົບລີໂອ ອາການຂອງເພິ່ນເປັນແນວໃດ? ໃນບົດ 28:8? ______

ຈາກການອ່ານພຣະຄຳພີ ແລະ ສຶກສາບົດຮຽນຜ່ານມາ ເຮົາຈະເຫັນວ່າ ຜູ້ທີ່ເຊື່ອໃນຍຸກກ່ອນໄດ້ນຳເອົາຂ່າວປະເສີດແຜ່ອອກໄປຈາກກຸງເຢຣູຊາເລມສູ່ກຸງໂຣມ ພາຍໃນເວລາ25ປີ. ໃນຂະນະທີ່ທ່ານໄດ້ສຶກສາປຶ້ມຄູ່ມື "ແຜນການຂອງພຣະເຈົ້າສຳລັບສາວົກຂອງພຣະອົງ" ທ່ານກໍຈະໄດ້ເຫັນບົດຮຽນທີ່ກ່າວເຖິງການພາວັນນາອະທິຖານ. ພວກເຮົາຈະຈົບບົດຮຽນເລື່ອງການພາວັນນາອະທິຖານ ດ້ວຍການອ່ານພຣະຄຳ 1 ເທສະໂລນິກ 5:16-18. ຫລັງຈາກນັ້ນ ໃຫ້ທ່ານຕື່ມຄຳຕອບໃສ່ບ່ອນວ່າງເປົ່າລຸ່ມນີ້. ສຳລັບທ່ານແລ້ວ ສິ່ງໃດຄືສິ່ງທີ່ພຣະເຈົ້າພໍພຣະໄທ ຊຶ່ງປາກົດໃນພຣະເຢຊູຄຣິດເຈົ້າ? __________ ຢູ່ສະເຫມີ(16) ____________ ຢູ່ທຸກເວລາ(17) ________________________________ ໃນທຸກສິ່ງ(18)

***ການສົນທະນາ:*** ທ່ານໄດ້ຮຽນຮູ້ຫຍັງແນ່ກ່ຽວກັບການປະກາດຂ່າວປະເສີດຂອງບັນດາຜູ້ທີ່ເຊື່ອໃນສະໄຫມກ່ອນ. ຈົ່ງໂອ້ລົມກັນກັບພີ່ນ້ອງທີ່ເຊື່ອ ໂດຍເວົ້າເຖິງຈຸດທີ່ຄືກັນ ແລະ ແຕກຕ່າງກັນໃນບົດຮຽນທີ່ທ່ານໄດ້ຮຽນມາ ຖ້າທ່ານມີຂໍ້ແນະນຳເພີ່ມຕື່ມ ກໍໃຫ້ຂຽນໃສ່ບ່ອນວ່າງເປົ່າລຸ່ມນີ້. ___________________

___________________________________________________________________

___________________________________________________________________

___________________________________________________________________

ເມື່ອທ່ານໄດ້ສຶກສາກ່ຽວກັບການພາວັນນາອະທິຖານແລ້ວ ທ່ານຕ້ອງການປ່ຽນແປງຊີວິດຕົນເອງແນວໃດແນ່? ______________________________________________________

***ການນຳມາປະຕິບັດ:*** ທ່ານຈະປ່ຽນແປງຊີວິດຕົນເອງວິທີໃດ ແລະ ເວລາໃດ? __________________

___________________________________________________________________

___________________________________________________________________

# III. ສາວົກຕັ້ງຫມັ້ນຄົງຢູ່ໃນການສຶກສາພຣະຄຳຂອງພຣະເຈົ້າ

## ບົດທີ 6

## ຄຳແນະນຳໃນການສຶກສາພຣະຄຳຂອງພຣະເຈົ້າ (ກິຈະການ8:26-38)

(ເບິ່ງຫນ້າ 7 ; ວິທີການສຳລັບຝຶກອົບຮົມຜູ້ຮຽນຮູ້ຜ່ານການເວົ້າ ແລະ ການເບິ່ງ)

ກ່ອນທ່ານຈະເຂົ້າສູ່ບົດຮຽນ ໃນຫົວຂໍ້ ຄຳແນະນຳໃນການສຶກສາພຣະຄຳຂອງພຣະເຈົ້າ, ຈົ່ງອ່ານເລື່ອງລາວຂອງທ່ານຟີລິບ ແລະ ຂ້າຣາຊການຊາວເອທິໂອເປຍ ໃນພຣະຄຳ ກິຈະການ 8:26-38 ແລະ ສັງເກດເບິ່ງວ່າທ່ານສາມາດ ຍົກມາ 4 ຫລັກການສຳຄັນຂອງການສຶກສາພຣະຄຳຂອງພຣະເຈົ້າໃນເລື່ອງນີ້: ***ການສຶກສາພຣະຄຳພີ*** (ຂໍ້ 28) ***ການໄຕ່ຕອງ*** ( ຂໍ້ 30) ***ການສົນທະນາ*** ( ຂໍ້ 31-35) ແລະ ***ການນຳມາປະຕິບັດ*** ( ຂໍ້ 36-38)

### 1. - <u>ການສຶກສາພຣະຄຳພີ</u> - " ເບິ່ງ " - ວ່າພຣະຄຳກ່າວເຖິງເລື່ອງຫຍັງ?

- ເນື້ອໃນຂອງເລື່ອງ - ສຶກສາວ່າພຣະຄຳພີໄດ້ກ່າວວ່າແນວໃດ?
- ອະທິຖານຂໍໃຫ້**ພຣະວິນຍານບໍຣິສຸດ**ຊ່ວຍໃຫ້ເຮົາເຫັນຄຳຕອບ.

***ການສຶກສາພຣະຄຳພີ*** ແມ່ນບັດໃຈພື້ນຖານທີ່ນຳເຮົາໃຫ້ເຂົ້າໃຈເຖິງຖ້ອຍຄຳຂອງພຣະເຈົ້າ; ທ່ານຕ້ອງໄດ້ໃຊ້ຄວາມຄິດ ຈິດໃຈ ແລະ ການຈົດຈໍ່ໃນຂໍ່ພຣະຄຳພີ ແລະເລື່ອງລາວທີ່ເກີດຂຶ້ນ ທັງເຫດການກ່ອນແລະ

ຫລັງເລື່ອງນັ້ນ ເພື່ອໃຫ້ເຮົາຄົ້ນພົບວ່າພຣະເຈົ້າກຳລັງເວົ້າເຖິງຫຍັງ. ອ່ານຂໍ້ພຣະຄຳພີຊ້ຳໄປມາຫລາຍຮອບ ແລະ ຕັ້ງຄຳຖາມກັບຕົນເອງວ່າມີຫຍັງເກີດຂຶ້ນໃນເລື່ອງນີ້, ມີໃຜແນ່ໃນເລື່ອງ, ເກີດຂຶ້ນຢູ່ໃສ ແລະ ຊ່ວງເວລາໃດ. ຫລັງຈາກທ່ານອ່ານຂໍ້ພຣະຄຳແລະ ການອະທິບາຍເລື່ອງແລ້ວ, ຈົ່ງສະຫລຸບການສຶກສາຂໍ້ພຣະຄຳພີຂອງທ່ານ.

ເພື່ອເປັນຕົວຢ່າງ, ເຮົາຈະມາຄົ້ນຄວ້ານຳກັນວ່າ ພຣະຄຳພີຊົງກ່າວເຖິງຫຍັງໃນ ມັດທາຍ 6:33. ເພື່ອໃຫ້ເຂົ້າໃຈຂໍ້33, ທ່ານຕ້ອງອ່ານຂໍ້ 24-34 ສາກ່ອນ. ຫລັງຈາກນັ້ນຈຶ່ງອ່ານເນື້ອເລື່ອງ ແລ້ວບັນທຶກສິ່ງທີ່ທ່ານສັງເກດເຫັນວ່າພຣະເຢຊູຊົງກ່າວເຖິງຫຍັງໃນຂໍ້33. ຕໍ່ໄປນີ້ແມ່ນຕົວຢ່າງເພື່ອຊ່ວຍໃຫ້ທ່ານເລີ່ມຕົ້ນລົງມືປະຕິບັດເຊິ່ງທ່ານອາດຈະຕ້ອງສຶກສາຫລາຍຮອບ.

<u>*ທ່ານບໍ່ສາມາດຮັບໃຊ້ພຣະເຈົ້າ ແລະເງິນ. ຢ່າກະວົນກະວາຍເຖິງເລື່ອງວ່າ ຈະກິນຫຍັງ ຈະດື່ມຫຍັງ ຫລືຈະນຸ່ງຮົ່ມຫຍັງ. ພຣະເຈົ້າລ້ຽງຝູງນົກ ແລະ ຕົບແຕ່ງດອກໄມ້ປ່າຢູ່ຕາມທົ່ງຫຍ້າ. ພຣະອົງຮູ້ສິ່ງທີ່ເຮົາຕ້ອງການ. ຈົ່ງສະແຫວງຫາລາຊອານາຈັກຂອງພຣະເຈົ້າກ່ອນ ແລ້ວພຣະອົງຈະຊົງເພີ່ມເຕີມສິ່ງທັງປວງເລົ່ານີ້ແກ່ທ່ານ. ສະນັ້ນ, ຢ່າກະວົນກະວາຍເຖິງມື້ອື່ນ ຫລືສິ່ງໃດເລີຍ.*</u>

## 2. - <u>ການໄຕ່ຄອນ</u> - " ຄິດ " - ເລື່ອງນີ້ມີຄວາມຫມາຍວ່າແນວໃດ?

- ຄວາມກະຈ່າງແຈ້ງ- ສຶກສາຄົ້ນຄວ້າວ່າ ພຣະຄຳພີມີຄວາມຫມາຍວ່າແນວໃດ?
- ອະທິຖານຂໍໃຫ້**ພຣະວິນຍານບໍລິສຸດ**ຊ່ວຍໃຫ້ທ່ານເຂົ້າໃຈ.

**<u>ການໄຕ່ຄອນ</u>** ຫລືການຄົ້ນຄິດ ຊ່ວຍໃຫ້ທ່ານເຂົ້າໃຈ ຫລື ຕີຄວາມຫມາຍຂອງຂໍ້ພຣະຄຳພີໄດ້ຢ່າງຊັດເຈນ. ວິທີຫນຶ່ງເພື່ອໃຫ້ເຂົ້າໃຈຄວາມຫມາຍຂອງເລື່ອງ ກໍຄືການຄິດກ່ຽວກັບສິ່ງທີ່ຜູ້ຂຽນຕັ້ງໃຈຢາກໃຫ້ຜູ້ອ່ານຮູ້ຫຍັງຈາກສິ່ງທີ່ເພິ່ນຄິດ ແລະບັນທຶກໄວ້. ຈື່ໄວ້ສະເຫມີວ່າ ເນື້ອເລື່ອງທັງຫມົດ ສາມາດຊ່ວຍຕອບຫລາຍຄຳຖາມຂອງທ່ານກ່ຽວກັບຂໍ້ພຣະຄຳພີໃດຫນຶ່ງ.ສະນັ້ນ, ຈົ່ງເບິ່ງຕົວຢ່າງການສັງເກດຂໍ້ພຣະຄຳພີຂ້າງເທິງ ໃນຂັ້ນຕອນທີ1 ແລະ ຖາມຕົນເອງວ່າ "ພຣະເຢຊູຕ້ອງການໃຫ້ພວກເຮົາຮູ້ກ່ຽວກັບຫຍັງໃນຂໍ້ 33?" ຂໍ້ນີ້ ມີຄວາມຫມາຍແນວໃດ? ຈົ່ງສະຫລຸບຄວາມຄິດຂອງທ່ານ ແລະຫລັກການສຳຄັນໃສ່ຫນ້າຕໍ່ໄປ.

<u>*ທ່ານບໍ່ສາມາດຮັບໃຊ້ພຣະເຈົ້າແລະສິ່ງອື່ນ ເຊັ່ນ ເງິນ ອາຫານຫລື ເຄື່ອງນຸ່ງຫົ່ມເມື່ອທ່ານຖືກລໍ້ລວງໃຫ້ຮັບໃຊ້ສອງນາຍ, ທ່ານກະມີຄວາມກະວົນກະວາຍ ເພາະວ່າຄວາມຄິດ ແລະ ຈິດໃຈຂອງທ່ານຈະຖືກແຍກອອກຈາກກັນ. ທ່ານຄວນສະແຫວງຫາແລະຮັບໃຊ້ແຕ່ນາຍດຽວເທົ່ານັ້ນກໍຄືພຣະເຈົ້າ.ຍົກໃຫ້ພຣະອົງເປັນທີຫນຶ່ງ ແລະ ມີພຣະອົງຜູ້ດຽວ. ທ່ານສາມາດເຊື່ອພຣະເຈົ້າດ້ວຍຄວາມຫມັ້ນໃຈ ເພາະພຣະອົງຮູ້ຄວາມຕ້ອງການຂອງທ່ານ. ແລະແນ່ນອນວ່າຖ້າ ພຣະເຈົ້າຊົງລ້ຽງຝູງນົກ ແລະ ຕົບແຕ່ງດອກໄມ້ໃຫ້ສວຍງາມ ພຣະອົງກໍສາມາດເບິ່ງແຍງເຮົາໄດ້.*</u>

## 3. - <u>ສົນທະນາ</u> - " ໂອ້ລົມກັນ"- ຄົນອື່ນມີຄວາມຄິດເຫັນແນວໃດ?

**<u>ຫມາຍເຫດ</u>: <u>ຂັ້ນຕອນນີ້ຈະປະຕິບັດຮ່ວມກັນກັບຂັ້ນຕອນທີ 2: ການໄຕ່ຄອນ.</u> ຖ້າທ່ານສຶກສາພຣະຄຳສຳລັບການເຝົ້າດ່ຽວສ່ວນຕົວ ທ່ານບໍ່ຈຳເປັນປະຕິບັດຕາມຂັ້ນຕອນນີ້ກໍໄດ້. ເບິ່ງຫນ້າ 80.**

- ການສົນທະນາ - ຄົນອື່ນມີຄວາມຄິດເຫັນແນວໃດ?
- ອະທິຖານຂໍ**ພຣະວິນຍານບໍລິສຸດ**ຊ່ວຍໃຫ້ທ່ານໄດ້ຮຽນຮູ້ຈາກຄົນອື່ນ.

**<u>ການສົນທະນາ</u>** ກັນກັບພີ່ນ້ອງທີ່ສຶກສາພຣະຄຳພີຮ່ວມກັນນັ້ນເປັນວິທີການດັ້ງເດີມ ແລະຍັງຄົງເປັນວິທີການສອນທີ່ໄດ້ຜົນດີ ເພື່ອດຶງເອົາຄວາມຄິດເຫັນ ແລະ ເປັນການທ້າທາຍແຕ່ລະຄົນໂດຍການຕັ້ງຖາມ ແລະຕອບຄຳຖາມຕ່າງໆ.ການໂອ້ລົມສົນທະນາແມ່ນວິທີການທີ່ຄຣິສຕະຈັກໃນສະໄຫມກ່ອນນຳໃຊ້ ( ກຈກ 17:2;17:17; 18:4; 18:19; 24:25) ເພື່ອທ້າທາຍແລະຫນູນໃຈເຊິ່ງກັນແລະກັນໃນການດຳເນີນຊີວິດແລະການຮັບໃຊ້. ຈົ່ງນຳເອົາຄວາມຄິດແລະຫລັກການສຳຄັນທີ່ທ່ານໄດ້ຄົ້ນພົບໃນຂັ້ນຕອນທີ2 ມາສົນທະນາກັບພີ່ນ້ອງຄົນອື່ນໆ.

**<u>ການສົນທະນາ</u>**: ຈົ່ງປຽບທຽບຫລັກການທີ່ທ່ານໄດ້ຮຽນຮູ້ຈາກຂໍ້ພຣະຄຳ ມັດທາຍ6:33 ກັບຊີວິດໃນປະຈຸບັນຂອງທ່ານ. *<u>ທຸກວັນນີ້ພວກເຮົາພະຍາຍາມຮັບໃຊ້ໂລກ ລົງທຶນຊີວິດ ແລະສັບສິ່ງຂອງ ຂອງເຮົາໃຫ້ກັບໂລກ ແລະ ພຣະເຈົ້າພ້ອມໆກັນ. ນອກນັ້ນ, ວັດທະນະທຳແລະປະເພນີຍັງສອນວ່າ ເຮົາສາມາດຮັກທັງສອງຢ່າງໄດ້ ຄືເງິນ ແລະ ພຣະເຈົ້າເພື່ອເຕີມເຕັມຊີວິດຂອງເຮົາ.</u>*

ທ່ານຕ້ອງການປ່ຽນແປງຊີວິດຕົນເອງໃນດ້ານໃດ? *<u>ຢຸດພະຍາຍາມຮັບໃຊ້ສອງນາຍ ແຕ່ຈົ່ງສະແຫວງຫາການຮັບໃຊ້ພຣະເຢຊູເທົ່ານັ້ນ. ຂ້າພະເຈົ້າຈະບໍ່ກະວົນກະວາຍເຖິງສິ່ງຕ່າງໆ ເພາະພຣະເຈົ້າຮູ້ທຸກສິ່ງທີ່ຂ້າພະເຈົ້າຕ້ອງການ ພຣະອົງຈະຊົງປະທານສິ່ງສາລະພັດໃຫ້ ຖ້າຂ້າພະເຈົ້າສະແຫວງຫາພຣະອົງກ່ອນ.</u>*

# 4. - <u>ການນຳມາປະຕິບັດ</u> - "ລົງມືເຮັດ" - ເຮົາຈະນຳມາໃຊ້ໃນຊີວິດຂອງເຮົາແນວໃດ?

- ການປ່ຽນແປງ - ສຶກສາເບິ່ງວ່າພຣະຄຳສາມາດທຳການອັນໃດໄດ້
- ອະທິຖານຂໍ**ພຣະວິນຍານບໍຣິສຸດ**ຊ່ວຍໃຫ້ເຮົາສາມາດເຮັດໄດ້.

**<u>ການນຳມາປະຕິບັດ</u>**: ຄືຜົນຮັບທີ່ໄດ້ຈາກການຮຽນຮູ້ຖ້ອຍຄຳຂອງພຣະເຈົ້າ. ພວກເຮົາຕ້ອງປ່ຽນແປງຊີວິດໃຫ້ເປັນ ເຫມືອນພຣະເຢຊູ ແລະ ມີຄວາມສຳພັນອັນສະຫນິດແຫນ້ນກັບພຣະເຈົ້າ. ຂັ້ນຕອນການນຳມາປະຕິບັດນີ້ ບໍ່ເປັນພຽງແຕ່ການຕອບຄຳຖາມ ແຕ່ເປັນການນຳມາປະຕິບັດຕົວຈິງ ໃນສິ່ງທີ່ພຣະວິນຍານບໍຣິສຸດຊົງສຳແດງແກ່ທ່ານ. ເມື່ອທ່ານເຊື່ອຟັງພຣະເຈົ້າ ແລະ ເຮັດຕາມຄຳສອນຂອງພຣະອົງ, ທ່ານຈະອັດສະຈັນກັບຜົນຮັບ ທັງຈະມີຄວາມຊື່ນຊົມຍິນດີໃນຊີວິດ ແລະ ມີຄວາມສຳພັນທີ່ສະຫນິດແຫນ້ນກັບອົງພຣະເຢຊູຄຣິດ.

**<u>ການນຳມາປະຕິບັດ</u>: ທ່ານຈະປ່ຽນແປງຊີວິດຕົນເອງແນວໃດ ແລະ ເວລາໃດ?**

*<u>ຂ້ານ້ອຍຈະມອບເວລາແລະສັບສິ່ງຂອງທີ່ຂ້ານ້ອຍມີໄວ້ໃນຣາຊອານາຈັກຂອງພຣະເຈົ້າ ແລະຮັບໃຊ້ພຣະອົງກ່ອນ. ການເຮັດສິ່ງນີ້ ບໍ່ແມ່ນເຮັດເພື່ອຕົນເອງ ຫລືເພື່ອຜົນປະໂຫຍດຕົວ. ຂ້ານ້ອຍຈະລົງມືເຮັດມື້ນີ້ ເພື່ອຮັບໃຊ້ແລະເຊື່ອຟັງພຣະອົງເຈົ້າຜູ້ດຽວ ຄືພຣະຜູ້ໄຖ່, ຖ້ອຍຄຳແຫ່ງຊີວິດ. ຢຸດການພະຍາຍາມຮັບໃຊ້ທັງພຣະຄຣິດ ແລະ ໂລກ ກໍຄືຕົນເອງ, ເງິນຄຳ ແລະ ສັບສິ່ງຂອງອື່ນໆ.</u>*

# ບົດທີ 7

# ບົດເຝິກຫັດ ການສຶກສາພຣະຄຳຂອງພຣະເຈົ້າ.

**(ບົດຕົວຢ່າງ) ສຶກສາ ພຣະຄຳ ມາຣາໂກ 1:35 ໂດຍການໃຊ້ 4 ຂັ້ນຕອນດັ່ງລຸ່ມນີ້:**

## 1.<u>ການສຶກສາພຣະຄຳພີ</u> - " ເບິ່ງ " - ເລື່ອງນີ້ເວົ້າເຖິງຫຍັງ?

- ເນື້ອໃນຂອງເລື່ອງ - ຄົ້ນຫາ ວ່າພຣະຄຳພີກ່າວຢ່າງໃດ ແລະ ອະທິຖານຂໍພຣະວິນຍານບໍຣິສຸດເປີດຕາເຮົາໃຫ້ເຂົ້າໃຈ.

**<u>ການສຶກສາພຣະຄຳພີ</u>**: ຈົ່ງອ່ານພຣະຄຳ ມະຣາໂກ 1:35 ແລ້ວຂຽນເຫດການທີ່ເກີດຂຶ້ນ, ມີໃຜແນ່ໃນເລື່ອງ, ເກີດຂຶ້ນຢູ່ໃສ ແລະ ເວລາໃດ. ຫລັງຈາກນັ້ນ ຈົ່ງສະຫລຸບຄຳຕອບ ແລະ ການສຶກສາພຣະຄຳຂອງທ່ານ.

---

## 2. - <u>ການໄຄ່ຄວນ</u> - " ຄິດ " - ເລື່ອງນີ້ມີຄວາມຫມາຍຢ່າງໃດ?

- ຄວາມກະຈ່າງແຈ້ງ - ຄົ້ນຫາວ່າພຣະຄໍາພີຂໍ້ນີ້ມີຄວາມຫມາຍວ່າແນວໃດ ແລະ ອະທິຖານຂໍ**ພຣະວິນຍານບໍຣິສຸດ**ຊ່ວຍໃຫ້ເຮົາເຂົ້າໃຈ. ຈົ່ງຢ່າລືມວ່າ ຖ້າທ່ານສຶກສາພຣະຄໍາຮ່ວມກັບຜູ້ອື່ນ ທ່ານຕ້ອງປະຕິບັດຂັ້ນ ຕອນທີ 2 ແລະ 3 ໄປພ້ອມກັນ.

**<u>ການໄຕ່ຕອນ</u>**: ແມ່ນອີງໃສ່ເນື້ອໃນທີ່ທ່ານການສຶກສາຈາກຂໍ້ພຣະຄໍາ ມະຣາໂກ 1:35, ທ່ານຄິດວ່າ ຜູ້ຂຽນຕ້ອງການໃຫ້ເຮົາຮູ້ຫຍັງຈາກເລື່ອງທີ່ເພິ່ນຂຽນ. ເປັນຫຍັງເລື່ອງນັ້ນຈິ່ງຖືກບັນທຶກລົງໃນພຣະຄໍາຂອງພຣະເຈົ້າ. ຈົ່ງສະຫລຸບຄວາມຄິດ ແລະ ຄວາມເຂົ້າໃຈແຈ້ງຂອງທ່ານ.

---

## 3. - <u>ການສົນທະນາ</u> - "ເວົ້າ" - ຄົນອື່ນມີຄວາມຄິດເຫັນແນວໃດ?

- ການເວົ້າລົມກັນ - ຄົ້ນຄວ້າເບິ່ງວ່າຄົນອື່ນມີຄວາມຄິດເຫັນແນວໃດ ແລະ ອະທິຖານຂໍ**ພຣະວິນຍານບໍຣິສຸດ**ຊ່ວຍໃຫ້ເຮົາຮຽນຈາກຜູ້ອື່ນ. ຈົ່ງຢ່າລືມ, ຖ້າທ່ານສຶກສາພຣະຄໍາສ່ວນຕົວຜູ້ດຽວ,ທ່ານບໍ່ຈໍາເປັນປະຕິບັດຕາມຂັ້ນຕອນທີ3 ນີ້.

**ການສົນທະນາ**: ສົມທຽບບັນດາຫລັກການສໍາຄັນທີ່ທ່ານໄດ້ຮຽນຮູ້ຈາກພຣະຄໍາ ມະຣາໂກ 1:35 ກັບຊີວິດປະຈຸບັນຂອງທ່ານ.

---

ທ່ານຕ້ອງການປ່ຽນແປງຊີວິດຕົນເອງແນວໃດ?

---

## 4. <u>- ການນໍາມາປະຕິບັດ</u> - "ລົງມືປະຕິບັດ" - ຂ້າພະເຈົ້າຈະນໍາມາໃຊ້ໃນຊີວິດແນວໃດ?

- ການປ່ຽນແປງຕົນເອງ - ຄົ້ນຫາວ່າພຣະຄໍາພີສາມາດກະທໍາການຫຍັງໃນຊີວິດຂອງຂ້ານ້ອຍ ແລະ ອະທິຖານຂໍ**ພຣະວິນຍານບໍຣິສຸດ**ຊ່ວຍໃຫ້ເຮົາສາມາດປະຕິບັດຕາມພຣະຄໍາຂອງພຣະອົງ.

**<u>ການນໍາມາປະຕິບັດ</u>**: ທ່ານຈະນໍາເອົາບັນດາຫລັກການສໍາຄັນເຫລົ່ານີ້ມານໍາໃຊ້ເພື່ອປ່ຽນແປງຊີວິດຂອງທ່ານແນວໃດ? ທ່ານຈະລົງມືປ່ຽນແປງຕົນເອງເມື່ອໃດ?

---

# ແຜນການຂອງພຣະເຈົ້າສໍາລັບສາວົກຂອງພຣະອົງ - ພາກທີ2

ເປົ້າຫມາຍສູງສຸດຂອງອັກຄະສາວົກໂປໂລກໍຄືການປະກາດຂ່າວປະເສີດນີ້ເລື້ອຍໄປ ໃນບ່ອນທີ່ບໍ່ມີຜູ້ໃດເຄີຍອອກນາມຊື່ຂອງພຣະຄຣິດ ເພື່ອວ່າເຮົາຈະບໍ່ໄດ້ກໍ່ຂຶ້ນເທິງຮາກຖານຂອງຄົນອື່ນວາງໄວ້ກ່ອນແລ້ວ... ສະນັ້ນ, ຄົນທີ່ບໍ່ເຄີຍໄດ້ຮັບຄໍາບອກກ່າວເຖິງເລື່ອງຂອງພຣະອົງ ກໍຈະໄດ້ເຫັນ ແລະຄົນທີ່ບໍ່ເຄີຍໄດ້ຍິນນັ້ນກໍຈະເຂົ້າໃຈ. (ໂຣມ 15:20-21) . ຫລັງຈາກທີ່ໂປໂລໄດ້ປະກາດຂ່າວປະເສີດ ແລະໄດ້ຫລາຍຄົນມາເປັນສິດ, ໂປໂລໄດ ກັບຄືນໄປຫາສິດທັງຫລາຍເພື່ອ "ຫນູນໃຈໃຫ້ເຂົາ**ເຂັ້ມແຂງຂຶ້ນ** ແລະ **ຕັ້ງຫມັ້ນຄົງ**ໃນຄວາມເຊື່ອ". ອ່ານພຣະຄໍາ ກິຈະການ 14:21-22.




ອັກຄະສາວົກໂປໂລບໍ່ພຽງແຕ່ເປັນຫ່ວງໃນເລື່ອງການສ້າງສາວົກເທົ່ານັ້ນ, ແຕ່ທ່ານຕ້ອງການສິດທຸກຄົນໃຫ້ຕັ້ງຫມັ້ນຄົງຢູ່ ແລະ ເຂັ້ມແຂງຂຶ້ນ. ຄຳວ່າ "ເຂັ້ມແຂງ" ຫລື "ຕັ້ງຫມັ້ນຄົງ" ແມ່ນແປມາຈາກຄຳສັບເດີມຂອງພາສາກຣີກ "stërizõ" ເຊິ່ງມີຄວາມຫມາຍວ່າ "ເຮັດໃຫ້ແຂງແຮງຂຶ້ນ ຍຶດ ຫລື ມັດຕິດ". ຄຳນີ້ຊ່ວຍໃຫ້ເຮົາມີຄວາມເຂົ້າໃຈເຖິງສິ່ງທີ່ອາຈານໂປໂລຕ້ອງການຢາກໃຫ້ລູກສິດຂອງທ່ານເປັນ. ທ່ານຢາກໃຫ້ພວກເຂົາ "ຍຶດຕິດ" ຫລື "ຫມັ້ນຄົງຢູ່"ໃນຄວາມເຊື່ອຂອງພວກເຂົາ. ແທ້ຈິງແລ້ວ, ຄຳສັບນີ້ຫມາຍຄວາມເຖິງ "ການຊ່ວຍຊູ ຫລື ຜູກຍຶດບາງສິ່ງເພື່ອໃຫ້ມັນຍືນຕົ້ນຊື່ດ້ວຍຕົນເອງຫລືກາຍເປັນຕົ້ນທີ່ຕິດແຫນ້ນ ຈົນສາມາດຍືນຕົ້ນໄດ້ດ້ວຍຕົວຂອງມັນເອງ".

ຕົວຢ່າງ, ຄຳສັບເດີມນັ້ນ ແທ້ຈິງແລ້ວ ແມ່ນໃຊ້ເພື່ອອະທິບາຍຫລັກເສົາທີ່ໃຊ້ຄໍ້າເຄືອອາງຸ່ນ( ເບິ່ງຮູບດ້ານເທິງ). ສະນັ້ນ, ອາຈານໂປໂລ ຈຶ່ງຕ້ອງການຜູ້ທີ່ເຊື່ອໃຫມ່ແລະ ເຊື່ອເກົ່າ ກາຍເປັນຜູ້ທີ່ມີຄວາມຫມັ້ນຄົງ ແລະ ສາມາດຢູ່ໄດ້ດ້ວຍຕົນເອງ, ບໍ່ໂອນເອນໄປມາ ຫລື ຫວັ່ນໄຫວງ່າຍຍ້ອນຫລັກຄຳສອນປອມຫລື ຄູສອນປອມ.

ເພື່ອເສີມສ້າງຜູ້ທີ່ເຊື່ອໃຫ້ມີຄວາມເຂັ້ມແຂງ, ໂປໂລບໍ່ພຽງແຕ່ເດີນທາງໄປຢ້ຽມຢາມຄຣິສຕະຈັກຕ່າງໆເທົ່ານັ້ນ. ແຕ່ທ່ານໄດ້ຂຽນຈົດຫມາຍອະທິບາຍ ວິທີການສ້າງສາວົກໃຫມ່ແລະຜູ້ທີ່ເຊື່ອເກົ່າ. ດັ່ງທີ່ພວກເຮົາໄດ້ອ່ານບົດຮຽນທີ 1 ແລະ 2 ກໍຈະເຫັນວ່າພຣະເຈົ້າໄດ້ຊົງຈັດກຽມສິ່ງທີ່ສະງ່າງາມ ແລະ ພຽງພໍຕາມທີ່ເຮົາຕ້ອງການໂດຍຜ່ານຖ້ອຍຄຳຂອງພຣະເຈົ້າເພື່ອສ້າງຄວາມຫມັ້ນຄົງແກ່ສາວົກທຸກຄົນ. ທ່ານຮູ້ຈັກບໍ່ວ່າອາຈານໂປໂລໄດ້ຂຽນຈົດຫມາຍຈັກສະບັບເພື່ອໄປຫນູນໃຈພີ່ນ້ອງ? ຊຶ່ງຈົດຫລາຍເຫລົ່ານັ້ນໄດ້ບັນທຶກໄວ້ໃນພຣະຄຳພີໃຫມ່.ຄຳຕອບແມ່ນ: 13 ສະບັບ. ທ່ານສາມາດທ່ອງຈຳຈົດຫມາຍທັງ 13 ສະບັບທີ່ຂຽນໄວ້ໃນພຣະຄຳພີຫລືບໍ່? ເພື່ອຊ່ວຍໃຫ້ທ່ານມີຄວາມເຂົ້າໃຈຂະບວນການສ້າງຄວາມຫມັ້ນຄົງຂອງອາຈານໂປໂລ, ພວກເຮົາຈຶ່ງພາກັນມາລຽງຈົດຫມາຍແຕ່ລະສະບັບຂອງທ່ານຕາມລຳດັບເຫດການແລະເວລາທີ່ທ່ານຂຽນ. ການລຽງນີ້ ບໍ່ແມ່ນລຽງຕາມລຳດັບໃນພຣະຄຳພີ ເຊິ່ງຈະບັນທຶກສະບັບທີ່ຍາວທີ່ສຸດກ່ອນ ເຊັ່ນພຣະທຳໂຣມ ຫາສະບັບທີ່ສັ້ນທີ່ສຸດເຊັ່ນພຣະທຳຟີເລໂມນ.

ຈົດຫມາຍສະບັບຕ່າງໆຂອງທ່ານໂປໂລ ລຽງຕາມລຳດັບເວລາທີ່ທ່ານຂຽນ.



ທ່ານອາດກຳລັງຄິດສົງໃສແມ່ນບໍ່ວ່າ ເປັນຫຍັງຄືເຮັດແບບນີ້? ການແບ່ງຈົດຫມາຍຂອງໂປໂລຕາມລຳດັບເວລານັ້ນມີປະໂຫຍດແລະເປັນລະບົບລະບຽບ ເຊິ່ງຖືກແບ່ງອອກເປັນ3ຫມວດຫມູ່ດັ່ງຕໍ່ໄປນີ້:

**<u>ຈົດຫມາຍສ່ວນທຳອິດຂອງໂປໂລ</u> ( ໃຊ້ເພື່ອສ້າງຄວາມຫມັ້ນຄົງ ແລະ ປ້ອງກັນຮັກສາຂ່າວປະເສີດແຫ່ງ ພຣະຄຸນ)**

**ຄາລາເຕຍ**: ກັບຄືນສູ່ພຣະວິນຍານ, ຄວາມເຊື່ອ ແລະ ຂ່າວປະເສີດອັນບໍລິສຸດ.

1 **ແລະ** 2 **ໂກຣິນໂທ**: ຕັ້ງຫມັ້ນຄົງຢູ່ໃນຂ່າວປະເສີດ

1 **ໂກຣິນໂທ**: ການແບ່ງແຍກຖືກແກ້ໄຂໂດຍຜົນຂອງຂ່າວປະເສີດ

2 **ໂກຣິນໂທ**: ການປົກປ້ອງງານຮັບໃຊ້ ແລະ ວຽກປະກາດຂ່າວປະເສີດ

**ໂຣມ**: ສຳເລັດໃນການປະກາດເຖິງຄວາມເຊື່ອຂອງຄຣິສຕຽນ ແລະ ວຽກງານຂອງຂ່າວປະເສີດ

**<u>ຈົດຫມາຍສ່ວນກາງຂອງອັກຄະສາວົກໂປໂລ</u> ( ໃຊ້ເພື່ອຊ່ວຍໃຫ້ຄຣິສຕະຈັກຍຶດຫມັ້ນໃນແຜນການຂອງພຣະເຈົ້າ)**

**ເອເຟໂຊ**: ເຂົ້າໃຈຄວາມສັບຊ້ອນຂອງຄຣິສຕະຈັກ ແລະ ເປີດເຜີຍແຜນການຂອງພຣະຄຣິດ.

**ຟີລິປອຍ**: ການເປັນນ້ຳຫນຶ່ງໃຈດຽວກັນໃນຄຣິສຕະຈັກ ແລະການຂະຫຍາຍຕົວຂອງຂ່າວປະເສີດ

**ໂກໂລຊາຍ**: ສືບຕໍ່ ເອົາໃຈໃສ່ປະມຸກຂອງຕຣິສຕະຈັກ

**ຟີເລໂມນ**: ຄວາມຫມາຍດ້ານຄວາມສຳພັນໃນການເປັນນ້ຳຫນຶ່ງໃຈດຽວກັນເພື່ອເຮັດໃຫ້ຂ່າວປະເສີດມີການແຜ່ຂະຫຍາຍອອກໄປ

**<u>ຈົດຫມາຍສ່ວນສຸດທ້າຍຂອງອັກຄະສາວົກໂປໂລ</u> ( ໃຊ້ເພື່ອຈັດຄວາມເປັນລະບຽບແລະເຫມາະສົມພາຍໃນຄຣິສຕະຈັກຂອງພຣະເຈົ້າ)**

1 **ຕີໂມທຽວ**: ຄວາມເປັນລະບຽບ ແລະເຫມາະສົມຂອງສະມາຊິກໃນຄອບຄົວຂອງພຣະເຈົ້າ ກໍຄື ຄຣິສຕະຈັກຂອງ ພຣະອົງ

**ຕີໂຕ**: ດູແລການດຳເນີນງານຂອງຄຣິສຕະຈັກ ແລະ ການສັ່ງສອນຄົນກຸ່ມຕ່າງໆ

2 **ຕີໂມທຽວ**: ມອບຄຳສອນຕໍ່ໃຫ້ຄົນທີ່ສັດຊື່ແລະສາມາດເປັນຜູ້ນຳຄົນລຸ້ນຕໍ່ໄປ

ອາຈານໂປໂລ "ເປັນນາຍຊ່າງຜູ້ຊຳນານ" ໃນການສ້າງຜູ້ນຳ ( 1 ໂກຣິນໂທ 3:10) ທ່ານສາມາດເວົ້າໄດ້ວ່າ ຈົດຫມາຍຂອງທ່ານປຽບເຫມືອນການກໍ່ສ້າງຕຶກ ທີ່ວາງຮາກຖານໄວ້ແລ້ວຄືພຣະເຢຊູຄຣິດເຈົ້າ ສຳລັບຄອບຄົວຂອງພຣະອົງ. ທ່ານສາມາດເຫັນຕົວຢ່າງໄດ້ດັ່ງຕໍ່ໄປນີ້, ຈົດຫມາຍສະບັບທຳອິດ ຫລື ຈົດຫມາຍຫມວດທຳອິດ ແມ່ນຂຽນເພື່ອສ້າງຄວາມຫມັ້ນຄົງແກ່ຜູ້ເຊື່ອໃຫມ່ໃນພຣະຄຸນອັນບໍລິສຸດຂອງຂ່າວປະເສີດນັ້ນກໍແມ່ນພຣະເຢຊູຄຣິດ. ແຜນພາບນີ້ຈະຊ່ວຍອະທິບາຍຈົດຫມາຍຂອງອາຈານໂປໂລຕາມລຳດັບເຫດການ ແລະ ຫລັກສາສະຫນາສາດ.




ເນື່ອງຈາກວ່າອາຈານໂປໂລເປັນຊ່າງຜູ້ຊຳນານໃນການສ້າງຜູ້ກໍ່ຕັ້ງຄຣິສຕະຈັກ, ເຮົາຈະມາສັງເກດນຳກັນວ່າ ຈົດຫມາຍຂອງທ່ານປຽບເຫມືອນ "ເຄື່ອງມື" ຊະນິດໃດແນ່. ເຫມືອນກັນກັບຊ່າງໄມ້ ຫລື ຊ່າງກົນຈັກຕ້ອງຮູ້ວ່າ ເຄື່ອງມືໃດຄວນໃຊ້ກັບອາຊີບໃດໂດຍສະເພາະ, ດັ່ງນັ້ນ ສາວົກຕ້ອງຮຽນຮູ້ວ່າຈະໃຊ້ເຄື່ອງມືອັນໃດເພື່ອສ້າງໃຫ້ເຂົາມີຄວາມເຂັ້ມແຂງແລະຫມັ້ນຄົງໃນຖ້ອຍຄຳຂອງພຣະເຈົ້າ. ຈົ່ງສັງເກດເບິ່ງເຄື່ອງມືດັ່ງລຸ່ມນີ້ແລ້ວບອກລັກສະນະການໃຊ້ງານແຕ່ລະອັນ:




ເຖິງແມ່ນວ່າ ນີ້ອາດເບິ່ງຄືເປັນເລື່ອງງ່າຍ, ແຕ່ການຂາດຄວາມເຂົ້າໃຈແລະຂາດຄວາມສາມາດໃນການໃຊ້ຖ້ອຍຄຳຂອງພຣະເຈົ້າວ່າເປັນສະເຫມືອນເຄື່ອງມືນັ້ນ ແມ່ນສຳຄັນຫລາຍ. ເຊັ່ນດຽວກັນກັບຊ່າງໄມ້ ແລະຊ່າງກົນຈັກຮູ້ຈັກເຄື່ອງມືກຸ້ມຄ້າຂອງພວກເຂົາ, ດັ່ງນັ້ນ ສົມຄວນຫລືບໍ່ທີ່ສາວົກທຸກຄົນຕ້ອງຮຽນ ແລະຮູ້ການນຳໃຊ້ຖ້ອຍຄຳຂອງພຣະເຈົ້າ. ພຣະອົງຊົງກະລຸນາປະທານເຄື່ອງມືທຸກອັນທີ່ເຮົາຕ້ອງການເພື່ອຈັດການກັບບັນຫາສາລະພັດທີ່ເຮົາອາດປະເຊີນໃນເວລາເຮົາຕິດຕາມພຣະຄຣິດ. (2 ຕີໂມທຽວ 3:16-17)

ຕອນນີ້ ເຮົາຈະຍົກເອົາຈົດຫມາຍສະບັບຫນຶ່ງ ຫລື ເຄື່ອງມືຢ່າງຫນຶ່ງ ຈາກຈົດຫມາຍທັງສາມຫມວດຂອງອາຈານໂປໂລ ເພື່ອຊ່ວຍໃນການສ້າງຄວາມຫມັ້ນຄົງ ແລະເຮັດໃຫ້ທ່ານກາຍເປັນສາວົກທີ່ເຂັ້ມແຂງ. ຕົວຢ່າງ, ໃນບົດທີ8 ພວກເຮົາຈະໃຊ້ພຣະຄຳຄາລາເຕຍ ຈາກຈົດຫມາຍສ່ວນທຳອິດ ເພື່ອສ້າງທ່ານໃຫ້ຫມັ້ນຄົງໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ. ຕໍ່ໄປ ແມ່ນບົດທີ9, ເຮົາຈະໃຊ້ພຣະຄຳ ເອເຟໂຊ ເຊິ່ງເປັນຈົດຫມາຍສ່ວນກາງ ເພື່ອສ້າງທ່ານໃຫ້ມີຄວາມເປັນນ້ຳຫນຶ່ງໃຈດຽວກັນໃນເປົ້າຫມາຍແລະແຜນການອັນຫຍິ່ງໃຫຍ່ຂອງພຣະເຈົ້າ. ທຸດທ້າຍ, ແມ່ນບົດທີ 10, ເຮົາຈະໃຊ້ພຣະຄຳ 1ຕີໂມທຽວ ເຊິ່ງມາຈາກຈົດຫມາຍສ່ວນສຸດທ້າຍ ເພື່ອຈັດລະບຽບແລະຄວາມເຫມາະສົມຂອງຄອບຄົວຂອງພຣະເຈົ້າເຮົາຈະມາເລີ່ມຕົ້ນຈາກຮາກຖານທີ່ສຳຄັນທີ່ສຸດຕາມຫລັກຂໍ້ເຊື່ອຂອງຊາວຄຣິສຕຽນ ນັ້ນກໍ່ຄື ຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ.

# IV. ສາວົກຕັ້ງຫມັ້ນຄົງຢູ່ໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ

## ບົດທີ 8

| ຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ<br>**ຈົດຫມາຍສ່ວນສຸດທ້າຍ** | 48-57 AD |
|---|---|

**ຄາລາເຕຍ**: ເປັນຫນຶ່ງໃນຈົດຫມາຍສ່ວນທຳອິດ ເຊິ່ງຂຽນຂຶ້ນມາເພື່ອສ້າງຄວາມຫມັ້ນຄົງໃຫ້ແກ່ຜູ້ທີ່ເຊື່ອໃນຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ. ຈົດຫມາຍສະບັບນີ້ສອນໃຫ້ຮູ້ວ່າ ຜູ້ທີ່ເຊື່ອຖືກໄຖ່ໃຫ້ພົ້ນແລ້ວ ແລະ ເປັນຄົນຊອບທຳໂດຍພຣະຄຸນໃນທາງຄວາມເຊື່ອ, ບໍ່ແມ່ນໂດຍການກະທຳ ຫລືການປະຕິບັດຕາມກົດບັນຍັດ. ຈົດຫມາຍສະບັບນີ້ ຍັງເປີດເຜີຍໃຫ້ຮູ້ວ່າພຣະວິນຍານບໍຣິສຸດເຈົ້າຊົງສະຖິດຢູ່ກັບຜູ້ທີ່ເຊື່ອທັງຫລາຍ. **ຫມາຍເຫດ: ໃນປຶ້ມຄູ່ມືເຫລັ້ມນີ້ ມີບົດຮຽນໃນຫົວຂໍ້ ການສຶກສາພຣະຄຳພີຄາລາເຕຍ. ບົດທີ13**

**ການສຶກສາພຣະຄຳພີ ແລະ ການໄຄ່ຄວນ**: ຈົ່ງອ່ານຄຳຖາມ ແລະ ຂໍ້ພຣະຄຳພີຕໍ່ໄປນີ້ ແລ້ວຂຽນຄຳຕອບໃສ່ບ່ອນວ່າງຫລັງຈາກນັ້ນທ່ານຈົ່ງຄຶດໄຄ່ຄວນ ແລະ ສະຫລຸບຄວາມຄຶດເຫັນກ່ຽວກັບຄວາມຫມາຍຂອງພຣະຄຳແຕ່ລະບົດ. ໃນຕອນທ້າຍຂອງການສຶກສາພຣະຄຳ, ຂໍໃຫ້ທ່ານສົນທະນາກັບຄົນອື່ນ ແລ້ວນຳເອົາສິ່ງທີ່ຕົນເອງໄດ້ຮຽນຮູ້ນັ້ນມາປະຕິບັດໃນຊີວິດ.

**ບົດທີ1:1-24 - ໂປໂລ ແລະ ຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ**

1. ອັກຄະສາວົກໂປໂລບໍ່ໄດ້ມາຈາກໃຜແຕ່ງຕັ້ງ (1)? ____________________
   ມາຈາກຜູ້ໃດແຕ່ງຕັ້ງ? ____________________
2. ພຣະຄຸນ ແລະ ສັນຕິສຸກມາຈາກຜູ້ໃດ(3)? ____________________
   ໂປໂລໄດ້ກ່າວເຖິງພຣະຍເຍຊູຄຣິດວ່າແນວໃດ(4)? ____________________
   ____________________
3. ເປັນຫຍັງໂປໂລຈຶ່ງຮູ້ສຶກປະຫລາດໃຈ(6)? ____________________
   ____________________
4. ທ່ານຈະຈັດການຄົນທີ່ບິດເບືອນຂ່າວປະເສີດແນວໃດ(8-9)? ____________________
   ໂປໂລກ່າວເຖິງຄຳນີ້ຈັກເທື່ອ? ____________________
5. ທ່ານຮູ້ໄດ້ແນວໃດວ່າໂປໂລປາດຖະຫນາຄວາມພໍໃຈຈາກພຣະເຈົ້າ(10)? ____________________
   ____________________
   ໂປໂລຢາກໄດ້ຄວາມພໍໃຈຈາກມະນຸດຫລືພຣະເຈົ້າ? ____________________
6. ໂປໂລໄດ້ຮັບຂ່າວປະເສີດດ້ວຍວິທີໃດ(11-12)? ____________________
7. ໂປໂລມີຄວາມກະຕືລືລົ້ນໃນເລື່ອງໃດ(13-14)? ____________________
8. ໂປໂລໄດ້ຖືກເລືອກໄວ້ ຕັ້ງແຕ່ເວລາໃດ(15-16)? ____________________
   ລາວໄດ້ຖືກເອີ້ນເພື່ອໃຫ້ເຮັດຫຍັງ? ____________________

ພຣະອົງຊົງພໍພຣະໄທທີ່ຈະເຮັດຫຍັງແດ່ທ່ານໂປໂລ? ______________________________

ເປັນຫຍັງພຣະອົງຈຶ່ງຊົງໂຜດສຳແດງພຣະບຸດຂອງພຣະອົງແກ່ໂປໂລ? ____________________

9. ພວກເຂົາໄດ້ເວົ້າເຖິງການປ່ຽນແປງຂອງໂປໂລແນວໃດ(23)? ________________________

________________________________________________

10. ຜູ້ໃດໄດ້ຮັບຄຳຖວາຍກຽດສັນລະເສີນ ເພາະດ້ວຍໂປໂລ(24)? _______ ຍ້ອນຫຍັງ? ___________

**ການໄຕ່ຕອນ**: ຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າໄດ້ຖືກເປີດເຜີຍຜ່ານໂປໂລແນວໃດ? ຈົ່ງສະຫລຸບຄຳຕອບຂອງທ່ານ: ________________________________________

________________________________________________

**ບົດທີ2:1-21 - ພຣະຄຸນ ແລະ ກົດບັນຍັດ**

1. ເປັນຫຍັງໂປໂລຈຶ່ງກັບຄືນໄປທີ່ນະຄອນເຢຣູຊາເລັມ(1-3)? ________________________

________________________________________________

2. ພີ່ນ້ອງທີ່ແປກປອມໄດ້ລັກລອບເຂົ້າມາເຮັດຫຍັງ(4-5)? ____________________________

ເປັນຫຍັງພວກເຂົາຈຶ່ງເຂົ້າມາສອດແນມ? ______________________________________

ເປັນຫຍັງໂປໂລຈຶ່ງບໍ່ໄດ້ອ່ອນຍອມຕໍ່ພວກເຂົາ? __________________________________

3. ເປັນຫຍັງຢາໂກໂບ, ເກຟາ ແລະ ໂຢຮັນຈຶ່ງຍື່ນມືຂວາເພື່ອຮ່ວມງານກັບໂປໂລ( 6-9)? __________

________________________________________________

ໂປໂລຈະໄປຫາໃຜ? ________________________________________________

4. ເປັນຫຍັງໂປໂລຈຶ່ງຕໍ່ວ່າເປໂຕ(11-13)? ______________________________________

________________________________________________

________________________________________________

5. ເກີດຫຍັງຂຶ້ນກັບການດຳເນີນຊີວິດຂອງພວກເຂົາ(14)? ___________________________

6. ຄົນອະທຳຈະກາຍເປັນຄົນຊອບທຳຕໍ່ຫນ້າພຣະເຈົ້າແນວໃດ(15-16)? _____________________

ມີມະນຸດຄົນໃດບໍ່ ທີ່ສາມາດກາຍເປັນຄົນຊອບທຳໂດຍການປະຕິບັດຕາມກົດບັນຍັດ? _________

ຍ້ອນຫຍັງ? ________________________________________________

7. ຫາກທ່ານກາຍເປັນຄົນຊອບທຳໂດຍພຣະຄຣິດ,ແມ່ນໃຜຊົງມີຊີວິດຢູ່ໃນເຮົາ(19-21)? _________

ເຮົາຈະດຳລົງຊີວິດໃນຮ່າງກາຍນີ້ແນວໃດ? ______________________________________

ສິ່ງໃດອາດເຮັດໃຫ້ພຣະຄຸນຂອງພຣະເຈົ້າເສຍໄປລ້າໆ? ______________________________

**ການໄຕ່ຕອນ**: **ອັນໃດຄືຄວາມແຕກຕ່າງລະວ່າງຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ແລະ ກົດບັນຍັດ? ຈົ່ງສະຫລຸບຄຳຕອບຂອງທ່ານ**: ________________________________________

________________________________________________

________________________________________________

**<u>ບົດທີ 3:1-29</u> - ພຣະຄຸນ ແລະ ການປະຕິບັດ**

1. ຊາວຄາລາເຕຍໄດ້ຮັບພຣະວິນຍານດ້ວຍວິທີໃດ(1-2)? ____________________
   ເມື່ອຕັ້ງຕົ້ນໂດຍພຣະວິນຍານແລ້ວ, ພວກເຂົາພະຍາຍາມເປັນຄົນດີທີ່ສຸດແນວໃດ? __________
2. ພຣະເຈົ້າຊົງປະທານພຣະວິນຍານແລະ ສຳແດງຣິດອຳນາດແນວໃດ(5)? __________
3. ທ່ານອັບຣາຮາມຖືກຮັບວ່າເປັນຄົນຊອບທຳຢ່າງໃດ(6)? __________
4. ຜູ້ໃດໄດ້ຮັບພອນໃຫ້ເປັນເຊື້ອສາຍຂອງອັບຣາຮາມ(7-9)? __________
5. ຖ້າທ່ານອາໃສການປະຕິບັດຕາມກົດບັນຍັດ ທ່ານກໍຢູ່ໃຕ້ຫຍັງ(10)? __________
6. ຜູ້ທີ່ຊົງຖືວ່າເປັນຄົນຊອບທຳຈະມີຊີວິດແນວໃດ(11)? __________
7. ຜູ້ໃດຊົງຍອມຖືກສາບແຊ່ງແທນເຮົາ(13)? __________
8. ພຣະພອນທາງອັບຣາຮາມຈະມາເຖິງຊາວຄາລາເຕຍແນວໃດ(14)? __________
   ທ່ານຈະໄດ້ຮັບພຣະພອນນີ້ໂດຍທາງຜູ້ໃດ? __________
9. ແມ່ນໃຜຄືລູກຫລານຂອງອັບຣາຮາມ(15-19)? __________ ພຣະເຈົ້າໄດ້ຊົງໂຜດປະທານມໍລະດົກແກ່ອັບຣາຮາມ – ໂດຍທາງກົດບັນຍັດ ຫລື ໂດຍທາງພຣະສັນຍາ? __________ ຖ້າໂດຍທາງພຣະສັນຍາ, ແລ້ວເປັນຫຍັງພຣະເຈົ້າຈຶ່ງປະທານກົດບັນຍັດ? __________
10. ພຣະສັນຍາໄດ້ໃຫ້ໄວ້ກັບຄົນທີ່ຢູ່ພາຍໃຕ້ອຳນາດຂອງຄວາມຜິດບາບແນວໃດ(22)? __________
    ພຣະສັນຍານັ້ນຊົງມອບແກ່ຜູ້ໃດ? __________
11. ເປັນຫຍັງຈຶ່ງຊົງປະທານກົດບັນຍັດ(24-25)? __________
    ຍ້ອນຫຍັງກົດບັນຍັດຈຶ່ງບໍ່ໄດ້ເປັນຜູ້ດູແລເຮົາຕໍ່ໄປ? __________

***<u>ການໄຄ່ຄວນ</u>***: ຄົນອະທຳຈະປະກາດຕົນເອງວ່າເປັນຜູ້ຊອບທຳຕໍ່ຫນ້າພຣະເຈົ້າດ້ວຍວິທີໃດ? ຈົ່ງສະຫລຸບຄຳຕອບຂອງທ່ານ: ____________________

____________________

____________________

**<u>ບົດທີ 4:1-31</u> - ພຣະຄຸນ ແລະ ການຊົງໄຖ່ໃຫ້ພົ້ນ**

1. ໃນເມື່ອຄົບກຳນົດເວລາແລ້ວ, ພຣະເຈົ້າໄດ້ຊົງໃຊ້ຜູ້ໃດມາ(4-5)? __________
   ຍ້ອນຫຍັງ? __________
2. ພຣະເຈົ້າຊົງໃຊ້ຜູ້ໃດເຂົ້າມາໃນໃຈຂອງພວກເຮົາ(6)? __________
3. (7) ເຫດສັນນັ້ນ, ພວກເຈົ້າຈຶ່ງບໍ່ເປັນ ________ ແຕ່ເປັນ ________ ແລະກໍເປັນ ________
4. ໃນເມື່ອກ່ອນເຈົ້າທັງຫລາຍຍັງບໍ່ຮູ້ຈັກພຣະເຈົ້າ ພວກເຈົ້າເປັນໃຜ(8-9)? __________
   ຄວາມສຳພັນໃຫມ່ລະຫວ່າງທ່ານ ກັບພຣະເຈົ້າ ເປັນແນວໃດ? __________
5. ໂປໂລຢາກໃຫ້ໃຜໄດ້ເປັນທີ່ສ້າງຂຶ້ນຢູ່ໃນຊາວຄາລາເຕຍ(19)? __________

6. ອັບຣາຮາມມີລູກຊາຍສອງຄົນ( 22-26). ລູກແຕ່ລະຄົນເກີດຈາກຍິງແບບໃດ? ________________
ແລະ ________________ ລູກຊາຍແຕ່ລະຄົນເກີດແບບໃດ(23)? ________________________
ແລະ ________________________ ພັນທະສັນຍາສອງຢ່າງທີ່ມອບໃຫ້ລູກຊາຍທັງສອງຄົນນັ້ນມີ
ຫຍັງແນ່( 25-26)? ______________________ ແລະ ______________________________

7. ຈົ່ງສົມທຽບແລະປຽບທຽບລູກຊາຍທັງສອງຄົນ ຂໍ້ 28-30. ______________________________

______________________________________________________________________

8. ເຫດສັນນັ້ນ, ພີ່ນ້ອງທັງຫລາຍເອີຍ ພວກເຮົາບໍ່ເປັນລູກຂອງ(31) _________ ແຕ່ເປັນລູກຂອງຍິງ

______________________________________________________________________

**<u>ການໄຄ່ຄອນ</u>**: ອັກຄະສາວົກໂປໂລພິສູດໃຫ້ເຫັນແນວໃດ ວ່າ ຄວາມລອດພົ້ນໄດ້ມາໂດຍຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ບໍ່ແມ່ນໂດຍກົດບັນຍັດ. ຈົ່ງສະຫລຸບຄຳຕອບຂອງທ່ານ: ____________________

______________________________________________________________________

______________________________________________________________________

## <u>ບົດທີ 5:1-26</u> - ພຣະຄຸນ ແລະ ພຣະວິນຍານບໍຣິສຸດ

1. ເປັນຫຍັງພຣະຄຣິດຈຶ່ງໄດ້ປົດປ່ອຍເຮົາໃຫ້ເປັນອິດສະຫລະ(1)? ______________________
ສະນັ້ນ, ເປັນຫຍັງທ່ານຈຶ່ງຄວນຕັ້ງຫມັ້ນຄົງຢູ່ໃນເສລີພາບນັ້ນ? ______________________

______________________________________________________________________

2. ສິ່ງໃດເປັນເຫດໃຫ້ເຮົາໄດ້ຫລຸດຕົກຈາກພຣະຄຸນເສຍແລ້ວ(4)? ______________________
3. ສິ່ງດຽວທີ່ສຳຄັນທີ່ສຸດຄືຫຍັງ ອີງໃສ່ຂໍ້ທີ 6? ______________________________
4. ແມ່ນໃຜຂັດຂວາງພວກເຈົ້າບໍ່ໃຫ້ເຊື່ອຟັງຄວາມຈິງ(7)? ______________________
ຍ້ອນຫຍັງ? ______________________________________________________
5. ການທີ່ໄມ້ກາງແຂນເປັນເຫດໃຫ້ສະດຸດໃຈນັ້ນ ຖືກຍົກເລີກໄດ້ແນວໃດ(11)? ____________
6. ກົດບັນຍັດທັງຫມົດກໍລວມເຂົ້າໃນຂໍ້ດຽວຄືແນວໃດ(14)? ______________________
7. ເຮົາຈະບໍ່ໄດ້ເຮັດຕາມສັນດານຕັນຫາມະນຸດໄດ້ແນວໃດ(16)? ______________________
ການເດີນກັບພຣະວິນຍານນັ້ນມີຄວາມຫມາຍຄືແນວໃດ? ______________________
8. ແມ່ນຫຍັງຕໍ່ສູ້ກັນ(17)? ______________________________________________
ເປັນຫຍັງຈຶ່ງມີການຕໍ່ສູ້ກັນ? ______________________________________________

______________________________________________________________________

9. ພວກເຈົ້າຈະບໍ່ຢູ່ໃຕ້ກົດບັນຍັດໄດ້ແນວໃດ(18)? ______________________________
10. ກິດຈະການແຫ່ງສັນດານມະນຸດນັ້ນປາກົດແຈ້ງຫຍັງແນ່(19-21)? ______________________

______________________________________________________________________

11. ຜົນຂອງພຣະວິນຍານນັ້ນຄືຫຍັງແນ່(22-23)? ______

12. ສ່ວນພວກທີ່ຢູ່ໃນພຣະເຍຊູຄຣິດເຈົ້ານັ້ນ ຈະເປັນແນວໃດ(24)? ______

13. ຖ້າພວກເຮົາມີຊີວິດຢູ່ໂດຍພຣະວິນຍານ,ເຮົາຄວນດຳເນີນຊີວິດແນວໃດ(25)? ______

***<u>ການໄຄ່ຄວນ</u>***: ການດຳເນີນຊີວິດໂດຍພຣະວິນຍານບໍຣິສຸດ ແລະ ການເຮັດຕາມຕັນຫາມະນຸດນັ້ນ ແຕກຕ່າງກັນແນວໃດ? ຈົ່ງສະຫລຸບຄຳຕອບຂອງທ່ານ: ______

**<u>ບົດທີ 6: 1-18</u> - ພຣະຄຸນ ແລະ ການຖວາຍກຽດແດ່ພຣະເຈົ້າ**

1. ຖ້າຫາກມີຜູ້ໃດຫລົງໃນຄວາມຜິດບາບ, ຄວນມີຜູ້ໃດຊ່ວຍລາວ (1)? ______
   ຜູ້ທີ່ຢູ່ຝ່າຍພຣະວິນຍານແມ່ນຜູ້ແນວໃດ? ______
   ການເປັນຄົນຝ່າຍ "ພຣະວິນຍານ" ມີຄວາມສຳຄັນແນວໃດ? ______
   ແຕ່ທ່ານຕ້ອງຄອຍລະວັງຜູ້ໃດ? ______ ຍ້ອນຫຍັງ? ______
2. ທ່ານສາມາດຫລອກລວງຕົນເອງໄດ້ແນວໃດ(3)? ______
3. ທ່ານຕ້ອງເຮັດແນວໃດກັບຊີວິດຂອງທ່ານ(4)? ______
4. ຫາກທ່ານຫວ່ານຕາມຕັນຫາຂອງສັນດານມະນຸດ, ທ່ານຈະໄດ້ເກັບກ່ຽວສິ່ງໃດ(7-9)? ______
   ຖ້າທ່ານຫວ່ານຕາມພຣະວິນຍານ, ທ່ານຈະໄດ້ເກັບກ່ຽວສິ່ງໃດ? ______
   ຍ້ອນຫຍັງທ່ານຈຶ່ງບໍ່ຄວນທໍ້ຖອຍ(9)? ______
   ສະນັ້ນ, ຢ່າໃຫ້ພວກເຮົາອິດເມື່ອຍໃນການ ______ (9)
5. ເປັນຫຍັງພວກເຂົາຈຶ່ງຮັບພິທີຕັດ(12-13)? ______
6. ສິ່ງດຽວທີ່ທ່ານສາມາດອວດອ້າງໄດ້ນັ້ນ ຄືຫັຍງ(14)? ______
7. ແຕ່ມີສິ່ງຫນຶ່ງທີ່ສຳຄັນ ນັ້ນຄືຫັຍງ(15)? ______ ທ່ານຄິດວ່າແນວໃດກ່ຽວກັບການໄດ້ຖືກ "ສ້າງຂຶ້ນໃຫມ່"? ______
8. ຜູ້ທີ່ປະຕິບັດຕາມກົດຢ່າງນີ້ ຈະເປັນແນວໃດ(16)? ______

**<u>ການໄຄ່ຄອນ:</u> ຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ນໍາການຖວາຍກຽດແດ່ພຣະເຈົ້າແນວໃດ ແລະ ເຊິ່ງບໍ່ແມ່ນການໃຫ້ກຽດມະນຸດຄົນໃດຫນຶ່ງ. ຈົ່ງສະຫລຸບຄໍາຕອບຂອງທ່ານ:** ________________________

________________________________________________________________

________________________________________________________________

________________________________________________________________

________________________________________________________________

**<u>ການສົນທະນາ:</u>** ປຽບທຽບລະວ່າງຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ກັບກົດບັນຍັດແລະ ການປະຕິບັດຕາມກົດບັນຍັດນັ້ນ. ________________________________________

________________________________________________________________

________________________________________________________________

________________________________________________________________

ຈົ່ງສົມທຽບຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າໃນພຣະຄໍາພີຄາລາເຕຍກັບຊີວິດຂອງທ່ານ. ມີຄໍາແນະນໍາອັນໃດທີ່ທ່ານໄດ້ຮັບຈາກການສົນທະນາກັບພີ່ນ້ອງຄົນອື່ນ, ຈົ່ງຂຽນຄໍາຕອບລົງ ______________

________________________________________________________________

________________________________________________________________

________________________________________________________________

________________________________________________________________

ທ່ານຢາກປ່ຽນແປງຊີວິດຂອງຕົນເອງດ້ານໃດ ເພື່ອໃຫ້ທ່ານຫມັ້ນຄົງຢູ່ໃນພຣະຄຸນແຫ່ງຂ່າວປະເສີດຂອງພຣະເຈົ້າ? ________________________________________

________________________________________________________________

________________________________________________________________

________________________________________________________________

________________________________________________________________

**<u>ການນໍາມາປະຕິບັດ</u>**: ທ່ານຈະປ່ຽນແປງຕົນເອງດ້ວຍວິທີໃດ ແລະ ເມື່ອໃດ? ____________________

________________________________________________________________

________________________________________________________________

________________________________________________________________

__ຍັງມີຈົດຫມາຍອີກ 5 ສະບັບ ໃນບັນດາຈົດຫມາຍສ່ວນທໍາອິດຂອງອາຈານໂປໂລ ( 1 ແລະ 2ເທສະໂລນິກ, 1 ແລະ 2ໂກຣິນໂທ, ແລະ ໂຣມ). ທ່ານສາມາດເລືອກເອງໄດ້ວ່າຈະສຶກສາພຣະຄໍາເຫລົ່ານີ້ຫລືບໍ່ ເຊິ່ງມີໃນປຶ້ມຄູ່ມືນີ້ ຄື "ຄູ່ມືແຜນການຂອງພຣະເຈົ້າສໍາລັບສາວົກຂອງພຣະອົງ"

# V. ສາວົກຕັ້ງຫມັ້ນຄົງໃນແຜນການອັນຖາວອນຂອງພຣະເຈົ້າ

## ບົດທີ ໑




**ເອເຟໂຊ** ຄືຈົດຫມາຍສະບັບທຳອິດຂອງຫນັງສືສ່ວນທີສອງທີ່ອາຈານໂປໂລຂຽນຕອນເພິ່ນຢູ່ໃນຄຸກ ເພື່ອສ້າງຄວາມຫມັ້ນຄົງ ແລະ ທ້ອນໂຮມບັນດາຜູ້ທີ່ເຊື່ອໃຫ້ເປັນກາຍອັນດຽວກັນ ແລະ ແຜນການອັນຖາວອນຂອງພຣະ ຄຣິດເຊິ່ງຖືກປົດບັງໄວ້ໃນອະດີດຜ່ານມາ ແຕ່ປະຈຸບັນໄດ້ຖືກເປີດເຜີຍແລ້ວ. ໂປໂລອະທິບາຍເຖິງຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ວ່າມີຜົນແນວໃດກັບຊີວິດສ່ວນຕົວແຕ່ລະຄົນ, ຕໍ່ຄອບຄົວ ແລະ ຕໍ່ຄຣິສຕະຈັກ ກ່ຽວກັບການເປີດເຜີຍແຜນການອັນຍິ່ງໃຫຍ່ໂດຍຣິດອຳນາດຂອງພຣະອົງທີ່ຊົງກະທຳໃນເຮົາ.

**ການສຶກສາພຣະຄຳພີ ແລະ ການໄຄ່ຄວນ**: ຈົ່ງອ່ານຄຳຖາມ ແລະ ຂໍ້ພຣະຄຳຕໍ່ໄປນີ້ ແລ້ວຕື່ມຄຳຕອບໃສ່ບ່ອນວ່າງ. ຫລັງຈາກນັ້ນໃຫ້ທ່ານໄຄ່ຄວນ ແລະ ສະຫລຸບວ່າ ແຕ່ລະບົດມີຄວາມຫມາຍແນວໃດ. ໃນຕອນທ້າຍຂອງການຮຽນ, ທ່ານຈະໄດ້ສົນທະນາກັບຜູ້ອື່ນ ແລ້ວນຳເອົາບົດຮຽນທີ່ທ່ານໄດ້ນັ້ນໄປນຳໃຊ້ກັບຊີວິດຂອງທ່ານເອງ.

**ເອເຟໂຊ 1:1-23 - ພຣະພອນ ແລະ ມໍລະດົກ ໃນແຜນການຂອງພຣະຄຣິດ.**

1. ຜູ້ໃດຊົງປະທານພອນແກ່ທ່ານໂດຍພຣະຄຣິດ(3)? ____________________
   ພຣະອົງຊົງປະທານພອນຫຍັງແດ່ທ່ານ? ____________________
2. ໃນພຣະຄຣິດນັ້ນ ພຣະອົງໄດ້ຊົງເລືອກທ່ານໄວ້ຕັ້ງແຕ່ເວລາໃດ(4)? ____________________
   ເປັນຫຍັງພຣະເຈົ້າຈຶ່ງເລືອກທ່ານ? ____________ ແລະ ____________________
3. ພຣະອົງໄດ້ຊົງຄາດຫມາຍຫຍັງສຳລັບທ່ານ(5)? ____________________
   ເປັນຫຍັງຈຶ່ງໃຫ້ທ່ານເປັນບຸດຂອງພຣະອົງ(6)? ____________________
4. ດ້ວຍໂລຫິດຂອງພຣະອົງນັ້ນ ທ່ານໄດ້ຮັບຫຍັງ(7)? ____________________
   ການໄຖ່ໃຫ້ພົ້ນມີຄວາມຫມາຍວ່າແນວໃດ? ____________________
5. ແຜນການອັນເລິກລັບທີ່ພຣະເຈົ້າໃຫ້ທ່ານຮູ້ຈັກແມ່ນແນວໃດ(9-10)? ____________________
   ____________________
6. ໃນພຣະອົງນັ້ນ, ທ່ານໄດ້ຮັບສິ່ງໃດ(11)? ____________________
7. ພຣະເຈົ້າຄາດຫມາຍໃຫ້ທ່ານເຮັດຫຍັງ(11-12)? ____________________
8. ທ່ານໄດ້ຖືກປະທັບຕາຫມາຍໄວ້ໂດຍໃຜ(13)? ____________________
   ພຣະວິນຍານບໍຣິສຸດໄດ້ມັດຈຳເຮົາເລື່ອງໃດ(14)? ____________________

9. ໂປໂລມີຄວາມຮູ້ສຶກແນວໃດຕໍ່ຄວາມເຊື່ອແລະຄວາມຮັກຂອງຊາວເມືອງເອເຟໂຊ(16)? __________

10. ໂປໂລຕ້ອງການໃຫ້ຊາວເອເຟໂຊຮູ້ຈັກສິ່ງໃດ(18-19)? __________

__________

11. ພຣະອົງໄດ້ຊົງແຕ່ງຕັ້ງໃຫ້ພຣະບຸດຂອງພຣະອົງເປັນຫຍັງແກ່ຄຣິສຕະຈັກ(22)? __________

__________

ຄຣິສຕະຈັກແມ່ນຫຍັງ(23)? __________

***ການໄຕ່ຕອນ:*** ພຣະພອນ ແລະ ມໍລະດົກທີ່ທ່ານໄດ້ຮັບໂດຍພຣະເຢຊູຄຣິດມີຫຍັງແດ່? ຈົ່ງສະຫລຸບຄໍາຕອບຂອງທ່ານ: __________

__________

**ເອເຟໂຊ 2: 1-22 - ຖານະໃຫມ່ຂອງທ່ານໃນແຜນການຂອງພຣະຄຣິດ**

1. ອີງຕາມບົດທີ 2:1-21 ຈົ່ງອະທິບາຍເຖິງສະພາບໃນອະດີດຜ່ານມາຂອງທ່ານວ່າເປັນຄົນຢ່າງໃດ ກ່ອນໄດ້ຮັບການໄຖ່ໃຫ້ພົ້ນ: __________

__________

__________

2. ຕອນນີ້, ຈົ່ງອະທິບາຍເຖິງສະພາບຂອງທ່ານວ່າເປັນຄົນຢ່າງໃດໃນພຣະຄຣິດ (2:1-21): __________

__________

__________

3. ທ່ານຖືກກໍ່ຂຶ້ນໃຫ້ເປັນຫຍັງ(2:22)? __________

***ການໄຕ່ຕອນ:*** ຖານະເກົ່າ ແລະ ຖານະໃຫມ່ຂອງທ່ານເມື່ອມາເປັນໄພ່ພົນໃນພຣະຄິດເປັນແນວໃດ? ຈົ່ງສະຫລຸບຄໍາຕອບຂອງທ່ານ: __________

__________

__________

**ເອເຟໂຊ ບົດທີ 3: 1-21 - ຄໍາພາວັນນາອະທິຖານເພື່ອແຜນການອັນຖາວອນຂອງພຣະເຈົ້າ**

1. ໂປໂລຮູ້ແຜນການອັນເລິກລັບໄດ້ແນວໃດ(3)? __________
2. ພຣະອົງໄດ້ຊົງເປີດເຜີຍແຜນການໃຫ້ແກ່ຜູ້ໃດ(5)? __________
3. ແຜນການອັນເລິກລັບນັ້ນແມ່ນຫຍັງ?(6)? __________

__________

4. ເປັນຫຍັງພຣະເຈົ້າຈິ່ງໂຜດປະທານພຣະຄຸນໃຫ້ແກ່ໂປໂລ(8)? __________

ແລະ(9) __________

5. ພຣະເຈົ້າຈະໃຫ້ໄດ້ຮູ້ຫຍັງໂດຍຜ່ານຄຣິສຕະຈັກ(10)? __________
6. ພຣະເຈົ້າໄດ້ກະທໍາຕາມພຣະປະສົງອັນຖາວອນໂດຍຜູ້ໃດ(11)? __________

7. ໃນພຣະອົງນັ້ນ, ພວກເຮົາມີຫຍັງ(12)? ______

8. ພຣະອົງຊົງປະທານຫຍັງແກ່ທ່ານ ໂດຍເດດພຣະວິນຍານບໍຣິສຸດຕາມຄວາມອຸດົມສົມບູນແຫ່ງພຣະສະຫງ່າຣາສີຂອງພຣະອົງ(16)? ______ ຢູ່ໃສ? ______

9. ໂປໂລຕ້ອງການໃຫ້ເຮົາເຂົ້າໃຈຫຍັງ(18-19)? ______

______

ໂປໂລຢາກໃຫ້ເຮົາເຕັມດ້ວຍຫຍັງ? ______

10. ພຣະເຈົ້າສາມາດກະທຳການຫຍັງພາຍໃນຕົວທ່ານ(20)? ______

______ ດ້ວຍວິທີໃດ? ______

ເພື່ອຖວາຍພຣະກຽດຕິຍົດແກ່ຜູ້ໃດໃນຄຣິສຕະຈັກ(21)? ______

**ການໄຕ່ຕອງ**: ຄຳພາວັນນາອະທິຖານຂອງອັກຄະສາວົກໂປໂລທີ່ມີຕໍ່ຄຣິສຕະຈັກ ເຊິ່ງແມ່ນແຜນການອັນຖາວອນຂອງພຣະເຈົ້າ ມີຄືແນວໃດ? ຈົ່ງສະຫລຸບຄຳຕອບຂອງທ່ານ: ______

______

______

## ເອເຟໂຊ ບົດທີ 4-6 - ການດຳເນີນຊີວິດໃນແຜນການ ແລະ ເປົ້າຫມາຍອັນຖາວອນຂອງ ພຣະເຈົ້າ

### ການດຳເນີນຊີວິດໃນຄວາມເປັນອັນຫນຶ່ງອັນດຽວກັນ (ບົດທີ4:1-16)

1. ທ່ານຄວນດຳເນີນຊີວິດແບບໃດ(1)? ______

2. ທ່ານຄວນດຳເນີນຊີວິດດ້ວຍຫຍັງ(2)? ______

3. ທ່ານຕ້ອງພຽນພະຍາຍາມຮັກສາສິ່ງໃດ(3)? ______

4. ອີງໃສ່ ຂໍ້ທີ 4-6, ມີ ______ ດຽວ, ______ ອົງດຽວ, ______ ດຽວ, ______ ດຽວ, ______ ດຽວ, ______ ດຽວ ______

5. ເປັນຫຍັງຈຶ່ງຊົງປະທານຂອງປະທານໃຫ້ແກ່ຄຣິສຕະຈັກ(12-14)? ______

______

6. ທ່ານຈະໄດ້ຈະເລີນຂຶ້ນໃນດ້ານໃດ(15)? ______

7. ຮ່າງກາຍທັງສິ້ນທີ່ຕິດຕໍ່ສະຫນິດແລະພົວພັນກັນ ຫລື ຄຣິສຕະຈັກ ຈະຖືກສ້າງແນວໃດ(16)? ______

### ການດຳເນີນຊີວິດໃນຄວາມບໍຣິສຸດ (4:17-32)

8. ຈົ່ງອະທິບາຍກ່ຽວກັບຊີວິດເກົ່າຂອງທ່ານ(17-22). ______

______

9. ຕອນນີ້, ທ່ານຄວນເຮັດແນວໃດ(22-23)? ______

______

______

______

**ດຳເນີນຊີວິດໃນຄວາມຮັກ** **( 5:1-16)**

10. ທ່ານຄວນດຳເນີນຊີວິດຕາມແບບຢ່າງຂອງໃຜ(1)? ____________________

____________________ ທ່ານຈຶ່ງດຳເນີນຊີວິດໃນຫຍັງ(2)?

11. ຈົ່ງອະທິບາຍເຖິງຄວາມຮັກຂອງພຣະຄຣິດທີ່ມີຕໍ່ທ່ານ(2) ____________________

____________________

12. ເມື່ອກ່ອນ ເຮົາຢູ່ໃນຄວາມມືດນັ້ນ ຊີວິດເຮົາເປັນແນວໃດ(3-8)? ____________________

____________________

13. ຈະມີຫຍັງເກີດຂຶ້ນກັບຜູ້ທີ່ດຳເນີນຊີວິດໃນຄວາມມືດ(6)? ____________________

**ດຳເນີນຊີວິດໃນຄວາມສະຫວ່າງ** **(5:7-14)**

14. ເມື່ອກ່ອນພວກເຈົ້າເຄີຍຢູ່ໃນ(8) __________ ແຕ່ເນື່ອງຈາກວ່າພວກເຈົ້າ __________

ດັ່ງນັ້ນ, ທ່ານຄວນດຳເນີນຊີວິດແນວໃດ? ____________________

15. ໃນເມື່ອເຮົາບໍ່ຄວນເຂົ້າໄປມີສ່ວນໃດໆກັບການກະທຳຝ່າຍຄວາມມືດ, ທ່ານຄວນເຮັດແນວໃດ(11)?

____________________

16. ມີຫຍັງເກີດຂຶ້ນ ເມື່ອສິ່ງເຫລົ່ານັ້ນຖືກເປີດເຜີຍອອກສູ່ຄວາມສະຫວ່າງ(13)? __________

**ດຳເນີນຊີວິດດ້ວຍຄວາມລະວັງ** **(5:15-17)**

17. ຢ່າດຳເນີນຊີວິດແບບໃດ(15)? __________ ທ່ານຄວນດຳເນີນຊີວິດແບບໃດ? __________

18. ເພາະທຸກວັນນີ້ເປັນຄາວຊົ່ວຮ້າຍ, ທ່ານຈະຈັດການກັບເວລາຂອງທ່ານແນວໃດ(16)? __________

____________________

**ດຳເນີນຊີວິດໃນຄວາມສາມັກຄີ** **(5:18-6:9)**

19. ທ່ານຄວນເຕັມລົ້ນດ້ວຍຫຍັງ(18)? ____________________

20. ເປັນຫຍັງທ່ານຈຶ່ງຄວນຍອມຟັງເຊິ່ງກັນແລະກັນ(21)? ____________________

21. ຫນ້າທີ່ຂອງເມຍຄືຫຍັງ(22)? ____________________

22. ຫນ້າທີ່ຂອງຜົວຄືຫຍັງ(25)? ____________________

23. ຜົວຄວນຮັກເມຍແບບໃດ(33)? ____________________

ເມຍຄວນມີທັດສະນະຄະຕິແນວໃດຕໍ່ຜົວ? ____________________

24. ຝ່າຍບຸດທັງຫລາຍຄວນປະຕິບັດຕົນແນວໃດຕໍ່ພໍ່ແມ່ຂອງຕົນ( 6:1-4)? __________

____________________

ຝ່າຍບິດາບໍ່ຄວນເຮັດຫຍັງ(4)? ____________________

ແຕ່ບິດາຄວນເຮັດແນວໃດ(4)? ____________________

25. ຫນ້າທີ່ຂອງຄົນຮັບໃຊ້ ຫລື ຄົນງານ ຄືຫຍັງ(5)? ____________________

____________________

26. ຫນ້າທີ່ຂອງນາຍ ຫລື ຫົວຫນ້າຄືຫຍັງ(9)? ______________________

**ດໍາເນີນຊີວິດໃນໄຊຊະນະ (6:10-24)**

27. ທ່ານຈົ່ງມີກໍາລັງເພີ່ມຂຶ້ນໃນຜູ້ໃດ(10)? ______________________

ດ້ວຍກໍາລັງຂອງຜູ້ໃດ? ______________________

28. ເປັນຫຍັງທ່ານຈຶ່ງຕ້ອງສວມຍຸດທະພັນອັນຄົບຊຸດຂອງພຣະເຈົ້າ(11)? ______________________

______________________

29. ດ້ວຍວ່າ, ພວກເຮົາບໍ່ໄດ້ຕໍ່ສູ້ກັບເລືອດແລະເນື້ອຫນັງ, ແຕ່ຕໍ່ສູ້ກັບຫຍັງ(12)? ______________________

______________________

30. ຈົ່ງບອກຊື່ຍຸດທະພັນອັນຄົບຊຸດທັງ 6 ຢ່າງ(13-18) ______________________

______________________

31. ໂດຍຣິດອໍານາດຂອງພຣະວິນຍານ, ທ່ານຄວນເຮັດຫຍັງທຸກເວລາ(18)? ______________________

***<u>ການໄຄ່ຄວນ:</u>*** ອັກຄະສາວົກໂປໂລແນະນໍາຜູ້ທີ່ເຊື່ອໃນການດໍາເນີນຊີວິດໃນຄຣິສຕະຈັກ ເຊິ່ງເປັນແຜນການອັນຖາວອນຂອງພຣະເຈົ້າ ແນວໃດ? ຈົ່ງສະຫລຸບຄໍາຕອບຂອງທ່ານ: ______________________

______________________

______________________

______________________

***<u>ການສົນທະນາ:</u>*** ຈົດຫມາຍທີ່ຂຽນຫາຄຣິສຕະຈັກເອເຟໂຊ ມີສ່ວນສ້າງຄວາມສາມັກຄີ ແລະ ຄວາມເປັນນໍ້າຫນຶ່ງໃຈດຽວກັນໃນແຜນການອັນຖາວອນຂອງພຣະເຈົ້າແນວໃດ? ຈົ່ງສະຫລຸບຄໍາຕອບຂອງທ່ານ: ______

______________________

______________________

ທ່ານຕ້ອງການປ່ຽນແປງຊີວິດຕົນເອງ, ຄອບຄົວ ແລະ ຄຣິສຕະຈັກໃຫ້ພວກເຂົາມີຄວາມຕັ້ງຫມັ້ນຄົງຫລາຍຂຶ້ນໃນເປົ້າຫມາຍແລະ ແຜນການອັນຖາວອນຂອງພຣະເຈົ້າ ແນວໃດ? ______________________

______________________

______________________

***<u>ການນໍາມາປະຕິບັດ:</u>*** ທ່ານຈະປ່ຽນແປງຊີວິດຂອງຕົນເອງ, ຄອບຄົວ ແລະ ຄຣິສຕະຈັກດ້ວຍວິທີໃດ ແລະ ເວລາໃດ? ______________________

______________________

______________________

______________________

**ຍັງມີຈົດຫມາຍອີກ3 ສະບັບໃນບັນດາຈົດຫມາຍຫມວດທີສອງຂອງໂປໂລ ຄື ( ຟີລິບອຍ, ໂກໂລຊາຍ, ແລະ ຟີເລໂມນ). ທ່ານສາມາດເລືອກຮຽນພຣະຄໍານີ້ເຊິ່ງມີຢູ່ໃນປຶ້ມຄູ່ມື 'ແຜນການຂອງພຣະເຈົ້າສໍາລັບສາວົກຂອງພຣະອົງ'**

# VI. ຜູ້ທີ່ເຊື່ອຕັ້ງຫມັ້ນຄົງໃນຄອບຄົວຂອງພຣະເຈົ້າ

## ບົດທີ 10




ພຣະຄຳພີ 1ຕີໂມທຽວ ຄືຈົດຫມາຍສະບັບທຳອິດຂອງໂປໂລ ທີ່ເປັນຫນຶ່ງໃນຈົດຫມາຍຫມວດສຸດທ້າຍຂອງເພິ່ນ, ເພິ່ນໄດ້ຂຽນຈົດຫມາຍນີ້ເພື່ອສ້າງຄຣິສຕະຈັກໃຫ້ມີຄວາມຫມັ້ນຄົງໃນການຈັດລະບຽບຢ່າງຖືກຕ້ອງໃນຄອບຄົວຂອງພຣະເຈົ້າ. ໂປໂລໄດ້ສົ່ງຕໍ່ຄຳສອນໃຫ້ລູກຊາຍຝ່າຍວິນຍານຂອງທ່ານຄື ຕີໂມທຽວ. ຕີໂມທຽວເປັນຜູ້ທີ່ໂປໂລຕ້ອງການໃຫ້ສືບຕໍ່ວຽກຮັບໃຊ້ຫລັງຈາກທີ່ໂປໂລເດີນທາງໄປຈາກທີ່ນັ້ນແລ້ວ. ຄຳສອນຂອງເພິ່ນແມ່ນເນັ້ນໃສ່ເຕືອນເຖິງຄຳສັ່ງສອນທີ່ຜິດ , ຄຳແນະນຳກ່ຽວກັບຄຣິສຕະຈັກ ແລະ ການເປັນຜູ້ຮັບໃຊ້ທີ່ດີຂອງພຣະເຢຊູເຈົ້ານັ້ນຈະຕ້ອງເຮັດແນວໃດ.

**ຫມາຍເຫດ: ການສຶກສາພຣະຄຳ1 ຕີໂມທຽວ ແມ່ນມີຢູ່ໃນປື້ມຄູ່ມືເຫລັ້ມນີ້ , ແຜນການຂອງພຣະເຈົ້າສຳລັບຄຣິສຕະຈັກຂອງພຣະອົງ.**

**<u>ການສຶກສາພຣະຄຳພີ ແລະ ການໄຕ່ຕອນ</u>:** ຈົ່ງອ່ານຄຳຖາມ ແລະ ຂໍ້ພຣະຄຳຕໍ່ໄປນີ້ ແລ້ວຕື່ມຄຳຕອບຂອງທ່ານໃສ່ບ່ອນວ່າງ. ຫລັງຈາກນັ້ນ ໃຫ້ທ່ານໄຕ່ຕອນ ແລະ ສະຫລຸບວ່າ ແຕ່ລະບົດມີຄວາມຫມາຍແນວໃດ. ໃນຕອນທ້າຍຂອງການຮຽນ, ໃຫ້ທ່ານສົນທະນາກັບຜູ້ອື່ນ ແລ້ວນຳເອົາບົດຮຽນທີ່ທ່ານໄດ້ນັ້ນໄປນຳໃຊ້ກັບຊີວິດຂອງທ່ານເອງ.

**1<u>ຕີໂມທຽວ 1:1-20</u> - ຫລັກຄຳສອນ ແລະ ໃຈສຳນຶກຜິດແລະຊອບໃນຄອບຄົວຂອງພຣະເຈົ້າ.**

1. ພາລະກິດຂອງໂປໂລ ມີຈຸດປະສົງເພື່ອຫຍັງ(5)? ______________________________

   ຄວາມຮັກມາຈາກໃສ? ______________________________

2. ກົດຫມາຍແຕ່ງຕັ້ງໄວ້ສຳລັບຜູ້ໃດ(9-11)? ______________________________

   ______________________________

   ______________________________

3. ໂປໂລໄດ້ຮັບຫຍັງ(13)? __________ ສິ່ງໃດຖອກເທໃສ່ໂປໂລຢ່າງລົ້ນເຫລືອ(14)? __________

4. ຄວາມເຊື່ອແລະຄວາມຮັກຂອງໂປໂລມາຈາກໃສ(14)? ______________________________

5. ເປັນຫຍັງໂປໂລຈຶ່ງໄດ້ຮັບຄວາມເມດຕາ(16)? ____________________

____________________

6. ໂປໂລໄດ້ມອບພາລະກິດຫຍັງໃຫ້ແກ່ຕີໂມທຽວ(18-19ກ)? ____________________

____________________

**<u>ການໄຄ່ຄອນ:</u> ດ້ວຍເຫດໃດ ຫລັກຄຳສອນແລະໃຈສຳນຶກຜິດແລະຊອບຈຶ່ງສຳຄັນຫລາຍໃນການຈັດລະບຽບແລະຄວາມເຫມາະສົມໃນຄຣິສຕະຈັກຂອງພຣະເຈົ້າ? ຈົ່ງສະຫລຸບຄຳຕອບຂອງທ່ານ:** ____________________

____________________

____________________

**<u>1 ຕີໂມທຽວ 2:1-15</u> - ຄຳພາວັນນາອະທິຖານ ແລະ ການປະພຶດຂອງຜູ້ຊາຍ ແລະ ແມ່ຍິງໃນ ຄຣິສຕະຈັກຂອງ ພຣະເຈົ້າ**

1. ໂປໂລຮຽກຮ້ອງທ່ານໃຫ້ອະທິຖານເພື່ອຜູ້ໃດ(1-2)? ____________________
   ຍ້ອນຫຍັງ(2-4)? ____________________
2. ຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດນັ້ນ ແມ່ນຜູ້ໃດ(5)? ____________________
3. ໂປໂລປາດຖະຫນາສິ່ງໃດ(8-11)? ____________________
   ແລະ ____________________

**<u>ການໄຄ່ຄອນ:</u> ອັກຄະສາວົກໂປໂລໃຫ້ຄຳແນະນຳແນວໃດກ່ຽວກັບການພາວັນນາອະທິຖານ ແລະ ການປະພຶດຂອງຜູ້ຊາຍແລະແມ່ຍິງໃນຄຣິສຕະຈັກ ເພື່ອຈັດລະບຽບແລະຄວາມເຫມາະສົມໃນຄອບຄົວຂອງພຣະເຈົ້າ. ຈົ່ງສະຫລຸບຄຳຕອບຂອງທ່ານ:** ____________________

____________________

____________________

**<u>1ຕີໂມທຽວ 3:1-16</u> - ຄວາມສຳຄັນຂອງການເປັນຜູ້ນຳໃນຄຣິສຕະຈັກຂອງພຣະເຈົ້າ**

1. ຖ້າຄົນໃດມີຄວາມປາດຖະຫນາຢາກເປັນຜູ້ປົກຄອງຄຣິສຕະຈັກ, ຜູ້ນັ້ນກໍປາດຖະຫນາຫຍັງ(1)? ___
2. ຄຸນສົມບັດຂອງຜູ້ປົກຄອງຄຣິສຕະຈັກມີຫຍັງແນ່(2-7)? ____________________

   ____________________

   ____________________

   ____________________

   ____________________
3. ຄຸນສົມບັດຂອງຜູ້ດູແລຄຣິສຕະຈັກມີຫຍັງແນ່(8-13)? ____________________

   ____________________

   ____________________

   ____________________

4. ຍ້ອນຫຍັງໂປໂລຈຶ່ງຂຽນຈົດຫມາຍນີ້(14-15)? ______________________________

______________________________

**<u>ການໄຄ່ຄອນ</u>: ເປັນຫຍັງການເປັນຜູ້ນໍາຈຶ່ງມີຄວາມສໍາຄັນໃນຄໍາສັ່ງທີ່ເຫມາະສົມໃນຄຣິສຕະຈັກ ຫລື ຄອບຄົວຂອງພຣະເຈົ້າ. ຈົ່ງສະຫລຸບຄໍາຕອບຂອງທ່ານ:** ______________________________

______________________________

______________________________

**1ຕີໂມທຽວ 4:1-16 ການຝຶກຝົນຕົນເອງໃຫ້ດໍາເນີນຊີວິດໃນຄວາມຍໍາເກງພຣະເຈົ້າ**

1. ພຣະວິນຍານໄດ້ກ່າວໄວ້ຢ່າງຈະແຈ້ງວ່າ ໃນຍຸກສຸດທ້າຍຈະມີຫຍັງເກີດຂຶ້ນ(1-3)? ______________________________

   ______________________________

   ______________________________

2. ເຮົາຄວນຮັບເອົາທຸກສິ່ງທີ່ເປັນຂອງດີຈາກພຣະເຈົ້າແນວໃດ(4)? ______________________________
3. ເປັນຫຍັງທ່ານຕ້ອງຝຶກຝົນຕົນເອງໃຫ້ດໍາເນີນຊີວິດໃນຄວາມຍໍາເກງພຣະເຈົ້າ (7-8)? ______________________________

   ______________________________

4. ເຫດທີ່ພວກເຮົາເຮັດວຽກຢ່າງຫນັກຫນ່ວງ ແລະອົດສາສູ້ ນັ້ນເພາະວ່າຫຍັງ(10)? ______________________________

   ______________________________

5. ທ່ານຄວນເປັນແບບຢ່າງແກ່ຜູ້ທີ່ເຊື່ອຄົນອື່ນແນວໃດ(12-16)? ______________________________

   ______________________________

   ______________________________

6. ຈົ່ງລະວັງຕົວຂອງທ່ານແນວໃດ(16)? ______________________________

**<u>ການໄຄ່ຄອນ</u>: ຜູ້ທີ່ເຊື່ອຄວນຝຶກຝົນຕົນເອງໃຫ້ດໍາເນີນຊີວິດໃນຄວາມຍໍາເກງພຣະເຈົ້າແນວໃດ , ການຍໍາເກງ ພຣະເຈົ້າເປັນແບບໃດເພື່ອໃຫ້ເປັນລະບຽບແລະເຫມາະສົມໃນຄົວເຮືອນຂອງພຣະເຈົ້າ. ຈົ່ງສະຫລຸບຄໍາຕອບຂອງທ່ານ.** ______________________________

______________________________

______________________________

**<u>1ຕີໂມທຽວ 5:1-25</u> - ຫນ້າທີ່ຂອງຜູ້ຊາຍ, ແມ່ຍິງ, ແມ່ຫມ້າຍ ແລະ ຜູ້ອາວຸໂສໃນຄອບຄົວຂອງພຣະເຈົ້າ**

1. (1-3) ທ່ານຄວນປະຕິບັດຕໍ່ຊາຍອາວຸໂສເຫມືອນເປັນ __________, ຕໍ່ພວກຊາຍຫນຸ່ມຢ່າງ ________, ຕໍ່ພວກຍິງອາວຸໂສເຫມືອນຢ່າງ ____________, ແລະ ____________ ຕໍ່ແມ່ຫມ້າຍ.
2. ຖ້າມີການກ່າວຫາໃສ່ຜູ້ນໍາຄົນໃດຫນຶ່ງ,ທ່ານຈະເຮັດແນວໃດ(19)? ______________________________

   ______________________________

   ______________________________

3. ທ່ານສາມາດປົກບັງຄວາມບາບໄດ້ບໍ່(24)? ________ ສິ່ງໃດຈະປາກົດມາຕາມພາຍຫລັງ? __________

4. ການດີຂອງທ່ານນັ້ນ ສາມາດປົກບັງໄວ້ໄດ້ບໍ່(25)? ____________________

**<u>ການໄຕ່ຕອນ:</u> ອັກຕະສາວົກໂປໂລໄດ້ໃຫ້ຄຳແນະນຳແນວໃດແກ່ຊາຍໜຸ່ມ, ຍິງ, ແມ່ໝ້າຍ, ແລະຜູ້ອາວຸໂສ ເພື່ອຈັດລະບຽບແລະເໝາະສົມໃນຄົວເຮືອນຂອງພຣະເຈົ້າ.ຈົ່ງສະຫລຸບຄຳຕອບຂອງທ່ານ:**

**ຊາຍອາວຸໂສ:** ____________________

**ຍິງອາວຸໂສ:** ____________________

**ແມ່ໝ້າຍ:** ____________________

____________________

**ຜູ້ອາວຸໂສ:** ____________________

**ຕີໂມທຽວ 6:1-21 - ການເຕືອນສະຕິ ໃນການຈັດລະບຽບແລະຄວາມເໝາະສົມໃນຄອບຄົວຂອງພຣະເຈົ້າ**

1. (3)ຄຳສັ່ງສອນຂອງທ່ານຕ້ອງເຫັນພ້ອມກັບ ____________________ ແລະຖືກຕ້ອງເປັນທຳກັບ ____________________
2. ສິ່ງມະຫາສານທີ່ທ່ານຈະໄດ້ຮັບຄືຫຍັງ(6)? ______________ ກັບ ______________
3. ຍ້ອນຫຍັງຈຶ່ງຕ້ອງເພິ່ງພໍໃຈ(7)? ____________________
4. ທ່ານຄວນພໍໃຈກັບຫຍັງ(8) ____________________
5. ແມ່ນຫຍັງເກີດຂຶ້ນກັບຄົນທີ່ຢາກລ້ຳລວຍ(9)? ____________________
6. ການຮັກເງິນຄຳເປັນເຄົ້າມູນຂອງຫຍັງ(10)? ______________ ການຮັກເງິນຄຳຊັກຈູງໃຫ້ຄົນເປັນແນວໃດ? ____________________
7. ຄົນຂອງພຣະເຈົ້າຕ້ອງຫລີກເວັ້ນສິ່ງໃດ(11)? ______________ ຄົນຂອງພຣະເຈົ້າຄວນຈົດຈໍ່ຢູ່ທີ່ສິ່ງໃດ(11)? ____________________
8. ທ່ານຄວນຕໍ່ສູ້ແບບໃດ(12)? ____________________ ທ່ານຄວນຍຶດເອົາສິ່ງໃດ? ____________________
9. ເມື່ອພຣະເຢຊູເຈົ້າມາປາກົດ, ພຣະອົງຖືກເອີ້ນວ່າແນວໃດ(15)? ____________________
10. ພຣະອົງມີຫຍັງ(16)? ______________ ພຣະອົງຊົງສະຖິດຢູ່ໃສ? ______________ ຈົ່ງມີແກ່ພຣະອົງນັ້ນ. ອາແມນ ____________________
11. ໂປໂລມີຄຳສັ່ງເນັ້ນຄົນຮັ່ງມີແນວໃດ(17-19)? ____________________

**<u>ການໄຕ່ຄອນ:</u> ການເຕືອນສະຕິສຸດທ້າຍຂອງອັກຄະສາວົກໂປໂລໃນການຈັດລະບຽບແລະຄວາມເຫມາະສົມໃນຄອບຄົວຂອງພຣະເຈົ້າມີແນວໃດ? ຈົ່ງສະຫລຸບຄຳຕອບຂອງທ່ານ:** ________________________________

**<u>ການສົນທະນາ</u>**: ອັກຄະສາວົກໂປໂລຂຽນພຣະຄຳ1ຕີໂມທຽວ ເພື່ອທ່ານຈະໄດ້ຮູ້ວ່າແຕ່ລະຄົນຄວນປະພຶດຕົນແນວໃດໃນຄຣິສຕະຈັກຂອງພຣະເຈົ້າ, ໃນວິຫານຂອງພຣະເຈົ້າຜູ້ຊົງພຣະຊົນຢູ່. ທ່ານໄດ້ບົດຮຽນຫຍັງຈາກພຣະຄຳນີ້ ເພື່ອຊ່ວຍທ່ານໃນການດຳເນີນຊີວິດສ່ວນຕົວ, ການຢູ່ຮ່ວມກັບຄອບຄົວ ແລະ ຄຣິສຕະຈັກ? ________________________________

ທ່ານຕ້ອງການປ່ຽນແປງຊີວິດຂອງຕົນເອງ, ຄອບຄົວ ແລະ ຄຣິສຕະຈັກແນວໃດໃນເພື່ອຈັດລະບຽບແລະຄວາມເຫມາະສົມໃນຄອບຄົວຂອງພຣະເຈົ້າ? ________________________________

**<u>ການນຳມາປະຕິບັດ:</u>** ທ່ານຈະປ່ຽນແປງຊີວິດຕົນເອງ, ຄອບຄົວ ແລະ ຄຣິສຕະຈັກດ້ວຍວິທີໃດ ແລະ ເວລາໃດ?

ໃນຈົດຫມາຍຫມວດສຸດທ້າຍຂອງອາຈານໂປໂລນັ້ນ ຍັງມີຈົດຫມາຍອີກ2 ສະບັບຄື: ຕີໂຕ ແລະ 2 ຕີໂມທຽວ. ທ່ານສາມາດຮຽນບົດຮຽນກ່ຽວກັບການສຶກສາພຣະຄຳທັງສອງເຫລັ້ມໃນປຶ້ມຄູ່ມືເຫລັ້ມນີ້ ຄື "ແຜນການຂອງພຣະເຈົ້າສຳລັບຄຣິສຕະຈັກຂອງພຣະອົງ"

# VII. ສາວົກຕັ້ງຫມັ້ນຄົງຢູ່ໃນພຣະຄຣິດ ແລະ ດຳເນີນຊີວິດກັບພຣະຄຣິດ

## ບົດທີ 11

## ຊີວິດໃນພຣະຄຣິດ







ສຳລັບຊີວິດຄຣິສຕຽນນັ້ນ ບໍ່ມີສິ່ງໃດສຳຄັນ ແລະເປັນຮາກຖານອັນຫມັ້ນຄົງຫລາຍກວ່າການທີ່ເຂົາໄດ້ຮູ້ຈັກຄວາມບໍລິບູນໃນພຣະຄຣິດ. ຄວາມບໍລິບູນໃນພຣະຄຣິດນັ້ນບໍ່ໄດ້ເພີ່ມຂຶ້ນ ແຕ່ ມີຄວາມສົມບູນ ແລະສຳເລັດຜົນໃນທັນທີທີ່ພວກເຂົາໄດ້ຮັບຄວາມລອດພົ້ນ. ຄວາມບໍລິບູນນັ້ນ ບໍ່ໄດ້ມາຍ້ອນຄວາມດີທີ່ມະນຸດສ້າງຂຶ້ນ ແຕ່ດ້ວຍການສະຫລະພຣະບຸດຂອງພຣະອົງເຈົ້າ. ຜູ້ທີ່ເຊື່ອຈະຮູ້ຄວາມບໍລິບູນນັ້ນຜ່ານພະລັດສະຫມີຂອງພຣະອົງ ແລະ ຜ່ານປະສົບການຈາກຄວາມອ່ອນແອແລະຄວາມເຈັບປວດ.

**<u>ການສຶກສາພຣະຄຳພີ ແລະ ການໄຕ່ຕອງ</u>**: ຈົ່ງອ່ານຄຳຖາມ ແລະ ຂໍ້ພຣະຄຳຕໍ່ໄປນີ້ ແລ້ວຂຽນຄຳຕອບໃສ່ບ່ອນວ່າງ:

1. ໃນພຣະຄຳເອເຟໂຊ 3:8, ໂປໂລກ່າວແນວໃດເຖິງຄວາມບໍຣິບູນຂອງທ່ານໃນພຣະຄຣິດ? _________
2. ໃນພຣະຄຳ 2ໂກຣິນໂທ 6:10, ເຖິງເຮົາເສົ້າໂສກ, ແຕ່ ______________ ______________, ເປັນຄົນຍາກຈົນ, ແຕ່ _________ _________ __________ ,ເປັນຄົນບໍ່ມີຫຍັງ, ແຕ່ ____________ _____________
3. ໃນພຣະຄຳ ໂກໂລຊາຍ 1:27, ອັນໃດຄືຄວາມສົມບູນແລະຄວາມຫວັງວ່າຈະໄດ້ເຖິງສະງ່າຣາສີນັ້ນ? "__________________ ໃນເຈົ້າທັງຫລາຍ".
4. ໂປໂລຕ້ອງການໃຫ້ພວກເຂົາໃນເມືອງລາວດີເກອາສົມບູນໃນສິ່ງໃດ? ໂກໂລຊາຍ 2:2? ___________

5. ອີງໃສ່ພຣະຄຳໂກໂລຊາຍ 2:3, ສິ່ງໃດຖືກບັງຊ້ອນໄວ້ໃນພຣະອົງ? ______________________________

6. ໃນພຣະຄຳ ຄາລາເຕຍ 2:16, ຄົນໃດຫນຶ່ງຈະກາຍເປັນຜູ້ຊອບທຳໃນພຣະຄຣິດໄດ້ແນວໃດ? ________ ມີຄົນໃດສາມາດກາຍເປັນຄົນຊອບທຳໂດຍການກະທຳ ຫລື ໂດຍກົດບັນຍັດຫລືບໍ່? ____________ ການເປັນຄົນຊອບທຳໃນພຣະຄຣິດນັ້ນ ມີຄວາມຫມາຍຕໍ່ທ່ານແນວໃດ? ___________________

7. ອີງໃສ່ພຣະຄຳ ຄາລາເຕຍ 2:19-20, ທ່ານໄດ້ຕາຍຈາກຫຍັງ? ____________ ດ້ວຍເຫດໃດທ່ານຈຶ່ງໄດ້ຕາຍຈາກກົດບັນຍັດແລ້ວ? ___________________ ຜູ້ໃດຊົງມີຊີວິດຢູ່ໃນທ່ານ? ________________
8. ອີງໃສ່ພຣະຄຳຄາລາເຕຍ 3:14, ທ່ານໄດ້ຮັບພຣະພອນອັນໃດຈາກພຣະອົງ? ___________________
9. ອີງໃສ່ພຣະຄຳ ຄາລາເຕຍ 3:26, ເຈົ້າທັງຫລາຍກໍ ________ ຂອງ ___________ ໂດຍທາງຄວາມເຊື່ອ.
10. ໃນພຣະຄຳ1 ໂກຣິນໂທ 1:2, ຄຣິສຕະຈັກຂອງພຣະເຈົ້າເປັນ ______________________ ໃນພຣະອົງ.
11. ໃນພຣະຄຳ 1ໂກຣິນໂທ 1:30, ເພາະວ່າພວກເຮົາຢູ່ໃນພຣະຄຣິດ, ພຣະອົງຊົງເປັນຜູ້ໃດສຳລັບເຮົາ? __

12. ອີງໃສ່ພຣະຄຳ 1ໂກຣິນໂທ 15:22, ທ່ານໄດ້ຕາຍເພາະກ່ຽວເນື່ອງກັບອາດາມ ແຕ່ _________ ໃນ ພຣະຄຣິດ.
13. ອີງໃສ່ພຣະຄຳ 2ໂກຣິນໂທ 2:14, ພຣະເຈົ້າຊົງໂຜດນຳຜູ້ທີ່ຢູ່ໃນພຣະຄຣິດທຸກເວລາແນວໃດ? _______

14. ອີງໃສ່ພຣະຄຳ ໂຣມ 3:24, ຜູ້ທີ່ເຊື່ອຈຶ່ງເປັນຄົນຊອບທຳດ້ວຍພຣະຄຸນອັນບໍ່ຄິດຄ່າຂອງພຣະເຈົ້າໂດຍທາງຂອງ ___________ ໃນພຣະເຢຊູຄຣິດ. ການໄຖ່ໃຫ້ພົ້ນຫມາຍຄວາມວ່າແນວໃດ (ເອເຟໂຊ 1:7)?

15. ໂຣມ 5:17 ຊົງກ່າວວ່າ ຄວາມຕາຍໄດ້ຄອບງຳເພາະອາດາມ, ແຕ່ໂດຍພຣະຄຣິດ ຫລາຍກວ່ານັ້ນອີກຄົນຈຳນວນຫລາຍໄດ້ຮັບ ____________ ອັນບໍລິບູນ ແລະ ຮັບຂອງປະທານຄື ________________ ກໍຈະດຳລົງຊີວິດແລະຄອບຄອງໂດຍພຣະເຢຊູຄຣິດເຈົ້າ.
16. ໃນພຣະຄຳໂຣມ 6:3, ພວກທ່ານໄດ້ຮັບບັບຕິສະມາຮ່ວມເຂົ້າໃນຜູ້ໃດ? _________________________
17. ໃນພຣະຄຳໂຣມ 6:4, ພວກເຮົາຈຶ່ງໄດ້ __________ ກັບພຣະອົງດ້ວຍການຮັບບັບຕິສະມາແລ້ວເພື່ອໃຫ້ເຮົາເຂົ້າໃນຄວາມຕາຍຂອງພຣະອົງ. ຍ້ອນຫຍັງ? _____________________________________

18. ອີງໃສ່ພຣະຄຳ ໂຣມ 6:5 , ພວກເຮົາໄດ້ເຂົ້າເປັນອັນຫນຶ່ງອັນດຽວກັບພຣະອົງແລ້ວ ໃນຄວາມຕາຍແລະໃນ ________________________________________________________________
19. ອີງໃສ່ພຣະຄຳໂຣມ 6:11, ຜູ້ທີ່ເຊື່ອໄດ້ຕາຍຕໍ່ຄວາມບາບແລ້ວ ແຕ່ມີຊີວິດຢູ່ເພື່ອ _______________

ໃນພຣະເຢຊູຄຣິດເຈົ້າ.

20. ອີງໃສ່ພຣະຄຳໂຣມ 6:23 ຊີວິດແບບໃດທີ່ພວກເຮົາໄດ້ຮັບ ໃນພຣະເຢຊູຄຣິດເຈົ້າ? ______________
21. ອີງໃສ່ພຣະຄຳໂຣມ 8:1, ຄົນທັງຫລາຍທີ່ຢູ່ໃນພຣະຄຣິດເຈົ້ານັ້ນ, ຈະບໍ່ມີ ______________________
22. ອີງໃສ່ພຣະຄຳໂຣມ 8:37-39, ພວກເຮົາທີ່ເຊື່ອໃນພຣະເຢຊູຄຣິດກໍມີ __________________________ ບໍ່ມີສິ່ງໃດ _________________ ຈາກຄວາມຮັກຂອງພຣະອົງໄດ້.
23. ທ່ານອະເປເລໄດ້ຮັບຄວາມພໍໃຈຈາກຜູ້ໃດ ອີງໃສ່ພຣະຄຳ ໂຣມ16:10? _______________________
24. ໃນຈົດຫມາຍຂອງໂປໂລທີ່ຂຽນເຖິງຄຣິສຕະຈັກໃນເມືອງເອເຟໂຊ, ທ່ານໄດ້ຂຽນກ່ຽວກັບຄວາມສົມບູນທີ່ເຮົາມີໃນພຣະເຢຊູຄຣິດ. ຈົ່ງເບິ່ງດູ ວ່າທ່ານສາມາດເຫັນຄວາມບໍລິບູນທີ່ຂຽນໄວ້ໃນຂໍ້ພຣະຄຳນີ້ຫລືບໍ່. ບົດທີ 1:3 ______________, 1:4, _______________, 1:5 _______________ ແລະ _______________,

    1:7 _____________ ແລະ ______________, 1:11 ______________, 1:13 ______________ , 1:19 _______________,

    2:5 _______________, 2:6 ______________ ແລະ ______________, 2:7 ______________, 2:10 _______________,

    2:13 _________________________, 2:14 _____________________________, 2:16 _____________________________,

    2:18 _________________________, 2:19 __________________________ ແລະ _____________________________,

    2:22 ___________________________________________, 3:6 ____________________________________________ ,

    3:19 __________________________________________ , 5:2 ________________________________________________
25. ອີງໃສ່ພຣະຄຳໂກໂລຊາຍ 2:9-10, ການທີ່ພຣະຄຣິດຊົງມີຊີວິດຢູ່ໃນທ່ານນັ້ນ ຫມາຍຄວາມວ່າແນວໃດ? ______________________________________________________________________________
26. ອີງໃສ່ພຣະຄຳ2ເທສະໂລນິກ 2:16, ອົງພຣະເຢຊູຄຣິດເຈົ້າ ແລະ ພຣະເຈົ້າຜູ້ຊົງເປັນພຣະບິດາເຈົ້າຊົງປະທານຫຍັງໃຫ້ແກ່ເຮົາ? _______________________ ແລະ ______________________________
27. ອີງໃສ່ພຣະຄຳ2ຕີໂມທຽວ2:1, ລູກຂອງເຮົາເອີຍ ຈົ່ງ _________ ທີ່ພວກເຮົາມີໃນພຣະຄຣິດເຈົ້າເຢຊູ.
28. ໄພ່ພົນທີ່ພຣະເຈົ້າໄດ້ຊົງເລືອກໄວ້ໃນພຣະເຢຊູຄຣິດນັ້ນ ຈະໄດ້ຮັບຫຍັງ ອີງໃສ່ພຣະຄຳ2ຕີໂມທຽວ2:10? ____________________________________________________________________
29. ໃນພຣະຄຳເຮັບເຣີ 10:14, ການຖວາຍບູຊາຄັ້ງດຽວຂອງພຣະອົງໄດ້ຊົງເຮັດຫຍັງແກ່ທ່ານ? ________
30. ໃນພຣະຄຳຟີລິບປອຍ 4:19, ພຣະເຈົ້າຊົງສັນຍາຫຍັງກັບພວກເຮົາທີ່ຢູ່ໃນພຣະເຢຊູຄຣິດ? _________ ____________________ ຈາກຫຍັງ? ________________________________________________

**ການສົນທະນາ:** ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ໃຫ້ຂຽນລົງ ______________________________________________

______________________________________________________________________________

ເພາະວ່າພຣະຄຣິດຊົງມີຊີວິດຢູ່ໃນທ່ານ, ທ່ານຕ້ອງການປ່ຽນແປງຊີວິດຂອງທ່ານດ້ານໃດແນ່? _________

______________________________________________________________________________

**ການນຳມາປະຕິບັດ**: ທ່ານຈະປ່ຽນແປງຊີວິດຂອງຕົນເອງດ້ວຍວິທີໃດ ແລະ ເວລາໃດ? ______________

______________________________________________________________________

______________________________________________________________________

# ບົດທີ 12
# ດຳເນີນຊີວິດກັບພຣະຄຣິດ



ການເຂົ້າ ເຝົ້າພຣະເຈົ້າ ຜູ້ຊົງພຣະຊົນຢູ່ ຄືຫນຶ່ງໃນສິດທິພິເສດທີ່ສຸດທີ່ຜູ້ທີ່ເຊື່ອໄດ້ຮັບ. ການໃຊ້ເວລາສ່ວນຕົວທຸກໆວັນເຂົ້າເຝົ້າພຣະເຈົ້າແມ່ນສິ່ງທີ່ຈຳເປັນແລະສຳຄັນສຳລັບຊີວິດຝ່າຍຈິດວິນຍານແລະ ການດຳເນີນຊີວິດກັບພຣະອົງ. ເມື່ອທ່ານໃຊ້ເວລາເຝົ້າດ່ຽວກັບພຣະເຈົ້າ ນັ້ນຄືການສ້າງຄວາມສຳພັນທີ່ດີ ແລະພິເສດລະຫວ່າງທ່ານກັບພຣະອົງ. ນີ້ເປັນສິ່ງສຳຄັນແລະຈຳເປັນເຊິ່ງຫມົດທຸກຄົນສາມາດເຮັດໄດ້ ເພື່ອເສີມສ້າງເຮົາໃຫ້ມີ ເວລາກັບພຣະຄຣິດໃນການດຳລົງຊີວິດໃນໂລກນີ້ ແລະ ໃນການພາວັນນາອະທິຖານ.

**ການສຶກສາພຣະຄຳ ແລະ ການໄຕ່ຕອງ**: ຈົ່ງອ່ານຄຳຖາມ ແລະ ຂໍ້ພຣະຄຳຕໍ່ໄປນີ້ ແລ້ວຂຽນຄຳຕອບໃສ່ບ່ອນວ່າງ:

1. ອີງໃສ່ພຣະຄຳ ປະຖົມມະການ 3:8-9, ຫລັງຈາກທີ່ອາດາມແລະເອວາບໍ່ເຊື່ອຟັງພຣະເຈົ້າແລ້ວ ພວກເຂົາເຮັດຫຍັງ? ______________ ພຣະເຈົ້າຊົງເຮັດຫຍັງ? ______________ ຖ້າພຣະເຈົ້າຊົງຮູ້ທຸກສິ່ງ, ເປັນຫຍັງພຣະອົງຈິ່ງຊົງຖາມອາດາມແລະເອວາວ່າ "ເຈົ້າຢູ່ໃສ?" ______________
2. ອີງໃສ່ພຣະຄຳເຮັບເຣີ 11:5, ເອນົກເປັນທີ່ພໍພຣະໄທພຣະເຈົ້າ. ທ່ານຄິດວ່າເອນົກພໍພຣະໄທພຣະເຈົ້າແນວໃດ ອີງໃສ່ພຣະຄຳ ປະຖົມມະການ 5:24? ______________
3. ອີງໃສ່ພຣະຄຳ 2ໂກຣິນໂທ 5:7, ພວກເຮົາດຳເນີນຊີວິດຕາມ ____________ ບໍ່ແມ່ນ ______________
4. ອີງໃສ່ພຣະຄຳ ຄາລາເຕຍ5:16, ເຮົາດຳເນີນຊີວິດພາຍໃຕ້ການຊົງນຳຂອງໃຜ? ______________
5. ອີງໃສ່ພຣະຄຳໂກໂລຊາຍ2:6, ພວກເຮົາຄວນດຳເນີນຊີວິດຢູ່ໃນຜູ້ໃດ? ______________
6. ອີງໃສ່ພຣະຄຳ ໂຣມ 6:4, ຊີວິດແບບໃດທີ່ເຮົາຄວນດຳເນີນຕາມ? ______________
7. ອີງໃສ່ພຣະຄຳເອເຟໂຊ 5:2, ເຮົາຄວນດຳເນີນຊີວິດແບບໃດ? ______________

8. ເຫມືອນກັບພວກເຮົາທຸກຄົນ, ຢາໂຄບມີທັງຄວາມສຳເລັດ ແລະ ຄວາມລົ້ມເຫລວໃນຊີວິດ. ດັ່ງພຣະທຳປະຖົມມະການ 48:15, ລາວສາມາດເບິ່ງຄືນຫລັງ ແລະເວົ້າວ່າ, "ພຣະເຈົ້າອົງທີ່ ____________ ທຸກມື້ແລະທຸກເວລາ ".

9. ອີງໃສ່ພຣະຄຳໂຢຊວຍ 1:8, ທ່ານຄວນພາວັນນາເລື້ອຍປານໃດເພື່ອໃຫ້ແນ່ໃນວ່າທ່ານເຊື່ອຟັງແລະເຮັດຕາມພຣະຄຳຂອງພຣະເຈົ້າ? _______ ແລະ ________ ຍ້ອນຫຍັງ ____________________

10. ອີງໃສ່ພຣະຄຳ 1 ຂ່າວຄາວ 23:30, ພວກເຮົາຈະຕ້ອງເຮັດຫຍັງ ໃນທຸກໆເຊົ້າແລະທຸກໆແລງ? _________ ແລະ __________ ອົງພຣະຜູ້ເປັນເຈົ້າ.

11. ພຣະອົງໄດ້ຍິນສຽງຄຳພາວັນນາອະທິຖານຂອງດາວິດຕອນໃດ ອີງໃສ່ພຣະຄຳ ເພງສັນລະເສີນ 5:3?

________________________________________________________________

12. ດາວິດມີປະສົບການໃນການຢູ່ຊ້ອງກັບພຣະເຈົ້າແນວໃດ ອີງໃສ່ພຣະຄຳ ເພງສັນລະເສີນ 16:11? _______

13. ອີງໃສ່ພຣະຄຳເຢເຣມີຢາ 15:16, ເມື່ອເຢເຣມີຢາໄດ້ຍິນຖ້ອຍຄຳຂອງພຣະອົງ, ລາວໄດ້ເຮັດຫຍັງ? _______ ຄຳວ່າ "ຂ້ານ້ອຍກໍໄດ້ເຊື່ອຟັງ" ຫມາຍຄວາມວ່າແນວໃດ? ______________________________ ຖ້ອຍຄຳຂອງພຣະອົງເຮັດໃຫ້ຈິດໃຈຂອງເຢເຣມີຢາເປັນແນວໃດ? ______________________ ແລະ

________________________________________________________________

14. ຜູ້ທີ່ເຊື່ອສາມາດລ້ຽງຊີວິດດ້ວຍອາຫານສິ່ງດຽວໄດ້ຫລືບໍ່? ອີງຕາມພຣະຄຳ ມັດທາຍ 4:4 ____________

15. ອີງໃສ່ພຣະຄຳ ມັດທາຍ 6:6, ຜູ້ທີ່ເຊື່ອຄວນພາວັນນາອະທິຖານຢູ່ໃສ? ________________________

16. ທ່ານຄວນປ້ອນອາຫານຝ່າຍວິນຍານເລື້ອຍປານໃດ ອີງໃສ່ພຣະຄຳ ມັດທາຍ 6:11? _______________

17. ບັນດາຜູ້ທີ່ເຊື່ອຄວນສະແຫວງຫາສິ່ງໃດກ່ອນໃນຊີວິດ ອີງໃສ່ພຣະຄຳ ມັດທາຍ6:33? ____________ ແລະ ____________ ພຣະອົງຈະຊົງເພີ່ມເຕີມສິ່ງໃດແກ່ທ່ານ? ______________________

18. ອີງໃສ່ພຣະຄຳມາຣະໂກ 1:35, ພຣະເຢຊູໃຊ້ເວລາກັບພຣະບິດາເວລາໃດ? ______________________ ພຣະອົງໃຊ້ເວລາກັບພຣະບິດາຢູ່ໃສ? _____________ ພຣະອົງຊົງເຮັດຫຍັງ? __________________

19. ຄຣິສຕະຈັກໃນຍຸກກ່ອນໄດ້ຮ່ວມກັນໃນການ __________________ ອີງໃສ່ພຣະຄຳ ກິຈະການ 1:14.

20. ໃນພຣະຄຳເອເຟໂຊ 1:16, ໂປໂລບໍ່ລືມເຮັດສິ່ງໃດສະເຫມີເພື່ອພວກເຂົາ? ______________________

21. ໃນພຣະຄຳເອເຟໂຊ 3:19, ໂປໂລອະທິຖານເພື່ອໃຫ້ເຂົາເຕັມລົ້ນດ້ວຍສິ່ງໃດ? ____________________

22. ໃນພຣະຄຳເອເຟໂຊ 6:18, ໂປໂລອະທິຖານເວລາໃດ? _____ ໂປໂລພາວັນນາອະທິຖານໂດຍຜູ້ໃດ? ______

23. ໂປໂລພາວັນນາອະທິຖານດ້ວຍຫຍັງ? ໃນພຣະຄຳ ຟີລິບປອຍ 1:4? ________ ເພາະຫຍັງ?(5) ________

________________________________________________________________

24. ໃນພຣະຄຳ ໂກໂລຊາຍ 4:2-3, ພວກເຮົາຄວນອຸທິດຕົວໃນການ _________ ຈົ່ງເຝົ້າລະວັງຢູ່ໂດຍການ___ ____________ .ເປັນຫຍັງໂປໂລຈຶ່ງເຕືອນສະຕິໃນການພາວັນນາອະທິຖານ(3)? ________________

25. ໃນພຣະຄຳ 1ເທຊະໂລນິກ 5:17 ແລະ ໂຣມ 1:9-10, ພາວັນນາອະທິຖານສະເຫມີຢູ່ບໍ່ຂາດ ຫມາຍຄວາມວ່າແນວໃດ? ____________________________________________________________

26. ອີງໃສ່ພຣະຄໍາ ມາຣາໂກ 3:14, ເປັນຫຍັງພຣະເຍຊູຈຶ່ງເລືອກເອົາສາວົກ12ຄົນ? "ເຮົາໄດ້ເລືອກພວກເຈົ້າໄວ້ __________________ ພຣະອົງແລະເຮົາຈະໃຊ້ພວກເຂົາ _________ __________________ ປະກາດ.

27. ອີງໃສ່ພຣະຄໍາລູກາ 10:41, ມາທາກັງວົນແລະມົວວຸ້ນວາຍຢູ່ກັບຫລາຍສິ່ງ. ສິ່ງໃດຄື "ສິ່ງຊຶ່ງຈໍາເປັນ" ທີ່ມາທາປະຕິເສດ(39)? ____________________ (42) ມາຣີໄດ້ເລືອກເອົາ ________________ ແລະຜູ້ໃດ ______________ ສິ່ງນີ້ໄປຈາກນາງບໍ່ໄດ້.

28. ທ່ານຮູ້ໄດ້ແນວໃດວ່າພຣະເຍຊູປາດຖະຫນາຄວາມສໍາພັນອັນດີກັບທ່ານ ອີງໃສ່ພຣະຄໍາ ລູກາ 15:4? ___ ________________________________ (15:8) _________________________________ ແລະ 15:20-32

______________________________________________________________________

29. ໃນພຣະຄໍາໂຢຮັນ 6:35 ພຣະເຍຊູຊົງຕອບພວກເຂົາວ່າ: "ເຮົາເປັນ ____________ ແຫ່ງຊີວິດ. ຜູ້ທີ່ມາຫາເຮົາຈະບໍ່ ________________ ແລະຜູ້ທີ່ເຊື່ອໃນເຮົາກໍຈະບໍ່ ________ ________________________."

30. ໃນພຣະຄໍາໂຢຮັນ 15:4-10 ໄດ້ບັນທຶກຄໍາວ່າ "ເຂົ້າສະຫນິດ", ຫລື "ຢູ່ໃນ", ຕັ້ງຢູ່ ຈັກຄໍາ? ________________ ທ່ານຄິດວ່າການເຂົ້າສະຫນິດໃນພຣະອົງຫມາຍຄວາມວ່າແນວໃດ, ຜູ້ໃດຄືເຄືອອາງຸ່ນອັນແທ້ຈິງ? _____

______________________________________________________________________

31. ອີງໃສ່ພຣະຄໍາ ໂຢຮັນ 21:15-17, ມີຈັກຄັ້ງທີ່ພຣະເຍຊູຖາມເປໂຕວ່າເປໂຕຮັກພຣະອົງຫລືບໍ່? __________ ຖ້າຫາກທ່ານຈະລ້ຽງແກະຫນຸ່ມຂອງພຣະອົງ, ເປັນຫຍັງທ່ານຈຶ່ງຄິດວ່າ ການຮັກພຣະເຍຊູເປັນສິ່ງສໍາຄັນ? ______________________________________________________________

32. ໃນພຣະຄໍາກິຈະການ 4:13, ພວກເຂົາຮູ້ສຶກແນວໃດກ່ຽວກັບເປໂຕ ແລະ ໂຢຮັນ? __________________

33. ໃນພຣະຄໍາກິຈະການ 20:28, ແມ່ນໃຜທີ່ພວກທ່ານທັງຫລາຍຕ້ອງເຝົ້າຮັກສາ? ___________________

34. ອີງໃສ່ພຣະຄໍາ 2 ໂກຣິນໂທ 4:16, ເຖິງແມ່ນວ່າກາຍພາຍນອກຂອງພວກເຮົາກໍາລັງຊຸດໂຊມລົງກໍຕາມ, ຍ້ອນຫຍັງພວກເຮົາຈຶ່ງບໍ່ທໍ້ຖອຍໃຈ? __________________ ໃຈພາຍໃນພວກເຮົານັ້ນກໍຈະເລີນຂຶ້ນໃຫມ່ເມື່ອໃດ? ____________________________________________________________

35. ອີງໃສ່ພຣະຄໍາ 1ຕີໂມທຽວ 4:16, ຜູ້ໃດ ແລະ ສິ່ງໃດ ທີ່ທ່ານຕ້ອງລະວັງ? _________ ແລະ _________ ເພາະຖ້າເຈົ້າປະຕິບັດຢ່າງນັ້ນ, ເຈົ້າກໍຈະຊ່ວຍຜູ້ໃດ? ____________ ແລະ ______________________

36. ອີງໃສ່ພຣະຄໍາເຮັບເຣີ 5:11-14, ຈົ່ງອະທິບາຍກ່ຽວກັບບາງຄົນທີ່ຕ້ອງການນໍ້ານົມ ບໍ່ແມ່ນອາຫານແຂງ? _ ອາຫານແຂງ ເປັນອາຫານສໍາລັບຜູ້ໃດ? ___________________________________________ ດ້ວຍສິ່ງໃດ ທ່ານຈຶ່ງສາມາດສັງເກດໄດ້ວ່າສິ່ງໃດດີແລະສິ່ງໃດຊົ່ວ? ___________________________

37. ອີງໃສ່ພຣະຄໍາ 1ໂຢຮັນ 1:3-4, ທ່ານຮ່ວມສາມັກຄີທໍາກັບໃຜ? ____________ ແລະ _________________ ເປັນຫຍັງໂຢຮັນຈຶ່ງຂຽນກ່ຽວກັບສິ່ງນີ້? ___________________________________________

38. ອີງໃສ່ພຣະຄໍາ ພະນິມິດ 3:20, ແມ່ນໃຜກໍາລັງຢືນເຄາະຢູ່ທີ່ປະຕູຫົວໃຈຂອງທ່ານ? ________________ ຖ້າທ່ານໄຂປະຕູໃຈຕ້ອນຮັບພຣະອົງ, ພຣະອົງຈະເຮັດສິ່ງໃດ? _________________________________

**ການສົນທະນາ**:ແລກປ່ຽນຄວາມຄິດຄວາມເຫັນໃນສິ່ງທີ່ທ່ານໄດ້ຮຽນຮູ້ຮ່ວມກັບສາວົກຄົນອື່ນ ຖ້າມີຫລັກການແນະນຳເພີ່ມຕື່ມ ________________________________________________

